

# ບົດລາຍງານ

## ຂະແໜງ ການແກ້ໄຂ ບັນຫາ ລະເບີດບໍ່ ທັນແຕກທີ່ ຕົກຄ້າງຢູ່ ສປປ ລາວ

# 2021

SDG 18: ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ

**ລາຍງານຂອງຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ 2021**

ປຶ້ມລາຍງານປະຈຳປີສະບັບນີ້ ສ້າງຂຶ້ນໂດຍ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຫຄຊກລ), ບ້ານ ທົ່ງສາງນາງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, P.O. Box 7621.

ເວັບໄຊ: www.nra.gov.la

ໂທ: (+856-21) 262386

ການປະກອບສ່ວນຂອງທ່ານໃຫ້ແກ່ ຄຊກລ ສາມາດຊ່ວຍເຫຼືອຄອບຄົວ ແລະ ເດັກນ້ອຍທີ່ໄດ້ຮັບຄວາມເດືອດຮ້ອນຈາກ ລບຕ ທີ່ເປັນຜົນມາຈາກສົງຄາມອິນດູຈີນຄັ້ງທີ 2. ຂໍ້ມູນເພີ່ມເຕີມກ່ຽວກັບວິທີບໍລິຈາກ ກະລຸນາຕິດຕໍ່ ໜ່ວຍຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຂອງ ຄຊກລ, ທ່ານ ບຸນຕາວ ຈັນທະວົງສາ; bounthao.chanthavongsa@gmail.com

ລວບລວມ ແລະ ອອກແບບໂດຍ: ຫຄຊກລ, ໜ່ວຍງານແກ້ໄຂ ລບຕ ຂອງ ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ແລະ ສະຖານທູດ ສ. ອາເມລິກາ ປະຈຳ ສປປ ລາວ.

ການຈັດພິມປຶ້ມລາຍງານສະບັບນີ້ ໄດ້ຮັບການສະໜັບສະໜູນໂດຍລັດຖະບານ ສ. ເກົາຫຼີ ຜ່ານອົງການກອຍກາ ປະຈຳ ສປປ ລາວ.

ຮູບພາບ: ຮູບພາບທີ່ປະກົດຢູ່ໃນປຶ້ມລາຍງານຂອງອົງການປະຕິບັດງານແມ່ນຖືເປັນລິຂະສິດຂອງອົງການ, ສ່ວນຮູບພາບອື່ນໆນອກຈາກທີ່ກ່າວມານີ້ ແມ່ນຂໍສະຫງວນລິຂະສິດເປັນຂອງ ຫຄຊກລ.

ຫຄຊກລ ຂໍສະແດງຄວາມຂອບໃຈມາຍັງທຸກອົງການປະຕິບັດງານທົ່ວຂະແໜງການແກ້ໄຂບັນຫາ ລບຕ ທີ່ໄດ້ສະໜອງຮູບພາບ ແລະ ຂໍ້ມູນຕ່າງໆໃນປີ 2021 ເພື່ອປະກອບໃສ່ປຶ້ມລາຍງານປະຈຳປີຂອງຂະແໜງການແກ້ໄຂບັນຫາ ລບຕ ແລະ ສະແດງຄວາມຂອບໃຈມາຍັງອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ທີ່ໃຫ້ການສະໜັບສະໜູນຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ຕະຫຼອດປີ 2021, ພ້ອມທັງ ປະກອບຄວາມຄິດເຫັນໃສ່ປຶ້ມລາຍງານສະບັບນີ້. ພ້ອມນີ້, ໜ່ວຍງານແຜນການ ແລະ ປະຊາສຳພັນ ຂອງຫ້ອງການ ຄຊກລ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງບັນດາເພື່ອນຮ່ວມ ງານຂອງຫ້ອງການ ຄຊກລ ໝົດທຸກຄົນ ທີ່ໄດ້ປະກອບຄວາມຄິດເຫັນ ແລະ ສະໜັບສະໜູນການສັງລວມປຶ້ມປຶ້ມລາຍງານ ປະຈຳປີ 2021 ສະບັບນີ້ຂຶ້ນ.

ປຶ້ມລາຍງານສະບັບນີ້ ອາດມີບາງເນື້ອໃນມີການປ່ຽນແປງ, ຫຼົງລືມ ຫຼື ຜິດພາດ ພາຍຫຼັງທີ່ມີການພິມອອກແຈກຢາຍ. ຕ້ອງການຂໍ້ມູນເພີ່ມຕື່ມ ສາມາດເຂົ້າເບິ່ງໄດ້ທີ່ເວັບໃຊ້: www.nra.gov.la

ສະຫງວນລິຂະສິດ: ຫຄຊກລ, 2022

# ສາລະບານ

ບົດນຳ......4
ບົດນຳ......5
ຕົວອັກສອນຫຍໍ້ ແລະ ຄວາມໝາຍສັບ......7
ສະພາບຕົວຈິງຂອງລະເບີດຕໍ່ທັນແຕກທີ່ຕົກຄ້າງ ແລະ ຕົວເລກສະຖິຕິ......9
ລະເບີດບໍ່ທັນແຕກແມ່ນຫຍັງ?......9
ການສັງລວມຫຍໍ້......10
ພາບລວມໃນປີ 2021:......10
ຜົນສຳເລັດຂອງຂະແໜງການໃນປີ 2020 ໃນແຕ່ລະແຂວງ......12
SECTOR TREND (2011-2021)......18
ການເງິນ ແລະ ການລະດົມທຶນ ໃນປີ 2021:......22
ຂະແໜງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ......25
1. ສົນທິສັນຍາ ແລະ ມາດຕະຖານສາກົນ......25
2. ກອບແຜນວຽກທາງດ້ານນິຕິກຳ, ນະໂຍບາຍ ແລະ ການຈັດຕັ້ງ......26
SGD 18, "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ"......29
3. ພາບລວມຂອງຄູ່ຮ່ວມງານໃນຂະແໜງການແກ້ໄຂບັນຫາ ລບຕ......31
ພາບລວມ ຂອງຄະນະກຳມະການຄຸ້ມຄອງແຫ່ງ ຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)......35
ປະເທດຜູ້ໃຫ້ທຶນ......39
ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ......41
ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)......42
ອົງການໃຫ້ຄຳປຶກສາກ່ຽວກັບການແກ້ໄຂລະເບີດຝັງດິນ (MAG)......50
ອົງການເອັນພີເອ (NPA)......55
ອົງການຮາໂລທຼາດ......59
ອົງການມະນຸດສະທຳ ແລະ ການມີສ່ວນຮ່ວມ(HI)......63

ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ (ກອງ 58) ........ 68

ອົງການສຶກສາໂລກ (ເວີອິດູເຄເຊິ້ນ) ........ 70

ອົງການສະໜອງເຄື່ອງຄ້ຳຊູ ແລະ ອົງຄະທຽມ (COPE) ........ 76

ອົງກອນຟື້ນຟູ ເທີລາ ........ 78

ບັນດາບໍລິສັດ ເກັບກູ້ ລະເບີດ ........ 81

ບໍລິສັດ ລາວ-ອິດສະຕາລີ ........ 82

ເກັບກູ້ລະເບີດ ຈຳກັດ ........ 82

ບໍລິສັດ ລາວບີເອັດສ໌ເອວ ເກັບກູ້ລະເບີດ ຈຳກັດ ........ 84

ບໍລິສັດ ອູມມາ ເກັບກູ້ລະເບີດ ຈຳກັດ ........ 86

ບໍລິສັດ ລ້ານຊ້າງ ມິເນໂລ ຈຳກັດ ........ 87

ບໍລິສັດ ມິວເຊີດສ໌ ເກັບກູ້ລະເບີດ ........ 89

# ບົດນຳ



**ບົດນຳ ຂອງປະທານ ຄຊກລ**

ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເປັນກຽດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2021.

ໃນປີ 2021, ສປປ ລາວ ຍັງສືບຕໍ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19, ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຳລົງຊີວິດຂອງປະຊາຊົນ ແລະ ການຈັດຕັ້ງປະຕິບັດກິດຈະກຳອື່ນໆ. ໃນຂະນະທີ່ບາງຂະແໜງການສາມາດປະຕິບັດວຽກງານ ແລະ ດຳເນີນການສຳຫຼວດ, ກວດກູ້ ແລະ ກິດຈະກຳອື່ນໆ, ພວກເຮົາຍັງໄດ້ຮັບຜົນກະທົບຢ່າງໜັກໜ່ວງ ໂດຍສະເພາະແມ່ນການຈັດກອງປະຊຸມ, ສຳມະນາ ແລະ ບາງກິດຈະກຳທີ່ສຳຄັນທີ່ຕ້ອງໄດ້ມີການພົບປະ ແມ່ນຕ້ອງເລື່ອນເວລາອອກໄປ ຫຼື ດຳເນີນການແບບກອງປະຊຸມທາງໄກ ຫຼື ອາດໄດ້ຍົກເລີກ. ເຖິງແນວໃດກໍຕາມ, ຍ້ອນຄວາມຍຶດໝັ້ນຂອງອຳນາດການປົກຄອງແຫ່ງຊາດ, ຄວາມຍືດຢຸ່ນຂອງຜູ້ໃຫ້ທຶນ ແລະ ການເຄື່ອນໄຫວຂອງໜ່ວຍປະຕິບັດງານໃນພາກສະໜາມ, ບັນຫາຂະແໜງການ ມີການຮັບມືເປັນຢ່າງດີ ແລະ ສາມາດສະໜອງການບໍລິການທີ່ສຳຄັນໃຫ້ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບໃນທົ່ວປະເທດ. ຂໍຊົມເຊີຍຍ້ອງຍໍຕໍ່ຄວາມມານະພະຍາຍາມຂອງທຸກຂະແໜງການລວມທັງການສູ້ຊົນໃຫ້ການບໍລິການແກ່ຊຸມຊົນທີ່ໄດ້ຮັບຜົນກະທົບໃນທຸກແຂວງຢູ່ ສປປ ລາວ.

ໃນປີນີ້, ຂະແໜງການແກ້ໄຂບັນຫາ ລຍຕ ຕັ້ງໜ້າປະຕິບັດງານ ເພື່ອພັດທະນາເອກະສານແຜນຍຸດທະສາດໃໝ່, ເສັ້ນທາງກ້າວສູ່ຄວາມປອດໄພ III ໄລຍະ 2021-2030 ເຊິ່ງຈະເປັນແສງເຍືອງທາງໃຫ້ຂະແໜງການແກ້ໄຂບັນຫາ ລບຕ ແລະ ວຽກງານ ເພື່ອສົ່ງຜົນປະໂຫຍດໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ ໃນທົດສະວັດຕໍ່ໜ້າ. ຈຸດປະສົງຂອງເອກະສານດັ່ງກ່າວ ແມ່ນເປັນເອກະສານອ້າງອີງ ໂດຍສະເພາະແມ່ນຈຸດປະສົງ ແລະ ເປົ້າໝາຍໃນການສ້າງຄວາມເຂັ້ມແຂງຮັດແໜ້ນສາຍພົວພັນກັບບັນດາຂະແໜງ ລບຕ ແລະ ບູລິມະສິດການພັດທະນາອື່ນໆຂອງລັດຖະລານ ສປປ ລາວ ໃນ 10 ປີຂ້າງໜ້າ. ລັດຖະບານ ສປປ ລາວ ຍັງໄດ້ຮ່າງດຳລັດວ່າດ້ວຍການເພີ່ມທະວີການສ້າງນິຕິກຳ ເພື່ອສະໜັບສະໜູນຂະແໜງ ລບຕ ທີ່ຈະຈັດຕັ້ງປະຕິບັດໃນໄວໆນີ້.

ເຖິງວ່າຈະມີສິ່ງທ້າທາຍຈາກການແຜ່ລະບາດຂອງພະຍາດ ແລະ ການຢຸດຊົ່ວຄາວຂອງແຫຼ່ງລາຍຮັບຫຼັກໂດຍສະເພາະແມ່ນຂະແໜງການທ່ອງທ່ຽວ, ສິ່ງທ້າທາຍຂອງຂະແໜງການ ລບຕ ກໍ່ໄດ້ເພີ່ມຂຶ້ນເຊັ່ນດຽວກັນໃນປີ 2021 ແລະ ພະຍາຍາມປັບຕົວໃຫ້ເຂົ້າສະພາບໃນການຕອບສະໜອງຄວາມຕ້ອງການຂອງຊຸມຊົນ ເພື່ອກວດກູ້ທີ່ດິນໃຫ້ປອດໄພ ຈາກ ລບຕ ແລະ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 18 ຂອງ ສປປ ລາວ, ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ. ສະຖິຕິການກວດກູ້ ສະແດງໃຫ້ເຫັນວ່າຂະແໜງການເກັບກູ້ລະເບີດ ໄດ້ກຳຈັດ ແລະ ທຳລາຍ ລບຕ ຫຼາຍກວ່າທີ່ເຄີຍຜ່ານມາ, ໂດຍສະຖິຕິໃນປີ 2021 ເພີ່ມຂຶ້ນຢ່າງຫຼວງຫຼາຍນັບແຕ່ປີ 2018 ແລະ ຕົວເລກສູງເປັນສະຖິຕິ. ແຕ່ກໍ່ໜ້າເສຍດາຍ, ຕົວເລກຂອງຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ເພີ່ມຂຶ້ນເຖິງ 63 ຄົນ ໃນປີ 2021. ຊຶ່ງສິ່ງເຫຼົ່ານີ້ສະແດງເຖິງຄວາມຊັດເຈນຕໍ່ຂະແໜງການເກັບກູ້ ລບຕ ເພື່ອຊຸກຍູ້ຄວາມພະຍາຍາມໃຫ້ຫຼາຍຂຶ້ນເພື່ອຊີ້ນຳກິດຈະກຳໂຄງສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ມີປະສິດທິພາບຫຼາຍຂຶ້ນໃນຊຸມຊົນ ໂດຍສະເພາະແມ່ນກຸ່ມຄົນທີ່ມີຄວາມສ່ຽງຕໍ່ລະເບີດຝັງດິນ ແລະ ປັບປຸງການຕອບສະໜອງການສຶກສາ ເພື່ອຫຼຸດຜ່ອນໄພຄຸກຄາມຕໍ່ກຸ່ມເຫຼົ່ານີ້.

ຂ້າພະເຈົ້າຕາງໜ້າໃຫ້ລັດຖະບານ ສປປ ລາວ ແລະ ໃນນາມປະທານ ຄຊກລ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳ ເລັດຂອງການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນໄລຍະ 1 ປີຜ່ານມາ. ໃນປີນີ້, ພວກເຮົາສັງເກດຕີລາຄາໄດ້ວ່າ ບັນດາພາກສ່ວນທີ່ກ່ຽວຂ້ອງກັບຂະແໜງການເກັບກູ້ ລບຕ ສາມາດປັບຕົວເຂົ້າກັບສິ່ງທ້າທາຍກັບໂລກລະບາດ ທີ່ສົ່ງຜົນກະທົບຕໍ່ພວກເຮົາ ແລະ ໃນຂະນະດຽວກັນ, ຜູ້ຕິດເຊື້ອຕໍ່ໂລກດັ່ງກ່າວກໍ່ໄດ້ລົດຕ່ຳລົງ ແລະ ປະເທດກໍ່ກຳລັງກັບຄືນສູ່ສະພາບປົກກະຕິ, ພວກເຮົາສາມາດກັບຄືນສູ່ວຽກທີ່ຄົງຄ້າງໄດ້. ໃນສະພາບດັ່ງກ່າວ, ຂໍຊົມເຊີຍຕໍ່ຄວາມມານະພະຍາຍາມຂອງບັນດາຂະແໜງການເກັບກູ້ ລບຕ, ຄູ່ຮ່ວມພັດທະນາ, ລວມທັງອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ບັນດາຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນທີ່ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານໃນໄລຍະປີ 2021.

**ທ່ານ ນາງ ໃບຄຳ ກິດຕິຍາ**
**ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ,**
**ປະທານ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.**

# ບົດນຳ





**ບົດນຳຮ່ວມຂອງເອກອັກຄະລັດຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ, ຄະນະປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ**

ຂະແໜງການເກັບກູ້ ລບຕ ຢູ່ ສປປ ລາວໄດ້ສືບຕໍ່ມີຜົນສຳເລັດອັນໜັກແໜ້ນ ແລະ ຄວນໄດ້ຮັບການຍ້ອງຍໍຊົມເຊີຍຕໍ່ວຽກງານທີ່ໄດ້ປະຕິບັດໃນປີທີ່ຜ່ານມາ ໂດຍສະເພາະແມ່ນກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ສົ່ງຜົນກະທົບຕໍ່ເສດຖະກິດຂອງ ສປປ ລາວ, ທີ່ສົ່ງຜົນກະທົບຢ່າງໜັກໜ່ວງກໍ່ການພັດທະນາ ແລະ ການດຳເນີນກິດຈະກຳຂອງລັດຖະບານ.

ແຕ່ເປັນອັນທີ່ໜ້າເສຍດາຍ, ໃນປີ 2021 ຕົວເລກຂອງຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກໄດ້ເພີ່ມຂຶ້ນ. ພວກເຮົາຫວັງວ່າປີນີ້ເປັນປີໂຊກຮ້າຍ ແລະ ພວກເຮົາຈະເຫັນການຫຼຸດຜ່ອນຕົວເລກຂອງຜູ້ຖືກເຄາະຮ້າຍຈາກ ລບຕ ໃນປີ 2022. ມັນຍັງເປັນສິ່ງທີ່ທ້າທາຍຂອງຂະແໜງການແກ້ໄຂບັນຫາ ລບຕ ໃນການສຳຫຼວດຕົວຂັບເຄື່ອນຂອງບັນຫາດັ່ງກ່າວ ແລະ ປະຕິບັດວຽກງານເພື່ອຫຼຸດຜ່ອນ ແລະ ຈຳກັດຜູ້ປະສົບເຄາະຮ້າຍຈາກ ລບຕ ໃນ ສປປ ລາວ.

ຕໍ່ກັບບັນຫາທ້າທາຍດ້ານການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຈຳນວນຜູ້ປະສົບອຸປະຕິເຫດຈາກ ລບຕ ໄດ້ເພີ່ມ ຂຶ້ນ, ເຫັນໄດ້ວ່ານີ້ເປັນການຊຸກຍູ້ໃຫ້ພື້ນທີ່ທີ່ໄດ້ມີກວດກູ້ ລບຕ ໄດ້ເພີ່ມຂຶ້ນ ແລະ ປະລິມານການກວດກູ້ລະເບີດກໍ່ເພີ່ມຂຶ້ນເຊັ່ນດຽວກັນ. ໃນຖານະຂະແໜງການແກ້ໄຂບັນຫາ ລບຕ,ພວກເຮົາຈະສືບຕໍ່ຫາສອງທາງເພື່ອເພີ່ມຜົນຜະລິດ ໂດຍບໍ່ໃຫ້ຫຼຸດມາດຕະຖານ ແລະສາມາດຮັບປະກັນບູລິມະສິດບຸກເບີກພື້ນທີ່ ທີ່ມີທ່າແຮງດ້ານເສດຖະກິດໃຫ້ຫຼາຍທີ່ສຸດ, ໂດຍເຮັດໃຫ້ເກີດຜົນປະໂຫຍດສູງສຸດຂອງການມີສ່ວນຮ່ວມຈາກຂະແໜງການແກ້ໄຂບັນຫາ ລບຕ ເພື່ອພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ.

ຂອບເຂດພື້ນທີ່ທີ່ມີ ລບຕ ຢູ່ ສປປ ລາວ ແມ່ນຍັງມີຂະໜາດໃຫຍ່ ແລະ ການຈັດລຳດັບຄວາມສຳຄັນທັງການສຳຫຼວດ ແລະ ການກວດກູ້ ສາມາດຮັບປະກັນໄດ້ວ່າ ທີ່ດິນຕ້ອງເປັນພື້ນທີ່ພັດທະນາເສດຖະກິດ-ສັງຄົມ ເພື່ອຕອບສະໜອງຄວາມຕ້ອງການໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ, ເຊິ່ງຈະເຮັດໃຫ້ເຂົາເຈົ້າສາມາດດຳລົງຊີວິດຢ່າງປອດໄພ, ປາສະຈາກໄພຄຸກຄາມຈາກ ລບຕ. ວຽກງານຈັດຕັ້ງບູລິມະສິດແມ່ນມີຄວາມເຊື່ອມໂຍງກັບທຸກພາກສ່ວນ ຂອງການພັດທະ ນາເສດຖະກິດ-ສັງຄົມ, ດ້ວຍເຫດນີ້, ລັດຖະບານ ແລະ ບັນດາເຂດເມືອງ ຕ້ອງສົມທົບກັນຢ່າງເຂັ້ມແຂງໃນການເຊື່ອມໂຍງວຽກງານກວດກູ້ ແລະ ການພັດທະນາ.

ໃນປີ 2021, ການສຳຫຼວດໄດ້ເຮັດໃຫ້ໜ່ວຍງານເກັບກູ້ລະເບີດດ້ານມະນຸດສະທຳ ເຂົ້າເຖິງເຂດເປົ້າໝາຍຢ່າງຖືກຕ້ອງ ແລະ ມີປະສິດທິຜົນ. ເນື່ອງຈາກວຽກງານການສຳຫຼວດ ໄດ້ສຳເລັດໃນບາດແຂວງ ແລະ ຍ້ອນວ່າວຽກງານເກັບກູ້ ລບຕ ຂອງພວກເຮົາໄດ້ຫັນປ່ຽນຈຸດສຸມຈາກການສຳຫຼວດໄປສູ່ການກວດກູ້ພື້ນທີ່ອັນຕະລາຍ ທີ່ໄດ້ຮັບການຢືນຢັນ, ທີມສຳຫຼວດສາມາດປ່ຽນເປັນທີມກວດກູ້ໄດ້ຫຼາຍຂຶ້ນ.

ປີນີ້ແມ່ນໄດ້ມີໝາກຜົນສຳເລັດທີ່ສຳຄັນຫຼາຍດ້ານ , ພາຍໃຕ້ການນຳພາທີ່ສະຫຼາດສ່ອງໃສຂອງລັດຖະບານ ສປປ ລາວ, ລວມທັງຮ່າງແບບແຜນໃຫມ່ທີ່ໃກ້ຈະສຳເລັດ ແລະ ຮ່າງສະບັບສຸດທ້າຍຂອງແຜນຍຸດທະສາດແຫ່ງຊາດ 10 ປີ ສຳຫຼັບຂະແໜງການແກ້ໄຂບັນຫາ ລບຕ, "ເສັ້ນທາງກ້າວສູ່ຄວາມປອດໄພ III". ຮ່າງກົດໝາຍແລະຍຸດທະສາດໃຫມ່ ທັງສອງຈະສະໜັບສະໜູນຄຳໝັ້ນສັນຍາຂອງລັດຖະບານ ສປປ ລາວ ເພື່ອບັນລຸເປົ້າໝາຍ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9 ແລະ ເປົ້າໝາຍການພັດທະນາແບບຍືນຍົງທີ 18 ຂອງ ສປປ ລາວ, "ຊີວິດປອດໄພຈາກລະເບີດບໍ່ທັນແຕກ".

ໃນຖານະທີ່ເປັນປະທານຮ່ວມຂອງຄະນະປະຕິບັດງານໃນຂະແໜງການແກ້ໄຂບັນຫາ ລບຕ, ທັງສະຫະປະຊາຊາດເພື່ອການພັດທະນາ ແລະ ສະຖານທູດອາເມລິກາ

ປະຈຳ ສປປ ລາວ ມີຄວາມພາກພູມໃຈທີ່ໄດ້ເປັນເຈົ້າການນຳພາທີ່ມີສ່ວນຮ່ວມຂອງຄູ່ຮ່ວມພັດທະນາໃນວຽກງານທີ່ສຳຄັນ ແລະ ຊີວິດການເປັນຢູ່ ກໍຄືການເກັບກູ້ລະເບີດບໍ່ທັນແຕກ ເພື່ອເຮັດໃຫ້ທີ່ດິນປອດໄພ, ບັນເທົາທຸກຈາກຄວາມສ່ຽງຂອງລະເບີດບໍ່ທັນແຕກໃນຊຸມຊົນໂດຍຜ່ານຊ່ອງທາງການໂຄສະນາສຶກສາຄວາມສ່ຽງໄພ, ສະໜັບສະໜູນຜູ້ປະສົບເຄາະຮ້າຍຈາກ ລບຕ ໂດຍກົງໃນຊຸມປີທີ່ຜ່ານມາ. ພວກເຮົາຫວັງວ່າຈະສືບຕໍ່ໃຫ້ການຮ່ວມມື ແລະ ສ້າງໝາກຜົນໃນຂະແໜງການເກັບກູ້ລະເບີດບໍ່ທັນແຕກໃນຕໍ່ໄປ.

**ປີເຕີ້ ເອັມ. ເຮມ້ອນ**
**ເອກອັກຄະລະຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ, ປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ**

**ລິຄາດາ ລິກເຈີ**
**ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈຳສປປລາວ, ປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ**

# ຕົວອັນສອນຫຍໍ້ ແລະ ຄວາມໝາຍສັບ

AC - ການກວດກູ້
ADRA - ສົນທິສັນຍາວ່າດ້ວຍການຕ້ານລະເບີດຝັງດິນ
ATTP - ແຂວງອັດຕະປື
AWP - ແຜນການປະຈໍາປີ
BAC - ສະໜາມການກວດກູ້ລະເບີດ
CAMA - ວິທີການທີ່ເໝາະສົມໃນການແກ້ໄຂລະເບີດຝັງດິນ
CCM - ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ
CFLI - ກອງທຶນສໍາລັບການລິເລີ່ມກິດຈະກໍາຢູ່ທ້ອງຖິ່ນຂອງການາດາ
(ໂຄງການອົງການພັດທະນາສາກົນຂອງການາດາ)
CHAs - ພື້ນທີ່ ລບຕ ຕົກຄ້າງ
CMRS - ການສໍາຫຼວດຊອກຫາລະເບີດລູກຫວ່ານ
COPE - ອົງການບໍລິການອົງຄະທຽມ ແລະ ເຄື່ອງຄໍ້າຊູ
CPS - ແຂວງຈໍາປາສັກ
CRPD - ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ
CTA - ຫົວໜ້າຊ່ຽວຊານທີ່ປຶກສາ
DAP - ແຜນປະຕິບັດງານດູໂບຼນິກ
DFID - ອົງການພັດທະນາສາກົນແຫ່ງຊາດຊະອານາຈັກອັງກິດ
EOD - ການທໍາລາຍລະເບີດ
EORE - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ
ERW - ລະເບີດຕົກຄ້າງປາງສົງຄາມ
EU - ສະຫະພາບເອີຣົບ
GoL - ລັດຖະບານ ສປປ ລາວ
GRET - ກຸ່ມຄົ້ນຄວ້າທາງດ້ານເທັກໂນໂລຊີ ເພື່ອການປ່ຽນແປງ
Ha - ເຮັກຕ້າ
HI - ອົງການເພື່ອມະນຸດ ແລະ ການມີສ່ວນຮ່ວມ
HP - ແຂວງຫົວພັນ
IM - ການບໍລິຫານຄຸ້ມຄອງຂໍ້ມູນ
IMSMA - ຖານຂໍ້ມູນ ລບຕ
JICS - ລະບົບການຮ່ວມມືສາກົນຂອງຍີ່ປຸ່ນ
KM - ຄໍາມ່ວນ
KOICA - ອົງການຮ່ວມມືສາກົນຂອງ ສ. ເກົາຫຼີ
Lao PDR - ສປປ ລາວ
LPB - ຫຼວງພະບາງ
MAG - ອົງການໃຫ້ຄໍາປຶກສາດ້ານການແກ້ໄຂລະເບີດຝັງດິນ
MOES - ກະຊວງສຶກສາ ແລະ ກິລາ
NIM – ເອກະສານແຫ່ງຊາດ ໃນການປະຕິບັດງານໂຄງການ
NMFA – ກະຊວງການຕ່າງປະເທດນໍ໋ອກແວ
NMAS – ມາດຕະຖານແຫ່ງຊາດໃນການແກ້ໄຂລະເບີດຝັງດິນ
NPA – ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍ໋ອກແວ
NRA – ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ
NSEDP – ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
NTS – ການສໍາຫຼວດແບບບໍ່ແມ່ນວິຊາການ
NZ – ປະເທດນິວຊີແລນ
PM/WRA – ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບຂອງກະຊວງການຕ່າງປະເທດສ. ອາເມລິກາ
PWD – ຄົນພິການ
QM – ການກວດກາຄຸນນະພາບ
RC – ກອງປະຊຸມທົບທວນ
RT – ການທໍາລາຍ ລບຕ ແບບເຄື່ອນທີ່
SDG 18 – ເປົ້າໝາຍການພັດທະນາແບບຍືນຍົງທີ 18
SLV – ແຂວງສາລະວັນ
SK – ແຂວງເຊກອງ
SVK – ແຂວງສະຫວັນນະເຂດ

TS – ການສຳຫຼວດແບບວິຊາການ

UK – ລາດຊະອານາຈັກອັງກິດ

UNDP – ສະຫະປະຊາຊາດ ເພື່ອການພັດທະນາ

Unit 58 – ກອງກວດກູ້ລະເບີດ ເພື່ອມະນຸດສະທຳ ກອງທັບ

US – ສະຫະລັດອາເມລິກາ

USD – ໂດລ້າສະຫະລັດ

USDOS – ກະຊວງການຕ່າງປະເທດສະຫະລັດ ອາເມລິກາ

UXO Lao – ໂຄງການເກັບກູ້ລະເບີດແຫ່ງຊາດ

UXO – ລະເບີດບໍ່ທັນແຕກ

VA – ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

WE – ອົງການສຶກສາໂລກ

WHWV – ພວກເຮົາຊ່ວຍເຫຼືອຜູ້ຖືກເຄາະຮ້າຍປາງ ສົງຄາມ

WWM – ອົງການໂລກປອກຈາກລະເບີດຝັງດິນ

XK – ແຂວງຊຽງຂວາງ

## ສະພາບຕົວຈິງຂອງລະເບີດຕໍ່ທັນແຕກທີ່ຕົກຄ້າງ ແລະ ຕົວເລກສະຖິຕິ

- ສປປ ລາວ ເປັນທະເທດທີ່ຖືກຜົນກະທົບຢ່າງໜັກໜ່ວງທີ່ສຸດຈາກລະເບີດ, ທຽບໃສ່ຫົວຄົນໃນປະຫວັດສາດ.
- ໝູ່ບ້ານທີ່ທຸກຍາກສ່ວນໃຫຍ່ແມ່ນໄດ້ຮັບຜົນກະທົບຈາກ ລບຕ.
- 17 ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຮັບຜົນກະທົບຈາກ ລບຕ.
- ລະເບີດຫຼາຍກວ່າ 2 ລ້ານໂຕັນ ໄດ້ຖິ້ມລົງໃສ່ແຜ່ນດິນຂອງ ສປປ ລາວ ໃນລະຫວ່າງປີ 1964 ຫາ 1973.
- ມີຖ້ຽວບິນຖິ້ມລະເບີດໃສ່ ສປປ ລາວຈຳນວນ 580,000 ຖ້ຽວ.
- ລະເບີດລູກຫວ່ານ ແມ່ນມີຫຼາຍທີ່ສຸດຂອງຈຳນວນ ລບຕ ທີ່ ພົບເຫັນ ແລະ ຍັງຕົກຄ້າງຢູ່ ສປປ ລາວ.
- ລະເບີດລູກຫວ່ານ ຫຼາຍກວ່າ 270 ລ້ານໜ່ວຍ ໄດ້ຫວ່ານລົງ ໃສ່ຜືນແຜ່ນດິນຂອງ ສປປ ລາວ, ຄາດຄະເນ 30% ຍັງບໍ່ທັນ ແຕກ.
- ພາຍຫຼັງສົງຄາມສິ້ນສຸດລົງ ລະເບີດລູກຫວ່ານ ປະມານ 80 ລ້ານໜ່ວຍ ແມ່ນຍັງບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ.
- ນັບແຕ່ປີ 1964 ມີປະຊາຊົນບັນດາເຜົ່າຫຼາຍກວ່າ 50,000 ຄົນ ໄດ້ເສຍຊີວິດ ແລະ ຮັບບາດເຈັບຈາກ ລບຕ.
- ໃນໄລຍະ 10 ປີ ຜ່ານມາ, ມີຜູ້ຖືກບາດເຈັບຈາກ ລບຕ ທັງໝົດ 429 ຄົນ ແລະ ເສຍຊີວິດ ທັງໝົດ 102 ຄົນ ກວມເອົາ (24%).
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ (2011-2020) ຫຼາຍກວ່າ 60% ຂອງ ຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ແມ່ນເດັກນ້ອຍ (ຕ່ຳກວ່າ 18 ປີ).
- ອຸປະຕິເຫດຈາກລະເບີດລູກຫວ່ານ ເພີ່ມຂຶ້ນເປັນ 30% ທຽບ ໃສ່ທົດສະວັດທີ່ຜ່ານມາ.

## ລະເບີດບໍ່ທັນແຕກແມ່ນຫຍັງ?

ລະເບີດບໍ່ທັນແຕກ ຫຼື ລບຕ ແມ່ນອາວຸດທີ່ຍັງບໍ່ທັນແຕກ ໃນເວລາຖືກຍິງອອກ, ຕົກລົງ ຫຼື ຝັງອອກ ແມ່ນຍັງມີຄວາມສ່ຽງທີ່ຈະລະເບີດຂຶ້ນໄດ້ທຸກເວລາ. ການຕົກຄ້າງ ຂອງ ລບຕ ຢູ່ໃນ ສປປ ລາວ ປະກອບມີ ລະເບີດບົມໃຫຍ່, ລູກຈະຫຼວດ, ໝາກແຕກ, ລູກປືນໃຫຍ່, ລູກປືນຄົກ, ລະເບີດຝັງດິນ ແລະ ລະເບີດລູກຫວ່ານ.

ລະເບີດລູກຫວ່ານ ແມ່ນອາວຸດທີ່ປະກອບດ້ວຍຮາງກະ ປາງ ແລະ ອອກແບບເພື່ອແຈກ ຫຼື ປົດປ່ອຍລະເບີດລູກ ຫວ່ານນ້ອຍອອກມາ, ຊຶ່ງແຕ່ລະໜ່ວຍ ໜັກບໍ່ເກີນ 20 ກິໂລກຣາມ. ບັນດາລະເບີດລູກຫວ່ານນ້ອຍໆເຫຼົ່ານີ້ ແມ່ນເປັນທີ່ຮູ້ຈັກກັນດີຢູ່ໃນ ສປປ ລາວ ທີ່ເອີ້ນກັນວ່າ "ລະເບີດ ລູກຫວ່ານ ຫຼື ບົມບີ" ຈະຖືກຖິ້ມລົງຈາກຍົນຢູ່ໃນລະດັບ ທີ່ກຳນົດໄວ້ ແລະ ຈະຍຸ້ສະເດັນລະເບີດລູກຫວ່ານອອກ ຫວ່ານເປັນພື້ນທີ່ວົງກວ້າງ. ບັນດາລະເບີດລູກຫວ່ານທີ່ຖິ້ມ ລົງໃສ່ ສປປ ລາວ ມີອັດຕາພາດບໍ່ແຕກສູງປະມານ 30% ແລະ ຍັງຕົກຄ້າງຢູ່ຕາມແຜນດິນຂອງ ສປປ ລາວ. ເມື່ອໃດ ທີ່ພວກມັນຖືກແຕະຕ້ອງ ແລະ ຖືກລົບກວນ ແມ່ນຍັງສາ ມາດແຕກຂຶ້ນໄດ້ທຸກເວລາ ເຖິງແມ່ນວ່າ ເວລາຈະຜ່ານໄປ ຫຼາຍທົດສະວັດແລ້ວກໍ່ຕາມ ໂດຍຈະສົ່ງຜົນກະທົບໃຫ້ປະ ຊາຊົນຖືກບາດເຈັບ ແລະ ເສຍຊີວິດໄດ້ ໃນເວລາທີ່ກຳລັງ ເຮັດກິດຈະກຳປະຈຳວັນ.

ປະຈຸບັນນີ້, ສປປ ລາວ ເປັນໜຶ່ງໃນບັນດາປະເທດທີ່ຖືກກະ ທົບຈາກລະເບີດລູກຫວ່ານຮ້າຍແຮງກວ່າໝູ່ໃນໂລກ, ໂດຍ 25% ຂອງ 10,000 ບ້ານໃນທົ່ວປະເທດມີການຕົກຄ້າງ ຈາກບັນດາອາວຸດເຫຼົ່ານີ້. ຕະຫຼອດໄລຍະເວລາ 9 ປີ, ມີລະເບີດລູກຫວ່ານກວ່າ 270 ລ້ານໜ່ວຍ ໄດ້ຖືກຖິ້ມລົງໃສ່ຜືນ ແຜ່ນດິນຂອງ ສປປ ລາວ, ສາມາດຄາດຄະໄດ້ວ່າ ປະມານ 80 ລ້ານໜ່ວຍ ຍັງບໍ່ທັນແຕກ ແລະ ຕົກຄ້າງຢູ່ໃນສະພາບ ທີ່ສາມາດລະເບີດຂຶ້ນໄດ້ ແລະ ຍັງຢັ້ງຢາຍໃນທົ່ວປະເທດ. ນອກນັ້ນ, ຍັງມີບົມໃຫຍ່ຫຼາຍກວ່າສີ່ລ້ານໜ່ວຍ ທີ່ຖືກຖິ້ມລົງ ໃນສະໜາມຮົບອັນກວ້າງໃຫຍ່ ແລະ ຍັງເຊື່ອງຊ້ອນຢູ່ຕາມ ພູມລຳເນົາຕ່າງໆຂອງປະເທດ.

## ການສັງລວມຫຍໍ້
## ພາບລວມໃນປີ 2021:

ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ປະກອບມີຫຼາຍພາກສ່ວນປະຕິບັດງານແກ້ ໄຂບັນຫາລະເບີດບໍ່ທັນແຕກ ດຳເນີນການເຄື່ອນໄຫວ ວຽກງານເພື່ອຫຼຸດຜ່ອນຜົນກະທົບຂອງລະເບີດບໍ່ທັນ ແຕກ (ລບຕ) ຕໍ່ບຸກຄົນ ແລະ ຊຸມຊົນຕ່າງໆ ເພື່ອປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຕ່າງໆ ຂອງລັດຖະບານ. ອົງການປະຕິບັດງານແກ້ໄຂ ລບຕ ປະ ກອບມີ ຝ່າຍລັດຖະບານລາວ, ເຄືອຄ່າຍອົງການ ສປຊ ເພື່ອການພັດທະນາ, ປະເທດຜູ້ໃຫ້ທຶນ, ອົງການຈັດຕັ້ງສາ ກົນບໍ່ສັງກັດລັດຖະບານ, ອົງການພາຍໃນປະເທດ ແລະ ບໍລິສັດກວດກູ້ ລບຕ.

ບົດລາຍງານສະບັບນີ້ ຈະເນັ້ນໜັກໃສ່ລາຍງານຄວາມຄືບ ໜ້າໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນປີ 2021 ເພື່ອບັນລຸເປົ້າໝາຍສູງສຸດຄື ເຮັດໃຫ້ ສປປ ລາວ ປອດຈາກໄພຂົ່ມຂູ່ຂອງ ລບຕ.

ໃນຊ່ວງປີ 2020 ຫາ 2021, ສປປ ລາວ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19. ໃນຂະນະດຽວກັນ ສປປ ລາວ ໄດ້ໃຊ້ມາດຕະການທີ່ເໝາະສົມ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ຂະ ແໜງການ ລບຕ ໄດ້ພະຍາຍາມຮັກສາມຄວາມເປັນປົກກະຕິ ແລະ ສືບຕໍ່ສະໜອງການບໍລິການໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ.

ຕົວເລກຜູ້ເສຍຊີວິດຈາກອຸປະຕິເຫດຈາກ ລບຕ ເພີ່ມຂຶ້ນໃນປີ 2021 ເປັນ 63 ຄົນ ຈາກ 35 ຄັ້ງ, ສະເລ່ຍຜູ້ຖືກເຄາະຮ້າຍຈາກ ລບຕ ບໍ່ຕ່ຳກວ່າ 2 ຄົນຕໍ່ 1 ຄັ້ງ. ຕົວເລກເຫຼົ່ານີ້ໄດ້ເພີ່ມຂຶ້ນຈາກສະຖິຕິຂອງປີກ່ອນໜ້ານີ້ ແລະ ສູງກວ່າເຄື່ອງໝາຍຈາກຕົວເລກ 40 ຫຼື ຕ່ຳກວ່າຕໍ່ປີ ຕາມຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບທີ 9 (9NSEDP). ເຮົາອາດຄາດເດົາໄດ້ວ່າເປັນຫຍັງຕົວເລກເຫຼົ່ານີ້ຈຶ່ງເພີ່ມຂຶ້ນ ແຕ່ສິ່ງນີ້ອາດມີຄວາມເຊື່ອມໂຍງກັບແຮງກົດດັນທາງເສດຖະກິດໃນພື້ນທີ່ຊຸມຊົນ ໂດຍສະເພາະແມ່ນເຂດໝູ່ບ້ານທີ່ທັນເອົາທຳມະຊາດມາເປັນບ່ອນລ້ຽງຊີບ ແລະ ການດຳລົງຊີວິດ. ດັ່ງທີ່ພວກເຮົາຮູ້, ອັດຕາສ່ວນໃຫຍ່ຂອງອຸປະຕິເຫດເກີດຂຶ້ນໃນເວລາທີ່ປະຊາຊົນຈູດໄຟ ເພື່ອເຮັດອາຫານ ແລະ ກິດຈະກຳຖາງປ່າ ແລະ ຈູດ ໃນເວລາທີ່ມີການຂະຫຍາຍເນື້ອທີ່ດິນ ເພື່ອການກະສິກຳ. ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຕ້ອງສຸມໃສ່ການປ້ອງກັນອຸປະຕິເຫດພາຍໃຕ້ສະຖານະການເຫຼົ່ານີ້.

ໃນປີ 2021, ຂະແໜງການແກ້ໄຂບັນຫາ ລບຕ ໄດ້ສືບຕໍ່ປະຕິບັດເປົ້າໝາຍການສຳຫຼວດດ້ານວິຊາການ ໂດຍອີງຕາມຫຼັກຖານຂອງການສຳຫຼວດດ້ານການສຳຫຼວດດ້ານວິຊາການ ເພື່ອກຳນົດເປົ້າໝາຍການເກັບກູ້. ໃນປີ 2020 ໄດ້ມີການຂະຫຍາຍເນື້ອທີ່ດິນທີ່ຖືກກຳນົດເປັນ CHAs ຈາກ 18,068 ເຮັກຕາໃນປີ 2020 ເພີ່ມຂຶ້ນເປັນ 22,831 ເຮັກຕາໃນປີ 2021 ທັງຫມົດເປັນ 26 ເປີເຊັນ. ຍ້ອນການາເພີ່ມຂຶ້ນຂອງ CHAs ໂດຍຜ່ານການສຳຫຼວດດ້ານວິຊາການ, ເຮັດໃຫ້ການກວດກູ້ໃນປີນີ້ຫຼຸດລົງຈາກ 5,392 ເຮັກຕາໃນປີ 2020 ເປັນ 4,755 ເຮັກຕາໃນປີ 2021 ທັງຫມົດເປັນ ລົບ 12 ເປີເຊັນ. ຊຶ່ງໃນສ່ວນນີ້ເປັນການຫັນປ່ຽນຈຸດສຸມໂດຍເນັ້ນໃສ່ການສຳຫຼວດ ແລະ ກຳນົດ CHAs ຊຶ່ງບ່ອນທີ່ໄດ້ລະບຸພື້ນທີ່ CHAs ນັ້ນຈະເຮັດໃຫ້ຂະແໜງການແກ້ໄຂບັນຫາ ລບຕ ມີເປົ້າໝາຍຊັດເຈນ ກ່ຽວກັບພື້ນທີ່ຈະໄປກວດກູ້. ຊຶ່ງຜົນຂອງຂໍ້ມູນທັງສອງນັ້ນ, ໄດ້ຮັບຜົນກະທົບຈາກຂໍ້ຈຳກັດຂອງການລະບາດພະຍາດໂຄວິດ-19 ແລະ ຄວາມຕ້ອງການຂອງໜ່ວຍງານແກ້ໄຂບັນຫາ ລບຕ ເພື່ອປະຕິບັດຕາມມາຕະການທີ່ຖືກວາງອອກມາ ເພື່ອຫຼຸດຜ່ອນການແຜ່ລະບາດຂອງພະຍາດໂຄວິດ-19.

ໃນປີອື່ນໆ, ວຽກງານການສຳຫຼວດ ແລະ ກວດກູ້ ໄດ້ຈັດຕັ້ງປະຕິບັດຢ່າງສົມບູນ ຊຶ່ງໃນນັ້ນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ກໍ່ເປັນໜຶ່ງກິດຈະກຳທີ່ຖືກຈັດຕັ້ງປະຕິບັດໃນປີທີ່ຜ່ານມາ ໂດຍມີຜູ້ເຂົ້າຮ່ວມທັງຫມົດ 202,076 ຄົນເຂົ້າຮ່ວມກິດຈະກຳ ໃນຈຳນວນ 683 ໝູ່ບ້ານທີ່ຖືກຜົນກະທົບຈາກ ລບຕ. ໃນຂະນະອຸປະຕິເຫດຈາກ ລບຕ ໃນປີ 2021 ສະແດງໃຫ້ເຫັນວ່າ ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ບໍ່ມີການພົວພັນໂດຍກົງ ກັບສະຖິຕິຂອງອຸປະຕິເຫດ; ຄວາມຕຶງຄຽດທາງດ້ານເສດຖະກິດ-ສັງູຄົມມີອິດທິພົນຕໍ່ພຶດຕິ

ກຳ ແລະ ຂະແໜງການຍ່ອຍຂອງ EORE ສືບຕໍ່ຄົ້ນຫາວິທີທາງທີ່ມີອິດທິພົນທີ່ດີກວ່າ ຕໍ່ກັບພຶດຕິກຳທີ່ມີຄວາມສ່ຽງ ໂດຍສະເພາະແມ່ນຊຸມຊົນທີ່ຕ້ອງການສ້າງລາຍຮັບຜ່ານກິດຈະກຳທີ່ມີຄວາມສ່ຽງ.

ໃນລະຫວ່າງປີ 2021, ຂະແໜງການຍ່ອຍຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ ໃຫ້ປະຕິບັດການປັບປຸງຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອຮັບປະກັນນະໂຍບາຍ ທີ່ສະທ້ອນະເຖິງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ໄດ້ຮັບບາດເຈັບຈາກ ລບຕ ໃນປະຈຸບັນ. ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ຮັບການປະຕິບັດ ເພື່ອຮັບປະກັນໃຫ້ຜູ້ລອດຊີວິດຈາກ ລບຕໄດ້ເຂົ້າເຖິງການດູແລ ແລະ ການຟື້ນຟູໂດຍຜ່ານແຫຼ່ງຊັບພະຍາກອນຕ່າງໆເຊັ່ນ: ກອງທຶນການແພດຜູ້ຖືກເຄາະຮ້າຍຈາກສົງຄາມ. ການບໍລິການດ້ານການປິ່ນປົວ ແລະ ຟື່ນຟູຮ່າງກາຍ ມີໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ໃນ 5 ແຂວງທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ໂດຍສະເພາະແຂວງຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ, ຫຼວງພະບາງ ແລະ ສູນກາງໃນທົ່ວປະເທດທີ່ນະຄອນຫຼວງວຽງຈັນ.

ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຮັບການປະຕິບັດໃນປີ 2021 ເພື່ອສ້າງຄວາມເຂັ້ມແຂງໃຫ້ຫ້ອງການອົງການປົກຄອງຂັ້ນແຂວງ (PRA) ໂດຍຜ່ານການຝຶກອົບຮົມການຊ່ວຍເຫຼືອດ້ານການຄຸ້ມຄອງຂໍ້ມູນຂ່າວສານ (IM) ແລະ ການນຳໃຊ້ IMSMA, ລະບົບການຄຸ້ມຄອງຂໍ້ມູນຂ່າວສານສຳລັບການດຳເນີນການປະຕິບັດວຽກງານເກັບກູ້ລະເບີດ. ອົງການປົກຄອງຂັ້ນແຂວງໄດ້ຮັບການສະໜັບສະໜູນຕິດຕັ້ງອິນເຕີເນັດ ເພື່ອຮັບຮອງໃຫ້ລະບົບ IMSMA ແລະ ການປະຕິບັດງານຂອງຖານຂໍ້ມູນ.

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ໄດ້ສືບຕໍ່ຄົ້ນ ຄ້ວາອອກໃບຢັ້ງຢືນການປະຕິບັດງານໃຫ້ແກ່ບັນດາອົງ ການປະຕິບັດງານໂດຍປະກອບມີ (ອົງການຈັດຕັ້ງສາກົນບໍ່ ສັງກັດລັດຖະບານ, ບໍລິສັດກວດກູ້ລະເບີດ ແລະ ກອງກວດກູ້ລະເບີດມະນຸດສະທຳກອງທັບ) ເພື່ອຮັບປະກັນໃຫ້ການ ປະຕິບັດງານ ສອດຄ່ອງກັບມາດຕະຖານແຫ່ງຊາດ ໃນ ການແກ້ໄຂບັນຫາ ລບຕ. ໃນປີ 2021, ອົງການປະຕິບັດ ງານທີ່ໄດ້ຮັບໃບຢັ້ງຢືນການປະຕິບັດງານ ມີທັງໝົດ 33 ພາກສ່ວນ (6 ອົງການປະຕິບັດງານແກ້ໄຂ ລບຕ ເພື່ອມະນຸດສະທຳ ແລະ 23 ບໍລິສັດກວດກູ້ ລບຕ). ໃນປີ 2021, ຄຊກລ ໄດ້ເຄື່ອນໄຫວກວດກາຄຸນນະພາບການປະຕິບັດ ງານຂອງອົງການປະຕິບັດງານ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງ ທັງໝົດ 18 ຄັ້ງ (ຄກລ, ອົງການເອັດຈ໌ໄອ, ອົງການ ເອັນພີເອ, ອົງການແມັກ ແລະ ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ). ຄຊກລ ຍັງສືບຕໍ່ຊຸກຍູ້ການປະສານງານພາຍໃນຂະແໜງການ ແລະ ຈັດຕັ້ງຄະນະປະຕິບັດງານທາງດ້ານວິຊາການໃນທົ່ວບັນດາເສົາຄ້ຳຂອງການສຳຫຼວດ ແລະ ການກວດກູ້ (CL), ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ (VA), ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (EORE) ແລະ ການຄຸ້ມຄອງຂໍ້ມູນຂ່າວສານ (IM).





## ຜົນສຳເລັດຂອງຂະແໜງການໃນປີ 2020 ໃນແຕ່ລະແຂວງ

### ພື້ນທີ່ກວດກູ້ (AC)

| ແຂວງ | ຈນ ຄັ້ງ | ພື້ນທີ່ (ເຮັກຕາ) | | | ຜູ້ໄດ້ຮັບຜົນປະໂຫຍດ | ລະເບີດບໍ່ທັນແຕກ (UXO) | | | | |
|---|---|---|---|---|---|---|---|---|---|---|
| | | ພື້ນທີ່ ກະສິກຳ | ພື້ນທີ່ ພັດທະນາ | ລວມ | | ລະເບີດບອມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລະເບີດຊະນິດອື່ນ | ລວມ |
| ເຊກອງ | 84 | 288.92 | 11.47 | 300.39 | 5,590 | 1 | 2,678 | 0 | 611 | 3,290 |
| ໄຊສົມບູນ | 103 | - | 59.15 | 59.15 | 0 | 0 | 0 | 0 | 111 | 111 |
| ຄຳມ່ວນ | 173 | 647.78 | 61.58 | 709.36 | 28,108 | 13 | 5,109 | 0 | 975 | 6,097 |
| ຈຳປາສັກ | 74 | 387.80 | - | 387.80 | 1,243 | 0 | 5,000 | 0 | 264 | 5,264 |
| ສາລະວັນ | 115 | 454.33 | 2.33 | 456.65 | 15,894 | 54 | 5,480 | 0 | 667 | 6,201 |
| ສະຫວັນນະເຂດ | 384 | 887.80 | 65.02 | 952.82 | 12,680 | 4 | 5,310 | 1 | 2,958 | 8,273 |
| ຊຽງຂວາງ | 367 | 1,261.60 | 53.64 | 1,315.24 | 38,537 | 4 | 13,352 | 6 | 4,976 | 18,338 |
| ນະຄອນຫຼວງວຽງຈັນ | - | - | - | - | - | - | - | - | - | - |
| ບໍ່ແກ້ວ | - | - | - | - | - | - | - | - | - | - |
| ບໍລິຄຳໄຊ | 1 | 4.87 | - | 4.87 | 29 | 0 | 125 | 0 | 1 | 126 |
| ຜົ້ງສາລີ | - | - | - | - | - | - | - | - | - | - |
| ແຂວງວຽງຈັນ | 2 | 1.28 | 0.90 | 2.18 | 1,529 | 0 | 8 | 0 | 9 | 17 |
| ຫຼວງພະບາງ | 17 | 53.27 | - | 53.27 | 381 | 0 | 614 | 0 | 89 | 703 |
| ຫົວພັນ | 80 | 137.48 | 5.19 | 142.67 | 12,552 | 1 | 1,064 | 1 | 494 | 1,560 |
| ຫຼວງນ້ຳທາ | - | - | - | - | - | - | - | - | - | - |
| ອຸດົມໄຊ | 1 | - | 2.22 | 2.22 | 0 | 0 | 0 | 0 | 0 | 0 |
| ອັດຕະປື | 81 | 360.38 | 8.18 | 368.56 | 1,549 | 0 | 1,773 | 0 | 24 | 1,797 |
| **ລວມ** | **1,482** | **4,485.50** | **269.68** | **4,755.18** | **118,092** | **77** | **40,513** | **8** | **11,179** | **51,777** |

### ການທຳລາຍແບບເຄື່ອນທີ່ (RT)

| ແຂວງ | ຈນ ບ້ານ | ຈນ ຄັ້ງ | ຜູ້ໄດ້ຮັບຜົນປະໂຫຍດ | ລະເບີດບໍ່ທັນແຕກ (UXO) | | | | |
|---|---|---|---|---|---|---|---|---|
| | | | | ລະເບີດບອມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລະເບີດຊະນິດອື່ນ | ລວມ |
| ເຊກອງ | 45 | 126 | 3,566 | 15 | 686 | 1 | 96 | 798 |
| ໄຊສົມບູນ | - | - | - | - | - | - | - | - |
| ຄຳມ່ວນ | 98 | 1,007 | 9,887 | 10 | 2,388 | 0 | 779 | 3,177 |
| ຈຳປາສັກ | 71 | 135 | 4,728 | 5 | 1,002 | 3 | 365 | 1,375 |
| ສາລະວັນ | 91 | 189 | 69,860 | 20 | 1,130 | 13 | 506 | 1,669 |
| ສະຫວັນນະເຂດ | 284 | 1,229 | 24,700 | 20 | 5,089 | 13 | 1,375 | 6,497 |
| ຊຽງຂວາງ | 215 | 1,886 | 22,445 | 1 | 13,996 | 3 | 2,496 | 16,496 |

| | | | | | | | | |
|---|---|---|---|---|---|---|---|---|
| ນະຄອນຫຼວງວຽງຈັນ | 2 | 2 | 22 | 1 | 0 | 0 | 1 | 2 |
| ບໍ່ແກ້ວ | - | - | - | - | - | - | - | - |
| ບໍລິຄໍາໄຊ | 15 | 18 | 7.559 | 3 | 58 | 0 | 86 | 147 |
| ຜົ້ງສາລີ | - | - | - | - | - | - | - | - |
| ແຂວງວຽງຈັນ | 12 | 17 | 5,885 | 1 | 44 | 1 | 73 | 119 |
| ຫຼວງພະບາງ | 40 | 66 | 1,544 | 2 | 426 | 1 | 222 | 651 |
| ຫົວພັນ | 87 | 170 | 10,073 | 3 | 667 | 13 | 561 | 1,244 |
| ຫຼວງນໍ້າທາ | - | - | - | - | - | - | - | - |
| ອຸດົມໄຊ | - | - | - | - | - | - | - | - |
| ອັດຕະປື | 33 | 61 | 28,964 | 1 | 801 | 0 | | 838 |
| **ລວມ** | **993** | **4,906** | **189,233** | **82** | **26,287** | **48** | **36** | **33,013** |

## ເນື້ອທີ່ກວດກູ້ ແລະ ການທໍາລາຍແບບເຄື່ອນທີ່ທັງໝົດ

| ແຂວງ | ຈນ ຕົ້ງ | | | ພື້ນທີ່ (ເຮັກຕາ) ລວມ | ຜູ້ໄດ້ຮັບຜົນປະໂຫຍດ | | | | |
|---|---|---|---|---|---|---|---|---|---|
| | **Agricul-ture** | ພື້ນທີ່ ກະສິກໍາ | ພື້ນທີ່ ພັດທະນາ | | ລະເບີດ ບອມໃຫຍ່ | ລະເບີດ ລູກຫວ່ານ | ພື້ນທີ່ ກະສິກໍາ | ພື້ນທີ່ ພັດທະນາ | ລວມ |
| ເຊກອງ | 288.92 | 11.47 | 300.39 | 9,156 | 16 | 3,364 | 1 | 707 | 4,088 |
| ໄຊສົມບູນ | - | 59.15 | 59.15 | 0 | 0 | 0 | 0 | 111 | 111 |
| ຄໍາມ່ວນ | 647.78 | 61.58 | 709.36 | 37,995 | 23 | 7,497 | 0 | 1,754 | 9,274 |
| ຈໍາປາສັກ | 387.80 | - | 387.80 | 5,971 | 5 | 6,002 | 3 | 629 | 6,639 |
| ສາລະວັນ | 454.33 | 2.33 | 456.65 | 85,754 | 74 | 6,610 | 13 | 1,173 | 7,870 |
| ສະຫວັນນະເຂດ | 887.80 | 65.02 | 952.82 | 37,380 | 24 | 10.399 | 14 | 4,333 | 14,770 |
| ຊຽງຂວາງ | 1,261.60 | 53.64 | 1,315.24 | 60,982 | 5 | 27,348 | 9 | 7,472 | 34,834 |
| ນະຄອນຫຼວງວຽງຈັນ | - | - | - | 22 | 1 | 0 | 0 | 1 | 2 |
| ບໍ່ແກ້ວ | - | - | - | - | - | - | - | - | - |
| ບໍລິຄໍາໄຊ | 4.87 | - | 4.87 | 7,588 | 3 | 183 | 0 | 87 | 273 |
| ຜົ້ງສາລີ | - | - | - | - | - | - | - | - | - |
| ແຂວງວຽງຈັນ | 1.28 | 0.90 | 2.18 | 7,414 | 1 | 52 | 1 | 82 | 136 |
| ຫຼວງພະບາງ | 53.27 | - | 53.27 | 1,925 | 2 | 1,040 | 1 | 311 | 1,354 |
| ຫົວພັນ | 137.48 | 5.19 | 142.67 | 22,625 | 4 | 1,731 | 14 | 1,055 | 2,804 |
| ຫຼວງນໍ້າທາ | - | - | - | - | - | - | - | - | - |
| ອຸດົມໄຊ | - | 2.22 | 2.22 | 0 | 0 | 0 | 0 | 0 | 0 |
| ອັດຕະປື | 360.38 | 8.18 | 368.56 | 30,513 | 1 | 2,574 | 0 | 60 | 2,635 |
| **ລວມ** | **4,485.50** | **269.68** | **4,755.18** | **307,325** | **159** | **66,800** | **56** | **17,775** | **84,790** |

### ການສຳຫຼວດແບບບໍ່ແມ່ນວິຊາການ (NTS)

| ແຂວງ | ຈນ ບ້ານ | ຈນ ຄັ້ງ | ຈຸດຫຼັກຖານ | ລະເບີດລູກຫວ່ານ | ຜູ້ໄດ້ຮັບຜົນປະໂຫຍດ |
|---|---|---|---|---|---|
| ເຊກອງ | 5 | 5 | 9 | 36 | 4,043 |
| ໄຊສົມບູນ | - | - | - | - | - |
| ຄໍາມ່ວນ | 39 | 39 | 35 | 373 | 2,037 |
| ຈໍາປາສັກ | 11 | 11 | 6 | 67 | 9,529 |
| ສາລະວັນ | 14 | 14 | 15 | 41 | 4,887 |
| ສະຫວັນນະເຂດ | 109 | 110 | 39 | 107 | 7,230 |
| ຊຽງຂວາງ | 36 | 36 | 39 | 250 | 11,404 |
| ນະຄອນຫຼວງວຽງຈັນ | - | - | - | - | - |
| ບໍ່ແກ້ວ | - | - | - | - | - |
| ບໍລິຄໍາໄຊ | 19 | 19 | 21 | 36 | 1,771 |
| ຜົ້ງສາລີ | - | - | - | - | - |
| ແຂວງວຽງຈັນ | 12 | 13 | 19 | 72 | 786 |
| ຫຼວງພະບາງ | 5 | 5 | 7 | 22 | 2,461 |
| ຫົວພັນ | 25 | 25 | 35 | 1,330 | 6,444 |
| ຫຼວງນໍ້າທາ | - | - | - | - | - |
| ອຸດົມໄຊ | - | - | - | - | - |
| ອັດຕະປື | 9 | 9 | 12 | 47 | 4,318 |
| **ລວມ** | **284** | **286** | **237** | **2,381** | **54,910** |

### ການສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ CHAs

| ແຂວງ | ຈນ ບ້ານ | ຈນ ຄັ້ງ | | ເນື້ອທີ່ (ເຮັກຕ້າ) | | ລບຕ | | | | |
|---|---|---|---|---|---|---|---|---|---|---|
| | | ການສຳຫຼວດແບບທາງການ | ພື້ນທີ່ ທີ່ມີ ລບຕ | ການສຳຫຼວດແບບທາງການ | ພື້ນທີ່ ທີ່ມີ ລບຕ | ລະເບີດບອມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລະເບີດຊະນິດອື່ນໆ | ລວມ |
| ເຊກອງ | 13 | 19 | 15 | 459.80 | 251.80 | 0 | 492 | 0 | 9 | 501 |
| ໄຊສົມບູນ | - | - | - | - | - | - | - | - | - | - |
| ຄໍາມ່ວນ | 21 | 41 | 65 | 1,616.98 | 1,364.24 | 0 | 721 | 0 | 28 | 749 |
| ຈໍາປາສັກ | 36 | 78 | 56 | 821.27 | 412.87 | 0 | 837 | 0 | 16 | 853 |
| ສາລະວັນ | 27 | 85 | 65 | 1,228.25 | 614.77 | 0 | 723 | 0 | 119 | 842 |
| ສະຫວັນນະເຂດ | 168 | 1,042 | 689 | 6,723.43 | 2,729.34 | 8 | 6,457 | 0 | 1,201 | 7,666 |
| ຊຽງຂວາງ | 82 | 230 | 223 | 17,852.60 | 16,555.87 | 0 | 11,600 | 0 | 449 | 12,049 |
| ນະຄອນຫຼວງວຽງຈັນ | - | - | - | - | - | - | - | - | - | - |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| ບໍ່ແກ້ວ | - | - | - | - | - | - | - | - | - | - |
| ບໍລິຄຳໄຊ | 11 | 29 | 3 | 234.00 | 12.45 | 0 | 25 | 0 | 3 | 28 |
| ຜົ້ງສາລີ | - | - | - | - | - | - | - | - | - | - |
| ແຂວງວຽງຈັນ | 7 | 8 | 2 | 65.25 | 16.00 | 2 | 17 | 0 | 3 | 22 |
| ຫຼວງພະບາງ | 9 | 33 | 35 | 431.75 | 223.03 | 0 | 504 | 2 | 188 | 694 |
| ຫົວພັນ | 34 | 55 | 46 | 680.00 | 362.80 | 0 | 504 | 2 | 188 | 694 |
| ຫຼວງນ້ຳທາ | - | - | - | - | - | - | - | - | - | - |
| ອຸດົມໄຊ | - | - | - | - | - | - | - | - | - | - |
| ອັດຕະປື | 24 | 38 | 32 | 456.50 | 287.60 | 0 | 571 | 0 | 22 | 593 |
| **ລວມ** | 432 | 1,658 | 1,239 | 30,299.83 | 22,830.78 | 10 | 22,299 | 2 | 2,156 | 24,467 |

### ຕົວເລກທັງໝົດຂອງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ໜ່ວຍປະຕິບັດງານໃນຊຸມຊົນ

| ແຂວງ | ຈນ ບ້ານ | ຈນ ຄັ້ງ | ຈນ ຜູ້ເຂົ້າຮ່ວມ | | |
|---|---|---|---|---|---|
| | | | ເພດຊາຍ | ເພດຍິງ | ລວມ |
| ເຊກອງ | 9 | 30 | 3,255 | 3,388 | 6,643 |
| ໄຊສົມບູນ | - | - | - | - | - |
| ຄຳມ່ວນ | 67 | 264 | 9,348 | 9,593 | 18,941 |
| ຈຳປາສັກ | 44 | 171 | 7,601 | 7,418 | 15,019 |
| ສາລະວັນ | 42 | 122 | 4,734 | 4,471 | 9,205 |
| ສະຫວັນນະເຂດ | 282 | 732 | 16,143 | 15,406 | 31,549 |
| ຊຽງຂວາງ | 81 | 261 | 15,772 | 16,514 | 32,286 |
| ນະຄອນຫຼວງວຽງຈັນ | - | - | - | - | - |
| ບໍ່ແກ້ວ | - | - | - | - | - |
| ບໍລິຄຳໄຊ | 21 | 29 | 3,337 | 2,934 | 6,271 |
| ຜົ້ງສາລີ | - | - | - | - | - |
| ແຂວງວຽງຈັນ | 7 | 7 | 1,298 | 1,116 | 2,414 |
| ຫຼວງພະບາງ | 35 | 101 | 10,334 | 10,707 | 21,041 |
| ຫົວພັນ | 52 | 200 | 17,678 | 17,216 | 34,894 |
| ຫຼວງນ້ຳທາ | - | - | - | - | - |
| ອຸດົມໄຊ | - | - | - | - | - |
| ອັດຕະປື | 43 | 124 | 12,086 | 11,727 | 23,813 |
| **ລວມ** | **683** | **2,041** | **101,586** | **100,490** | **202,076** |

## ອຸປະຕິເຫດ ແລະ ຜູ້ບາດເຈັບຈາກ ລບຕໃນປີ 2021

| ແຂວງ | ອຸປະຕິເຫດ | ບາດເຈັບ | | | | ເສຍຊີວິດ | | | | ລວມ |
|---|---|---|---|---|---|---|---|---|---|---|
| | | ເດັກຊາຍ | ເດັກຍິງ | ຜູ້ຊາຍ | ຜູ້ຍິງ | ເດັກຊາຍ | ເດັກຍິງ | ຜູ້ຊາຍ | ຜູ້ຍິງ | |
| ອັດຕະປື | 2 | 2 | 0 | 1 | 1 | 1 | 0 | 0 | 1 | 6 |
| ບໍ່ແກ້ວ | - | - | - | - | - | - | - | - | - | - |
| ບໍລິຄໍາໄຊ | - | - | - | - | - | - | - | - | - | - |
| ຈໍາປາສັກ | 4 | 0 | 0 | 6 | 0 | 0 | 0 | 4 | 0 | 10 |
| ຫົວພັນ | 1 | 0 | 0 | 0 | 0 | 0 | 0 | 1 | 0 | 1 |
| ຄໍາມ່ວນ | 4 | 1 | 0 | 3 | 0 | 0 | 0 | 0 | 0 | 4 |
| ຫຼວງນໍ້າທາ | - | - | - | - | - | - | - | - | - | - |
| ຫຼວງພະບາງ | 1 | 1 | 0 | 0 | 0 | 0 | 0 | 0 | 0 | 1 |
| ອຸດົມໄຊ | - | - | - | - | - | - | - | - | - | - |
| ຜົ້ງສາລີ | - | - | - | - | - | - | - | - | - | - |
| ສາລະວັນ | - | - | - | - | - | - | - | - | - | - |
| ສະຫວັນນະເຂດ | 12 | 7 | 3 | 2 | 3 | 2 | 0 | 2 | 1 | 20 |
| ແຂວງວຽງຈັນ | 2 | 3 | 0 | 0 | 1 | 2 | 0 | 0 | 0 | 6 |
| ນະຄອນຫຼວງວຽງຈັນ | - | - | - | - | - | - | - | - | - | - |
| ໄຊສົມບູນ | - | - | - | - | - | - | - | - | - | - |
| ເຊກອງ | 4 | 1 | 0 | 0 | 3 | 0 | 0 | 1 | 0 | 5 |
| ຊຽງຂວາງ | 5 | 1 | 5 | 2 | 1 | 1 | 0 | 0 | 0 | 10 |
| **ລວມ** | **35** | **15** | **8** | **15** | **9** | **6** | **0** | **8** | **2** | **63** |

## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ

| ແຂວງ | ຈນ ຄົນ | ຈນ ຄັ້ງ | ລວມ |
|---|---|---|---|
| ອັດຕະປື | 2 | 2 | 5,926,000 |
| ບໍ່ແກ້ວ | - | - | - |
| ບໍລິຄໍາໄຊ | 3 | 4 | 8,322,000 |
| ຈໍາປາສັກ | 3 | 3 | 13,799,000 |
| ຫົວພັນ | - | - | - |
| ຄໍາມ່ວນ | 15 | 19 | 70,975,000 |
| ຫຼວງນໍ້າທາ | 11 | 21 | 54,584,500 |
| ຫຼວງພະບາງ | - | - | - |
| ອຸດົມໄຊ | - | - | - |
| ຜົ້ງສາລີ | - | - | - |
| ສາລະວັນ | - | - | - |
| ສະຫວັນນະເຂດ | 6 | 9 | 27,180,000 |
| ແຂວງວຽງຈັນ | 1 | 1 | 2,341,000 |
| ນະຄອນຫຼວງວຽງຈັນ | 1 | 1 | 6,500,000 |
| ໄຊສົມບູນ | - | - | - |

| | | | |
|---|---|---|---|
| ເຊກອງ | - | - | - |
| ຊຽງຂວາງ | 4 | 4 | 15,667,000 |
| **ລວມ** | **46** | **64** | **205,294,500** |

### ບຸກຄະລາກອນໃນຂະແໜງການແກ້ໄຂບັນຫາ ລບຕ ໃນປີ 2021

| ພາກສ່ວນ | ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | | ລວມ |
|---|---|---|---|---|---|---|---|---|---|
| | ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | | |
| | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | |
| ຫຄຊກລ | 30 | 16 | 0 | 0 | 16 | 3 | 0 | 0 | **65** |
| ກອງ 58 | 2 | 24 | 0 | 0 | 158 | 4 | 0 | 0 | **188** |
| ຣາໂລ | 42 | 32 | 1 | 1 | 459 | 491 | 5 | 0 | **1,031** |
| ເຫັດໄອ | 10 | 2 | 1 | 0 | 35 | 27 | 1 | 0 | **73** |
| ແມັກ | 45 | 29 | 2 | 3 | 740 | 419 | 8 | 0 | **1,246** |
| ເອັນພີເອ | 30 | 13 | 2 | 2 | 248 | 134 | 3 | 0 | **432** |
| ອົງການເທີຣ່າ | 1 | 3 | 0 | 0 | 1 | 3 | 1 | 0 | **9** |
| ຄກລ | 118 | 74 | 11 | 0 | 918 | 344 | 1 | 0 | **1466** |
| ດັບເບີ້ນຢູອີ | 2 | 4 | 0 | 0 | 11 | 8 | 1 | 3 | **29** |
| ໂຄບ | 2 | 5 | 0 | 0 | 0 | 0 | 2 | 0 | **9** |
| ອອດສລາວ | 2 | 3 | 0 | 0 | 25 | 0 | 0 | 0 | **30** |
| ລາວ ບີເອັສແອລ | 2 | 1 | 0 | 0 | 12 | 0 | 0 | 0 | **15** |
| ແອລເອັກເອັມແອລ | 2 | 2 | 2 | 0 | 78 | 46 | 0 | 0 | **130** |
| ມິວເຊີດສ໌ | 3 | 6 | 1 | 1 | 80 | 24 | 3 | 0 | **118** |
| ອູມມາ | 4 | 0 | 0 | 0 | 26 | 1 | 0 | 0 | **31** |
| **ລວມ** | | | | | | | | | **4872** |

## SECTOR TREND (2011-2021)

**ອີງການປະຕິບັດງານ ເພື່ອມະນຸດສະທຳ - ລບຕ ທີ່ພົບເຫັນ ແລະ ຖືກທຳລາຍ ທີ່ຜ່ານຂະບວນການກວດກູ້ ລບຕ, 2011-2020**

| ປີ | ເນື້ອທີ່ກວດກູ້ (ເຮັກຕ້າ) | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ | ລະເບີດລູກຫວ່ານ ທີ່ພົບ ຕໍ່ ເຮັກຕ້າ |
|---|---|---|---|---|---|---|---|
| 2011 | 3,692 | 22 | 19,088 | 96 | 19,683 | 38,889 | 5.2 |
| 2012 | 3,823 | 60 | 26,011 | 18 | 17,318 | 43,407 | 6.8 |
| 2013 | 3,288 | 28 | 22,847 | 48 | 20,626 | 43,549 | 6.9 |
| 2014 | 3,662 | 36 | 26,566 | 78 | 17,697 | 44,377 | 7.3 |
| 2015 | 2,961 | 55 | 49,497 | 108 | 13,162 | 62,822 | 16.7 |
| 2016 | 3,315 | 43 | 61,144 | 1 | 15,503 | 76,691 | 18.4 |
| 2017 | 3,852 | 20 | 64,241 | 16 | 16,462 | 80,739 | 16.7 |
| 2018 | 3,670 | 35 | 45,441 | 5 | 11,740 | 57,221 | 12.4 |
| 2019 | 4,577 | 30 | 42,085 | 4 | 11,081 | 53,200 | 9.2 |
| 2020 | 4,302 | 23 | 38,862 | 4 | 10,355 | 49,244 | 9.03 |
| 2021 | 4.755 | 159 | 66,800 | 56 | 17,775 | 84,790 | 14.05 |


ລະເບີດລູກຫວ່ານ (CM) and ລບຕ ທັງໝົດ ທີ່ເກັບກູ້ຕໍ່ປີ(Total UXO)
90,000
80,000
70,000
60,000
50,000
40,000
30,000
20,000
10,000
0
38,889
43,407
43,549
44,377
62,822
76,691
80,739
57,221
53,200
49,244
51,079
19,088
26,011
22,847
26,566
49,497
61,144
64,241
45,441
42,085
38,862
39,973
2011
2012
2013
2014
2015
2016
2017
2018
2019
2020
2021
CM
Total UXO


ຈຳນວນເນື້ອທີ່ກວດກູ້ທັງໝົດ (ha)
5000
4500
4000
3500
3000
2500
2000
1500
1000
500
0
2011
2012
2013
2014
2015
2016
2017
2018
2019
2020
2021
Area cleared (ha)


ການເກັບກູ້ລະເບີດຕໍ່ເຮັກຕາ
20
18
16
14
12
10
8
6
4
2
0
2011
2012
2013
2014
2015
2016
2017
2018
2019
2020
2021
CM/ha

| ຈຳນວນອຸປະຕິເຫດ ແລະ ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ຢູ່ ສປປ ລາວ ແຕ່ປີ 2011-2021 | | | | | | | | | | |
|---|---|---|---|---|---|---|---|---|---|---|
| ປີ | ຈຳນວນ ອຸປະຕິເຫດ | ຈຳນວນຜູ້ບາດເຈັບ | | | | ຈຳນວນຜູ້ເສຍຊີວິດ | | | | ລວມຜູ້ບາດເຈັບ ແລະ ເສຍຊີວິດ |
| | | ຊາຍ | ຍິງ | ເດັກຊາຍ | ເດັກຍິງ | ຊາຍ | ຍິງ | ເດັກຊາຍ | ເດັກຍິງ | |
| 2011 | 64 | 32 | 9 | 34 | 4 | 6 | 0 | 14 | 0 | ***99*** |
| 2012 | 36 | 17 | 11 | 11 | 2 | 6 | 1 | 6 | 2 | ***56*** |
| 2013 | 18 | 9 | 2 | 12 | 5 | 5 | 0 | 7 | 1 | ***41*** |
| 2014 | 22 | 8 | 5 | 9 | 7 | 4 | 0 | 12 | 0 | ***45*** |
| 2015 | 27 | 15 | 1 | 16 | 1 | 6 | 1 | 2 | 0 | ***42*** |
| 2016 | 35 | 17 | 3 | 24 | 5 | 2 | 0 | 8 | 0 | ***59*** |
| 2017 | 19 | 12 | 8 | 11 | 6 | 3 | 0 | 0 | 1 | ***41*** |
| 2018 | 17 | 4 | 8 | 4 | 5 | 2 | 1 | 0 | 0 | ***24*** |
| 2019 | 20 | 5 | 2 | 4 | 5 | 8 | 0 | 1 | 0 | ***25*** |
| 2020 | 23 | 12 | 10 | 2 | 2 | 5 | 2 | 0 | 0 | ***33*** |
| 2021 | 35 | 15 | 8 | 15 | 9 | 6 | 0 | 8 | 2 | ***63*** |




| ສາເຫດການເກີດອຸປະຕິເຫດຈາກ ລບຕ ແຕ່ປີ 2015 – 2022 | | | | | | | |
|---|---|---|---|---|---|---|---|
| **ສາເຫດ** | **2015** | **2016** | **2017** | **2018** | **2019** | **2020** | **2021** |
| ເຮັດກະສິກຳ | 5 | 6 | 2 | 2 | 2 | 5 | 6 |
| ດັງໄຟ (ແຕ່ງການ ແລະ ຖາງປ່າເຮັດໄຮ່) | 13 | 11 | 11 | 3 | 9 | 10 | 14 |

| | | | | | | | |
|---|---|---|---|---|---|---|---|
| ແກະມ້າງລະເບີດ | 6 | 2 | 2 | 2 | 3 | 2 | 3 |
| ຈັບບາຍ ໂຍນຫຼິ້ນລູກລະເບີດ | 2 | 12 | 1 | 5 | 3 | 4 | 6 |
| ຕັດຫຍ້າ ແລະ ຕັດໄມ້ | 0 | 1 | 1 | 0 | 0 | 2 | 2 |
| ຖືກລືບກວຍໂດຍບໍ່ໄດ້ຕັ້ງໃຈ | 1 | 4 | 1 | 5 | 4 | 0 | 4 |
| **ລວມທັງຫມົດ** | **27** | **36** | **18** | **17** | **21** | **23** | **35** |

| ເນື້ອທີ່ກວດກູ້ ບລຕ ແຍກເປັນແຂວງ ແຕ່ປີ 1997 - 2021 | | | | | |
|---|---|---|---|---|---|
| ແຂວງ | ເນື້ອທີ່ກວດກູ້ (ເຮັກຕ້າ) | ປະເພດເນື້ອທີ່ກວດກູ້ ລບຕ | | | |
| | | ພື້ນທີ່ກະສິກຳ (ເຮັກຕ້າ) | ພື້ນທີ່ກະສິກຳ (ເປີເຊັນ) | ພື້ນທີ່ພັດທະນາ (ເຮັກຕ້າ) | ພື້ນທີ່ພັດທະນາ (ເປີເຊັນ) |
| ອັດຕະປື | 6,558 | 4,602 | 70% | 1,956 | 30% |
| ບໍ່ແກ້ວ | 80 | 0 | 0% | 80 | 100% |
| ບໍລິຄຳໄຊ | 3,063 | 664 | 22% | 2,399 | 78% |
| ຈຳປາສັກ | 6,029 | 4,328 | 72% | 1,701 | 28% |
| ຫົວພັນ | 3,962 | 3,491 | 88% | 471 | 12% |
| ຄຳມ່ວນ | 9,159 | 7,579 | 83% | 1,580 | 17% |
| ຫຼວງນ້ຳທາ | 9 | 0 | 0% | 9 | 100% |
| ຫຼວງພະບາງ | 3,924 | 3,057 | 78% | 867 | 22% |
| ອຸດົມໄຊ | 128 | 0 | 0% | 128 | 100% |
| ສາລະວັນ | 6,780 | 5,754 | 85% | 1,026 | 15% |
| ສະຫວັນນະເຂດ | 11,675 | 9,724 | 83% | 1,951 | 17% |
| ແຂວງວຽງຈັນ | 64 | 1 | 2% | 63 | 98% |
| ນະຄອນຫຼວງວຽງຈັນ | 134 | 0 | 0% | 134 | 100% |
| ໄຊສົມບູນ | 1,834 | 571 | 31% | 1,263 | 69% |
| ເຊກອງ | 4,761 | 3,483 | 73% | 1,278 | 27% |
| ຊຽງຂວາງ | 15,279 | 13,392 | 88% | 1,887 | 12% |
| **ລວມທັງໝົດ** | **73,439** | **56,646** | **77%** | **16,793** | **23%** |

## ການເງິນ ແລະ ການລະດົມທຶນ ໃນປີ 2021:

### ສັງລວມລາຍຈ່າຍຕົວຈິງຂອງຂະແໜງການແກ້ໄຂບັນຫາ ລບຕ (ໂດລາສະຫະລັດ)

### ແຕ່ວັນທີ 1 ມັງກອນ ເຖິງ 31 ທັນວາ 2021

| ພາກສ່ວນ | ເງິນສະໜັບສະໜູນ | ຄ່າໃຊ້ຈ່າຍທັງຫມົດ |
|---|---:|---:|
| ລັດຖະບານ | | |
| ຫ້ອງການ ຄຊກລ | 1.219.256 | 1,649,555 |
| ຄກລ | 8,008,737 | 9,168,324 |
| **ລວມ** | ***9,227,994*** | ***10,817,879*** |
| ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (ອົງການປະຕິບັດງານ) | | |
| ໂຄບ | 556,000 | 556,000 |
| ຮາໄລ | 8,497,285 | 9,884,154 |
| ເຫັດໄອ | 654,582 | 654,582 |
| ແມັກ | 10,301,749 | 10,301,749 |
| ເອັນພີເອ | 7,691,243 | 6,683,182 |
| ອົງການເທີຣ່າ | 216,394 | 216,394 |
| ດັບເບີ້ນຢູອີ | 1,072,694 | 1,072,694 |
| **ລວມ** | ***28,989,947*** | ***29,228,755*** |
| ບໍລິສັດເກັບກູ້ລະເບີດຂອງລາວ ແລະ ຕ່າງປະເທດ | | |
| ລາວ ບີເອັສແອລ | 15,200 | 15,200 |
| ຊູມມາ | 0 | 0 |
| ແອລເອັກເອັມແອລ | 3,139,275 | 3,139,275 |
| ອອດສ໌ລາວ | 50,000 | 48,000 |
| ມີວເຊີດສ໌ | 1,205,454 | 1,333,000 |
| **ລວມ** | ***4,405.629*** | ***4,535,975*** |
| ***Grand Total*** | **42,627,870** | **44,582,609** |

### ສະຫຼຸບທຶນສົບທົບທີ່ໄດ້ຮັບ (ເປັນ ໂດລ້າສະຫະລັດ)

### ແຕ່ວັນທີ 1 ມັງກອນ ເຖິງ 31 ທັນວາ 2021

| ພາກສ່ວນ | ຈຳນວນທັງຫມົດ |
|---|---:|
| ຄຊກລ | 18,000 |
| ຄກລ | 170,041 |
| ໜ່ວຍງານ 58 | ເງິນເດືອນຂອງໜ່ວຍງານ 58 ແມ່ນຂຶ້ນກັບກະຊວງປ້ອງກັນຊາດ |
| **ລວມ** | **188,041** |

### ໜ່ວຍປະຕິບັດງານກວດກູ້ລະເບີດດ້ານມະນຸດສະທຳ
### ບົດສະຫຼຸບການປະກອບສ່ວນເງິນສົດທີ່ໄດ້ຮັບຈາກແຫຼ່ງທຶນ (ເປັນ ໂດລ້າສະຫະລັດ)
### ແຕ່ວັນທີ 1 ມັງກອນ ເຖິງ 31 ທັນວາ 2021

| ແຫຼ່ງທຶນ | ຈຳນວນ |
|---|---|
| ການຮ່ວມມືສອງຝ່າຍ | |
| Dutch Ministry of Foreign Affairs (BZ) | 654,582 |
| Fagforbundet (the Norweigian Union of Municipal and General Employees) | 37,037 |
| 4th Greater Mekong Sub-Region Corridor Towns Development | 9,000 |
| Freeman Foundation | 231,682 |
| ISO-ITO | 10,000 |
| Japan International Cooperation System (JICS) | 1,094,054 |
| Japan Mine Action Service (JMAS) | 134,610 |
| Luxembourg Aid and Development through its development cooperation agency LuxDev | 95,371 |
| LXML | 3,139,275 |
| MAG Headquarters | 90,000 |
| Milsearch-Clients | 1,205,454 |
| ກະຊວງການຕ່າງປະເທດຂອງຍີ່ປຸ່ນ | 216,394 |
| ເຂື່ອນນ້ຳພາກ | 50,000 |
| ສະຖານທູດ ນິວຊີແລນ | 16,000 |
| ນໍອກແວ | 230,000 |
| ກະຊວງການຕ່າງປະເທດນໍອກແວ | 1,180,569 |
| ສະຖານທູດ ຍີ່ປຸ່ນ | 95,218 |
| The United Kingdom's Foreign, Commonwealth and Development Office (FCDO) | 2,342,194 |
| United Methodist Committee on Relief of the General Board of Global Ministries of the United Methodist Church (UMCOR) | 43,206 |
| U.S. Agency for International Development (USAID) | 837,645 |
| US Army Corps Engineers, Alaska, U.S. | 1,450 |
| U.S. State Department, Bureau of Political-Military Affairs Weapons Removal and Abatement (PM/WRA) | 22,375,000 |
| ສ.ອາເມລິກາ | 535,049 |
| ເທັດທາເທັກ | 5,436,295 |
| ເວີລວິດດາວມາຍ (WWM) | 153,754 |

| | |
|---|---|
| *ລວມ* | *40,213,839* |
| ການຈັດສັນທຶນໂດຍອີງການ ສປຊ ເພື່ອການພັດທະນາ | |
| ໄອແລນ | 323,535 |
| ກອຍກາ | 939,033 |
| ນິວຊີແລນ | 1,140,077 |
| ລຸກຊໍາບວກ | 3,572 |
| *ລວມ* | *2,406,217* |
| ການປະກອບສ່ວນຂອງລັດຖະບານ ແລະ ພາກສ່ວນອື່ນໆ | |
| ລັດຖະບານລາວ | 4,750 |
| ອື່ນໆ | 3,064 |
| *ລວມ* | *7,814* |
| **ລວມທັງໝົດ** | **42,627,870** |

## ຂະແໜງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ

1. ສົນທິສັນຍາ ແລະ ມາດຕະຖານສາກົນ

**1) ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ:**

ຈຸດປະສົງ: ຫ້າມນຳໃຊ້ ແລະ ສະສົມລະເບີດລູກຫວ່ານ ທີ່ສ້າງ ຄວາມເຈັບປວດທໍລະມານໃຫ້ແກ່ປະຊາຊົນພົນລະເຮືອນອັນ ເປັນທີ່ຍອມຮັບບໍ່ໄດ້ ແລະ ຮັບປະກັນໃຫ້ມີຂໍ້ບັງຄັບຢ່າງພຽງພໍ ກ່ຽວກັບການດູແລປິ່ນປົວ ແລະ ຟື້ນຟູຜູ້ລອດຊີວິດຈາກລະເບີດ ລູກຫວ່ານ ແລະ ການເກັບກູ້ ລບຕ ຈາກບໍລິເວນທີ່ໄດ້ຮັບຜົນກະທົບ.

ພັນທະຕົ້ນຕໍຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດ ລູກຫວ່ານ ສຳລັບແຕ່ລະລັດພາຄີ ແມ່ນ:

- ເກັບກູ້ລະເບີດ ອອກຈາກບໍລິເວນທີ່ຮູ້ວ່າ ຖືກຜົນກະທົບໃຫ້ສຳ ເລັດ ພາຍໃນເວລາ 10 ປີ ທີ່ໄດ້ລະບຸໄວ້ໃນສັນຍາ. ໃນກໍລະນີທີ່ບໍ່ສາມາດປະຕິບັດງານໄດ້, ລັດທີ່ໄດ້ຮັບຜົນກະທົບສາມາດຕໍ່ສັນຍາໄດ້.
- ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອຮັບ ປະກັນຄວາມຮັບຮູ້ຂອງພົນລະເຮືອນທີ່ດຳລົງຊີວິດຢູ່ໃນພື້ນ ທີ່ໄດ້ຮັບຜົນກະທົບຈາກລະເບີດລູກຫວ່ານ.
- ແຕ່ງຕັ້ງຈຸດປະສານງານຂອງລັດຖະບານ ໃນການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກ ລບຕ.
- ເກັບກຳຂໍ້ມູນຕົວຈິງທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍຈາກລະ ເບີດລູກຫວ່ານ ແລະ ສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ຖືກ ເຄາະຮ້າຍ ໂດຍປະກອບມີ ການປິ່ນປົວການແພດ, ການ ຟື້ນຟູໜ້າທີ່ການ ແລະ ສຸຂະພາບຈິດ ພ້ອມທັງ ສະໜອງການ ສ້າງເສດຖະກິດ ແລະ ການມີສ່ວນຮ່ວມໃນສັງຄົມ.

ພັນທະດັ່ງກ່າວຂ້າງເທິງ ແມ່ນເປັນສິ່ງທ້າທາຍຕົ້ນຕໍ ທີ່ລັດຖະບານ ສປປ ລາວ ຈະຕ້ອງໄດ້ເຮັດວຽກກັບຄູ່ຮ່ວມພັດທະນາ ເພື່ອບັນ ລຸພັນທະຕ່າງໆ.

**2) ສົນທິສັນຍາ ວ່າດ້ວຍອາວຸດທົ່ວໄປ:**

ສົນທິສັນຍາ ວ່າດ້ວຍອາວຸດທົ່ວໄປ ໄດ້ຖືກສ້າງຂຶ້ນໃນວັນທີ 10 ຕຸລາ 1980, ທີ່ນະຄອນເຈນີວາ, ສະວິດເຊີແລນ ແລະ ມີຜົນບັງຄັບໃຊ້ໃນເດືອນທັນວາ 1983. ສົນທິສັນຍາແມ່ນໄດ້ ກຳນົດການຫ້າມ ຫຼື ນຳໃຊ້ອາວຸດທົ່ວໄປບາງຊະນິດ ທີ່ພິຈາ ລະນາວ່າເປັນອັນຕະລາຍ ແລະ ສິ່ງຜົນກະທົບຫຼາຍເກີນໄປ.

ຈຸດປະສົງຂອງສົນທິສັນຍາ ແມ່ນ ຫ້າມ ຫຼື ຈຳກັດການນຳໃຊ້ ອາວຸດສະເພາະຊະນິດໃດໜຶ່ງ ທີ່ຖືວ່າເຮັດໃຫ້ເກີດຄວາມທຸກ ທຸກທໍລະມານ ຫຼື ບໍ່ສົມເຫດສົມຜົນ ຕໍ່ກັບນັກຮົບ ຫຼື ຈະສົ່ງຜົນ ກະທົບຕໍ່ພົນລະເຮືອນ.

**3) ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ:**

ຈຸດປະສົງ: ເພື່ອສົ່ງເສີມ, ປົກປ້ອງ ແລະ ຮັບປະກັນຄວາມເທົ່າ ທຽມທາງດ້ານສິດທະມະນຸດ, ສິດເສລີພາບຂັ້ນພື້ນຖານ ແລະ ເຄົາລົບກຽດສັກສີຂອງຜູ້ເສຍອົງຄະທັງໝົດ. ສປປ ລາວ ໄດ້ລົງນາມໃນສົນທິສັນຍາດັ່ງກ່າວ ໃນວັນທີ 15 ມັງກອນ 2008 ແລະ ໃຫ້ສັດຕະຍາບັນ ໃນວັນທີ 25 ກັນຍາ 2009. ສົນທິສັນຍາສະບັບນີ້ ມີຄວາມສຳຄັນຕໍ່ການຊ່ວຍເຫຼືອຜູ້ລອດຊີ ວິດຈາກ ລບຕ.

ສປປ ລາວ ຕ້ອງໄດ້ມີການຮ່າງນິຕິກຳພາຍໃນຂອງຕົນເອງຂຶ້ນ ເພື່ອລວມເອົາບັນດາພັນທະຕ່າງໆຂອງສົນທິສັນ ດັ່ງກ່າວ ເຂົ້າໃນລະບົບຕຸລາການຂັ້ນຕ່າງໆຂອງທ້ອງຖິ່ນ. ຂະ ບວ ນການສ້າງນິຕິກຳແມ່ນສຳເລັດແລ້ວ ໂດຍມີດຳລັດຂອງທ່ານນາ ຍົກລັດຖະມົນຕີ ວ່າດ້ວຍຄະນະກຳມະການແຫ່ງຊາດ ເພື່ອຄົນພິ ການ ສ້າງຕັ້ງຂຶ້ນໃນເດືອນກັນຍາ 2009. ດຳລັດດັ່ງກ່າວ ແມ່ນໄດ້ ປັບປຸງແທນເອກະສານສະບັບປີ 1995 ໂດຍໄດ້ມີການກຳນົດໜ້າທີ່ເພີ່ມຕື່ມໃຫ້ແກ່ຄະນະກຳມະການທີ່ມີຢູ່ແລ້ວ ພ້ອມທັງ ໄດ້ມີການ ກຳນົດຈຸດປະສານງານຂອງລັດຖະບານ ເພື່ອປະສານງານໃນການ ເຊື່ອມສານວຽກງານດ້ານຕ່າງໆ ແລະ ຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍຄົນພິການ. ນອກຈາກນັ້ນ, ຄະນະກຳມະການດັ່ງກ່າວ ຈະໄດ້ນຳພາໃນການສ້າງເຄື່ອງມືທາງດ້ານກົດໝາຍຂຶ້ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມພັນທະຂອງສົນທິ ສັນຍາໄດ້ຢ່າງເຕັມສ່ວນ. ສິ່ງສຳຄັນ, ຜູ້ສະໜອງການຊ່ວຍ ເຫຼືອຜູ້ຖືກເຄາະຮາຍຈາກ ລບຕ ຢູ່ໃນ ສປປ ລາວ ຈະສາມາດ ເລີ່ມຕົ້ນໃນການ

ເຊື່ອມສານວຽກງານການຊ່ວຍເຫຼືອຜູ້ຖືກ ເຄາະຮ້າຍເຂົ້າໃນຍຸດສາດຂອງເຂົາເຈົ້າ ໂດຍສອດຄ່ອງຕາມ ຫຼັກການຂອງສົນທິສັນຍາ ເພື່ອປະກອບສ່ວນໃຫ້ລັດຖະບານ ສປປ ລາວ ປະຕິບັດພັນທະຂອງສົນທິສັນຍາໄດ້ ເຊັ່ນ:

- ມີນິຕິກຳ ແລະ ນະໂຍບາຍໃນການຈັດຕັ້ງປະຕິບັດ ສົນທິ ສັນຍາ ແລະ ຕ້ອງມີຂະບວນການຕ່າງໆໃນການຕັດສິນ ບັນຫາທີ່ກ່ຽວຂ້ອງກັບຄົນພິການ. ລັດພາຄີຈະຕ້ອງປຶກ ມີການປຶກສາຫາລືຢ່າງໃກ້ຊິດ ແລະ ມີສ່ວນຮ່ວມຢ່າງຈິງ ຈັງກັບຄົນພິການ ລວມທັງ ເດັກພິການ ໂດຍຜ່ານອົງ ການຕົວແທນຂອງເຂົາເຈົ້າ
- ເພື່ອເປັນການເອື້ອອຳນວຍໃຫ້ແກ່ການປະຕິບັດສິດທິ ຂອງຄົນພິການ ແລະ ຖ້າຍັງມີສິ່ງໃດທີ່ເຫັນວ່າ ຍັງບໍ່ທັນ ໄດ້ມີການລະບຸໄວ້ໃນສົນທິສັນຍາສະບັບນີ້, ກໍ່ອາດຈະ ບັນຈຸເຂົ້າຢູ່ໃນກົດໝາຍຂອງລັດພາຄີ ຫຼື ກົດໝາຍສາກົນ ທີ່ມີການບັງຄັບໃຊ້ ສຳລັບລັດພາຄີນັ້ນໆ ໄດ້.
- ຈະບໍ່ມີການຈຳກັດສິດທິມະນຸດ ຫຼື ເສລີພາບຂັ້ນພື້ນຖານ ໃດໆຂອງຄົນພິການໃຫ້ໜ້ອຍລົງ, ຊຶ່ງແຕ່ລະລັດພາຄີ ຂອງສົນທິສັນຍາສະບັບນີ້ ຕ້ອງປະຕິລັດສອດຄ່ອງຕາມ ກົດໝາຍ, ສົນທິສັນຍາ, ລະບຽບການ ຫຼື ຮີດຄອງປະເພນີ ໂດຍຈະບໍ່ອ້າງເຫດຜົນວ່າ ສົນທິສັນຍາສະບັບນີ້ ບໍ່ຮັບຮູ້ ສິດຂອງຄົນພິການ ຫຼື ເສລີພາບ ຫຼື ຮັບຮູ້ເຂົາເຈົ້າໜ້ອຍ ລົງ.
- ຂໍ້ກຳນົດຕ່າງໆຂອງສົນທິສັນຍາສະບັບນີ້ ຈະຖືກຮັບຮູ້ ແລະ ເຜີຍແຜ່ໃຫ້ທົ່ວເຖິງທຸກພາກສ່ວນຂອງລັດລັດຖະ ບານ ໂດຍບໍ່ມີຂໍ້ຈຳ ກັດ ຫຼື ຂໍ້ຍົກເວັ້ນໃດໆ.

**4) ມາດຕະຖານສາກົນ ໃນການແກ້ໄຂບັນຫາລະເບີດຝັງດິນ (ໄອມາດສ໌)**

ມາດຕະຖານສາກົນ ໃນການແກ້ໄຂບັນຫາລະເບີດຝັງດິນ ແມ່ນມາດຕະຖານ ທີ່ມີຜົນບັງຄັບໃຊ້ສຳລັບການປະຕິບັດ ງານແກ້ໄຂບັນຫາລະເບີດຝັງດິນ ຂອງສະຫະປະຊາຊາດ.

ມາດຕະຖານດັ່ງກ່າວ ໃນເບື້ອງຕົ້ນໄດ້ຮັບການຮັບຮອງໂດຍ ກຸ່ມປະສານງານລະຫວ່າງອົງການສະຫະປະຊາຊາດ ກ່ຽວ ກັບການປະຕິບັດງານແກ້ໄຂບັນຫາລະເບີດຝັງດິນໃນປີ 2001, ຊຶ່ງມາຮອດດຽວນີ້ ມາດຕະຖານດັ່ງກ່າວ ຍັງຄົງຮັກສາໄວ້ ເພື່ອເປັນພື້ນຖານນຳໃຊ້ເຂົ້າການປະຕິບັດງານແກ້ໄຂບັນຫາລະ ເບີດຝັງດິນທັງໝົດ ມາແລ້ວຫຼາຍກວ່າ 17 ປີ.

ເພື່ອເປັນການກຳນົດມາດຕະຖານສຳລັບການປະຕິບັດງານ ພາກສະໜາມທົ່ວໂລກ, ຢູ່ໃນກອບແຜນວຽກຂອງມາດຕະຖານ ກົນ ໃນການແກ້ໄຂບັນຫາລະເບີດຝັງດິນ ໄດ້ມີການສືບຕໍ່ພັດທະນາ ຢ່າງຈິງຈັງ ກ່ຽວກັບມາດຕະຖານການຮັກສາຄວາມປອດໄພ, ຄຸນ ນະພາບ ແລະ ປະສິດທິພາບຂອງການດຳເນີນງານ ເພື່ອຮັບປະ ກັນຄວາມໝັ້ນໃຈໃນເວລາປະຕິບັດງານເກັບກູ້ລະເບີດຝັງດິນ.

ກອບແຜນວຽກຂອງມາດຕະຖານສາກົນ ໃນການແກ້ໄຂບັນຫາລະ ເບີດຝັງດິນ ແມ່ນໄດ້ສ້າງຂຶ້ນບົນພື້ນຖານເພື່ອເຮັດໃຫ້ສົນທິສັນຍາ ວ່າດ້ວຍລະເບີດຝັງດິນຕ້ານບຸກຄົນ ແລະ ສົນທິສັນຍາ ວ່າດ້ວຍກາ ນເກືອດຫ້າມລະເບີດລູກຫວ່ານ ສາມາດຈັດຕັ້ງປະຕິບັດໄດ້. ການ ນຳໃຊ້ແມ່ນໂດຍບັນດາປະເທດທີ່ໄດ້ຮັບຜົນກະທົບຈາກ ລະເບີດ ຝັງດິນ ແລະ ລບຕ ເພື່ອເປັນພື້ນຖານນຳໃຊ້ເຂົ້າໃນການພັດທະ ນາມາດຕະຖານແຫ່ງຊາດ ໃນການແກ້ໄຂບັນຫາລະເບີດຂອງປະ ເທດຕົນເອງ ແລະ ຂອງປະເທດຜູ້ໃຫ້ທຶນ ເພື່ອຮັບປະກັນວ່າ ທຶນ ການຊ່ວຍເຫຼືອຂອງປະເທດຜູ້ໃຫ້ທຶນ ແມ່ນຖືກນຳໃຊ້ເຂົ້າໃນວຽກ ງານແກ້ໄຂບັນຫາລະເບີດຢ່າງມີປະສິດທິຜົນ.

## 2. ກອບແຜນວຽກທາງດ້ານນິຕິກຳ, ນະໂຍບາຍ ແລະ ການຈັດຕັ້ງ

- **ດຳລັດແຫ່ງຊາດ:**

ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 67/ນຍ, ລົງ ວັນທີ 12 ກຸມພາ 2018 ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງ ຄຊກລ. ໃນມາດຕາ 2 ຂອງດຳລັດສະບັບ ດັ່ງກ່າວ ໄດ້ກຳນົດພາລະບົດບາດຂອງ ຄຊກລ ເປັນເສນາ ທິການໃນການຊ່ວຍວຽກໃຫ້ແກ່ລັດຖະບານ ສປປ ລາວ ໃນ ການຄົ້ນຄ້ວາສ້າງ, ຊີ້ນຳ ແລະ ປະສານງານກັບບັນດາກະ ຊວງຕ່າງໆ, ອົງການ

ປົກຄອງທ້ອງຖິ່ນ ແລະ ສາກົນ ໃນການ ແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ໃນຂອບເຂດ ທົ່ວປະເທດ.

ເຖິງຢ່າງໃດກໍຕາມ, ປະຈຸບັນມີດຳລັດສະບັບໃໝ່ກ່ຽວກັບຂະແໜງການລະເບີດບໍ່ທັນແຕກທີ່ຈະບັງຄັບໃຊ້ໃນໄວໆນີ້. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຄຊກລ ໄດ້ມີການປັບປຸງ. ມາດຕາ 67 ຂອງດຳລັດວ່າດ້ວຍອົງການຄຸ້ມຄອງການເກັບກູ້ລະເບີດບໍ່ທັນແຕກສະບັບໃໝ່ ໄດ້ກຳນົດ 4 ຂັ້ນຕອນດັ່ງລຸ່ມນີ້: ຄະນະກຳມະການຄຸ້ມຄອງຂັ້ນສູນກາງ, ຄະນະກຳມະການຄຸ້ມຄອງຂັ້ນແຂວງ, ຄະນະກຳມະການຄຸ້ມຄອງຂັ້ນເມືອງ ແລະ ເຄືອຂ່າຍຂັ້ນບ້ານຕໍ່ບ້ານ.

ໜ້າທີ່ຕົ້ນຕໍຂອງ ຫຄຊກລ "ເປັນເສນາທິການຊ່ວຍລັດຖະບານ ໃນການກວດກາ, ຄວບຄຸມ ແລະ ປະສານງານກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນທຸກຂັ້ນ ເພື່ອແກ້ໄຂບັນຫາ ລບຕ ໃນທົ່ວປະເທດ". ເຖິງຢ່າງໃດກໍຕາມ, ໜ້າທີ່ຂອງຫ້ອງການ ຄຊກລ ກຳລັງຢູ່ໃນຂັ້ນຕອນການດັດແກ້ ແລະ ການປັບປຸງແປງການຈັດຕັ້ງຈຳນວນໜຶ່ງ ເນື່ອງຈາກ ສູນຝຶກອົບຮົມລະເບີດບໍ່ທັນແຕກແຫ່ງຊາດ ໄດ້ຍ້າຍຈາກ ຄກລ ມາຢູ່ພາຍໃຕ້ຂອງ ຄຊກລ.

## ຜົນສຳເລັດຂອງຂະແໜງການແກ້ໄຂບັນຫາ ລບຕ : ການລິເລີ່ມເສັ້ນທາງສູ່ຄວາມປອດໄພ III ໄລຍະ 2021-2030.

(ຮ່າງ) ບົດຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ "ເສັ້ນທາງກ້າວສູ່ຄວາມປອດໄພ III" (SPF III) ສະບັບລ້າສຸດ ສ້າງຂຶ້ນໂດຍການຕົກລົງເຫັນດີ ແລະ ການຮ່ວມມືຈາກທຸກພາກສ່ວນທີ່ກ່ຽວຂ້ອງ. ເຊິ່ງໃນເອກະສານຂອງ SPF III ສະບັບນີ້ໄດ້ອະທິບາຍເປົ້າໝາຍຂອງ ລັດຖະບານລາວ ເພື່ອສຸມໃສ່ການແກ້ໄຂບັນຫາ ລບຕ ໃນອີກ 10 ປີຂ້າງໜ້າ.

- **ວິໄສທັດໃນອີກ 10 ຂ້າງໜ້າ ທີ່ສອງຄ່ອງກັບເອກະສານແຜນຍຸດທະສາດ SPF III:**

ຮອດປີ 2030, ປະຊາຊົນລາວບັນດາເຜົ່າ ດຳລົງຊີວິດທີ່ປອດໄພຈາກ ລບຕ ຫຼາຍຂຶ້ນ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

- **ຫຼັກການລວມ:**

ຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ "ເສັ້ນທາງກ້າວສູ່ຄວາມປອດໄພ III" ສ້າງຂຶ້ນໂດຍສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ຮັບປະກັນຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້, ນຳໃຊ້ເຄື່ອງມື, ວິທີການທີ່ທັນໄໝ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ.

- **ເປົ້າໝາຍລວມ:**

ຮອດປີ 2030, ຮັບປະກັນໃຫ້ປະຊາຊົນ ດຳລົງຊີວິດ ໃນເຂດທີ່ມີຄວາມສ່ຽງ ປອດໄພຈາກ ລບຕ, ວຽກງານແກ້ໄຂບັນຫາ ລບຕ ໄດ້ຮັບການພັດທະນາຢ່າງມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ.

- **ຍຸດທະສາດສະບັບນີ້ ໄດ້ກຳນົດ 4 ເປົ້າໝາຍຕົ້ນຕໍ** ດັ່ງນີ້:

**ເປົ້າໝາຍ 1**: ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈດີເຖິງຄວາມອັນຕະລາຍຂອງລະເບີດບໍ່ທັນແຕກທີ່ຕົກຄ້າງ; ຊຸມຊົນມີຄວາມປອດໄພກວ່າເກົ່າ ແລະ ຫຼຸດຜ່ອນການການເສຍຊີວິດ;

**ເປົ້າໝາຍ 2**: ພື້ນທີ່ດິນມີຄວາມປອດໄພຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ;

**ເປົ້າໝາຍ 3**: ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ໄດ້ຮັບການຊ່ວຍເຫຼືອທັງໝົດ;

**ເປົ້າໝາຍ 4**: ການຄຸ້ມຄອງບໍລິຫານວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ມີຄວາມຄ່ອງຕົວ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນ.

- **ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, 2021-2025**

ຢູ່ໃນ ສປປ ລາວ,ປະຈຸບັນ ບັນຫາ ລບຕ ກໍາລັງພິຈາລະນາເປັນບັນຫາສໍາຄັນທີ່ຂັດຂວາງການພັດທະນາໃນທຸກຂະແໜງການ ໂຍດສະເພາະແມ່ນແຜນພັດທະນາເສດຖະກິດ-ສັງຄັງ ຄັ້ງທີ 9 (2021-2025). ມອບໃຫ້ຂະແໜງແກ້ໄຂບັນຫາ ລບຕ ເປັນຜູ້ຮັບຜິດຊອບໃນການສ້າງຜົນຜະລິດ ("ຜົນຜະລິດທີ 5: ການກວດກູ້ ລບຕ ແລະ ຊີວິດປອດໄພຈາກ ລບຕ" ຢູ່ພາຍໃຕ້ "ຜົນໄດ້ຮັບ 3: ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ" ອີງຕາມຮ່າງສະບັບທີ 4 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບທີ 9 ນໍາມົດໂດຍລັດຖະບານ ສປປ ລາວ ໃນເດືອນພະຈິກ 2020) ຈະຍົກບັນຫາ ລບຕ ຂຶ້ນສູ່ລະດັບຊາດ, ເພີ່ມທະວີຄວາມຮັບຮູ້ ແລະ ເຂົ້າໃຈເຖິງຄວາມສໍາຄັນຂອງ SDG 18. ໃນນີ້, ແຜນຍຸດທະສາດວ່າດ້ວຍການແກ້ໄຂບັນຫາ ລບຕ "ເສັ້ນທາງສູ່ຄວາມປອດໄພ III" ໄລຍະ 2021-2030 ແລະ "ແຜນປະຕິບັດງານໄລຍະ 5 ປີ (2021-2025)" ກໍາລັງໄດ້ຮັບການທົບທວນ ແລະ ປັບປຸງ ເພື່ອຮັບປະກັນຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9, ພ້ອມທັງ ຍຸດທະສາດຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແຫ່ງຊາດ. ດັ່ງຕາຕະລາງທີ 1 ດ້ານລຸ່ມນີ້

| | |
|---|---|
| ຄາດໝາຍ ແລະ ຕົວຊີ້ວັດ1[1] | - ຫຼຸດຜ່ອນຈໍານວນຜູ້ໄດ້ຮັບເຄາະຮ້າຍຈາກ ລບຕ ໃຫ້ຕໍ່າກວ່າ 40 ຄົນຕໍ່ປີ ໂດຍການໂຄສະນາ ທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຕາມກຸ່ມ ເປົ້າໝາຍໃຫ້ໄດ້ 3,000 ເທື່ອບ້ານ ແລະ ຂະຫຍາຍການສິດສອນຫຼັກສູດ ລບຕ ໃນສະຖາບັນການສຶກສາຕ່າງໆ ໃຫ້ໄດ້ 500 ແຫ່ງ<br>- ຈັດຕັ້ງການສໍາຫຼວດບໍ່ແມ່ນແບບວິຊາການ ເພື່ອຊອກຫາຈຸດຫຼັກຖານ ລບຕ ໃຫ້ໄດ້ 2,776 ບ້ານ ແລະ ສໍາຫຼວດແບບວິຊາການ ເພື່ອກໍານົດພື້ນທີ່ ລບຕ ຕົກຄ້າງ ໃຫ້ໄດ້ 250,000 ເຮັກຕາ, ສະເລ່ຍ 50,000 ເຮັກຕາ/ປີ<br>- ກວດກູ້ ລບຕ ອອກຈາກເນື້ອທີ່ທໍາການຜະລິດ, ເຂດຊຸມຊົນ ແລະ ເຂດຈຸດ ສຸມທຸລະກິດ ໃຫ້ໄດ້ 50,000 ເຮັກຕາ, ສະເລ່ຍ 10,000 ເຮັກຕາ/ປີ.<br>- ພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ໄດ້ 5,750 ຄົນ ໃນນີ້, ປິ່ນປົວດ້ານການແພດ 250 ຄົນ, ຟື້ນຟູໜ້າທີ່ການ 750 ຄົນ, ຝຶກອົບຮົມ ແລະ ປະກອບອາຊີບ 2,000 ຄົນ ແລະ ໂຄສະນາສິດຂອງຄົນພິການ 2,500 ຄົນ. |
| ບູລິມະສິດ | 1) ສືບຕໍ່ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ເພື່ອໃຫ້ທຸກຄົນດໍາລົງຊີວິດຢ່າງປອດໄພຈາກ ລບຕ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໂດຍເນັ້ນໜັກໃສ່:<br>2) ຈັດຕັ້ງເຜີຍແຜ່ວຽກງານການໂຄສະນາຄວາມສ່ຽງຈາກ ລບຕ ໃຫ້ຊຸມຊົນໄດ້ກວ້າງຂຶ້ນ ແລະ ຈັດສັນຫາເວລາໃຫ້ຜູ້ປະສົບເຄາະຮ້າຍຈາກ ລບຕ ເພື່ອໃຫ້ເຂົາເຈົ້າສາມາດໃຊ້ຊີວິດ ແລະ ປະກອບສ່ວນເຂົ້າໃນການພັດທະນາ;<br>3) ຈັດຕັ້ງການສໍາຫຼວດແບບບໍ່ແມ່ນວິຊາການ ແລະ ວິຊາການ ໃຫ້ຫລາຍຂຶ້ນ ແລະ ເພີ່ມທະວີການກວດກູ້ຂອງໜ່ວຍງານກວດກູ້;<br>4) ສົ່ງເສີມອົງການກວດກູ້ ລບຕ ບໍ່ວ່າຈະເປັນຄວາມອາດສາມາດດ້ານວິຊາການ, ການປະສານງານ, ການກໍານົດແຜນການທີ່ມີປະສິດທິຜົນ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ; ແລະ ເພີ່ມແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ; ເພີ່ມທະວີການປະສານງານລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງອື່ນໆ ໃນການສົ່ງເສີມບົດບາດເປັນຜູ້ຊ່ວຍລັດຖະບານໃນການຈັດຕັ້ງປະຕິບັດການກວດກູ້ ລບຕ. |

[ຕາຕະລາງທີ 1: ເປົ້າໝາຍ ແລະ ບູລິມະສິດ ຂອງໝາກຜົນທີ 5 ໃນຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (ພະຈິກ 202

[1] ອີງຕາມການທົບທວນຄືນກ່ຽວກັບຜົນສໍາເລັດໃນ 10 ປີ ທີ່ຜ່ານມາໃນຂະແໜງ ລບຕ ຂອງ ສປປ ລາວ, ຄາດວ່າເປົ້າໝາຍ ແລະ ຕົວຊີ້ວັດທີ່ວາງໄວ້



# ເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ: SGD 18, "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ"

ລັດຖະບານໄດ້ຖືເອົາບັນຫາ ລບຕ ເປັນບັນຫາສຳຄັນໃນການພັດທະນາໂດຍໄດ້ກຳນົດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ, SDG 18: ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ, ແນໃສ່ກຳຈັດສິ່ງກີດຂວາງຂອງລະເບີດບໍ່ທັນແຕກເຂົ້າໃນການພັດທະນາປະເທດ.

ເປົ້າໝາຍການພັດທະນາແບບຍືນຍົງ ທີ 18 ປະກອບມີ 3 ຄາດໝາຍຄື:

- ພາຍໃນປີ 2030, ຮັບປະກັນໃຫ້ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນແຕ່ລະປີ ຫຼຸດລົງເທື່ອລະກ້າວ ຈົນຮອດຈຸດຕ່ຳສຸດ.

- ພາຍໃນປີ 2030, ໃຫ້ສຳເລັດການກວດກູ້ ລບຕ ຢູ່ບັນດາພື້ນທີ່ບໍລິມະສິດພັດທະນາ ແລະ ບັນດາບ້ານທີ່ທຸກຍາກ.

- ພາຍໃນປີ 2030, ຮັບປະກັນໃຫ້ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຊ່ວຍເຫຼືອທາງດ້ານການປິ່ນປົວ, ຟື້ນຟູສຸຂະພາບ ແລະ ປະກອບອາຊີບ.

| SDG 18: Remove the UXO Obstacle to National Development | | | | |
|---|---|---|---|---|
| **ຄາດໝາຍ** | **ຕົວຊີ້ວັດ** | **ປີ** | **ຄາມຄືບໜ້າ** | **ແຫຼ່ງຂໍ້ມູນ** |
| **18.1.** ພາຍໃນປີ 2030, ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນແຕ່ລະປີຫຼຸດລົງເທື່ອລະກ້າວຈົນຮອດຈຸດຕ່ຳສຸດ. | 18.1.1. ຈຳນວນຜູ້ຖືກບາດ ເຈັບ ແລະ ເສຍຊີວິດຈາກ ລບຕ ມີການລາຍງານ (ແຍກຕາມອາຍຸ ແລະ ເພດ) | 2018[2] | ລວມ *24*<br>ເພດຊາຍ 15 (ເດັກຊາຍ 9)<br>ເພດຍິງ 9 (ເດັກຍິງ 5) | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ / ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ |
| | | 2019 | ລວມ: 25<br>ເພດຊາຍ 18 (ເດັກຊາຍ 5) ເພດຍິງ 7 (ເດັກຍິງ 5) | |
| | 18.1.2. ຈຳນວນເປີເຊັນ ຂອງປະຊາກອນຢູ່ໃນພື້ນທີ່ ທີ່ມີການລາຍງານກ່ຽວກັບ ລບຕ (CHAs) (%) | 2018 | 21.2 | |
| | | 2019 | 18.2 | |
| **18.2.** ພາຍໃນປີ 2030, ໃຫ້ສຳເລັດການກວດກູ້ ລບຕ ຢູ່ບັນດາພື້ນທີ່ບູລິມະ ສິດພັດທະນາ ແລະ ບັນດາບ້ານທີ່ທຸກ ຍາກ | 18.2.1. ຈຳນວນເປີເຊັນທີ່ ຍັງເຫຼືອຂອງພື້ນທີ່ ລບຕ ຕົກຄ້າງ ທີ່ຍັງຕ້ອງໄດ້ ກວດກູ້ ຖືກເກັບກຳ ແລະ ລາຍງານ (ແຍກຕາມບ້ານທຸກຍາກ ທີ່ເປັນບູລິມະສິດ ສູງ) | 2018 | 99.33 | |
| | | 2019 | 99.25 | |
| | 18.2.2. ຈຳນວນບ້ານທຸກ ຍາກທີ່ຍັງເຫຼືອ ທີ່ກຳນົດຢູ່ໃນພື້ນທີ່ທີ່ມີ ລບຕ | 2018 | 1,983 | |
| | | 2019 | 1,526 | |
| **18.3.** ພາຍໃນປີ 2030, ຮັບປະກັນ ໃຫ້ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການ ຊ່ວຍເຫຼືອທາງດ້ານ ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ປະກອບອາຊີບ. | 18.3.1. ອັດຕາສ່ວນຂອງຜູ້ລອດຊີວິດຈາກ ລບຕ ທີ່ຍັງຢູ່ໃນເກນອາຍຸທີ່ສາ ມາດທຳມາຫາກິນໄດ້ ແຕ່ ຍັງບໍ່ທັນມີລາຍຮັບຂັ້ນພື້ນ ຖານພຽງພໍ ສາມາດເຂົ້າເຖິງລາຍຮັບຂັ້ນພື້ນຖານໄດ້ (%) | 2018 | 94.51 | |
| | | 2019 | 94.52 | |
| | 18.3.2. ຈຳນວນເປີເຊັນ ຂອງຜູ້ລອດຊີວິດຈາກ ລບຕ ຖືກເຊື່ອມສານ ເຂົ້າໃນລະບົບການປິ່ນ ປົວສຸກຂະພາບ, ການ ສຶກສາ ແລະ ການຈ້າງງານ (%) | 2018 | 19.61 | |
| | | 2019 | 20.61 | |

[2] ຂໍ້ມູນແມ່ນໄດ້ມາຈາກການທົບທວນລະດັບຊາດໂດຍສະໝັກໃຈ ຂອງ ສປປ ລາວ ໃນປີ 2018-2019 (2021, ລັດຖະບານ ສປປ ລາວ)

## 3. ພາບລວມຂອງຄູ່ຮ່ວມງານໃນຂະແໜງການແກ້ໄຂ ບັນຫາ ລບຕ

**ອົງການຮ່ວມມືຫຼາຍຝ່າຍ:**

1) **ອົງການ ສປຊ ເພື່ອການພັດທະນາ (ສປຊ)**
   - ຄຸ້ມຄອງທຶນຂອງບັນດາປະເທດຜູ້ໃຫ້ທຶນ ໃນການສ້າງ ຂີດຄວາມສາມາດ ແລະ ສະໜອງການສະໜັບສະໜູນ ໃຫ້ແກ່ ຄຊກລ ແລະ ຄກລ ຜ່ານອົງການ ສປຊ ເພື່ອ ການພັດທະນາ ສໍາລັບ ໂຄງການຮ່ວມມືແກ້ໄຂບັນຫາ ລບຕ ສໍາລັບປີ 2017-2021.
   - ສະໜອງຄໍາປຶກສາທາງດ້ານວິຊາການ ແລະ ບຸກຄະລາ ກອນຊ່ຽວຊານຕ່າງປະເທດ ເພື່ອສະໜັບສະໜູນ ຄຊກລ ແລະ ຄກລ.
   - ເປັນປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ.
2) **ສູນແກ້ໄຂບັນຫາລະເບີດຝັງດິນເພື່ອມະນຸດສະທໍາຂອງເຈນີວາ (ຈີໄອຊີເອັດຈ໌ດີ)**
   - ເປັນອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ ຕັ້ງຢູ່ປະ ເທດສະວິດເຊີແລນ ເຮັດໜ້າທີ່ເປັນກອງເລຂາສາກົນ ໃຫ້ແກ່ອົງການສະຫະປະຊາຊາດ ໂດຍການອະນຸມັດຮັບ ຮອງຈາກອົງການສາກົນກ່ຽວກັບການແກ້ໄຂບັນຫາລະ ເບີດຝັງດິນ.
   - ຄຊກລ ແມ່ນໄດ້ນໍາໃຊ້ລະບົບຖານຂໍ້ມູນ ລບຕ ທີ່ຖືກພັດ ທະນາຂຶ້ນຄັ້ງທໍາອິດໃນປີ 1999 ໂດຍການສະໜັບສະ ໜູນຈາກອົງການຈີໄອຊີເອັດຈ໌ດີ.

**ພາກສ່ວນລັດຖະບານລາວ:**

1) **ກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ແມ່ນມີກົມອົງການຈັດຕັ້ງສາກົນ ເຮັດ ໜ້າທີ່ເປັນຈຸດປະສານງານ ໃນນາມຕາງໜ້າໃຫ້ລັດຖະບານ ສປປ ລາວ ເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິ ບັດວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໃນກອງປະຊຸມ ປະຈໍາປີ ຂອງລັດພາຄີສົນທິສັນຍາ ວ່າດ້ວຍການເກືອດຫ້າມລະ ເບີດລູກຫວ່ານ.

2) **ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ)**
- ສະໜອງທິດທາງນະໂຍບາຍ, ຍຸດທະສາດ ແລະ ຊີ້ນໍາວຽກ ງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.
- ມີລັດຖະມົນຕີກະຊວງ ຮສສ ເປັນປະທານ ຄຊກລ ແລະ ທັງເປັນຄະນະຊີ້ນໍາໂຄງການຮ່ວມມືແກ້ໄຂບັນຫາ ລບຕ ຮ່ວມກັບອົງການ ສປຊ ເພື່ອການພັດທະນາ.

3) **ກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີສູນການແພດຟື້ນຟູໜ້າທີ່ການ ໂດຍເຮັດວຽກຮ່ວມກັບສູນໂຄບ ແລະ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ເພື່ອຊ່ວຍເຫຼືອຄົນພິການ ທາງດ້ານ ການ ຟື້ນຟູໜ້າທີ່ການ, ສາມາດເຂົ້າເຖິງການບໍລິການຟື້ນຟູດ້ານຕ່າງໆ ຢ່າງມີຄຸນນະພາບ.

4) **ກະຊວງປ້ອງກັນປະເທດ**
- ມີໜ້າທີ່ຮັບຜິດຊອບຊີ້ນໍາການປະຕິບັດງານຂອງກອງກວດກູ້ລະເບີດມະນຸດສິທໍາກອງທັບ.
- ສະໜັບສະໜູນທາງດ້ານເງິນເດືອນໃຫ້ພະນັກງານຂອງກອງກວດກູ້ລະເບີດມະນຸດສະທໍາກອງທັບ ແນ່ໃສ່ຄວາມ ຍືນຍົງໄລຍະຍາວໃນການແກ້ໄຂບັນຫາ ລບຕ.

5) **ສູນກາງສະຫະພັນແມ່ຍິງລາວ**
- ເຮັດວຽກຮ່ວມກັບອົງການ ສປຊ ເພື່ອແມ່ຍິງ ໃນການຜະ ລິດປຶ້ມຄູ່ມືການຝຶກອົບຮົມກ່ຽວກັບການເຊື່ອມສານບົດ ບາດຍິງ-ຊາຍ ເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ໂດຍການສະໜັບສະໜູນຈາກລັດຖະບານການາ ດາ.
- ສືບຕໍ່ສະໜັບສະໜູນວຽກງານບົດບາດຍິງ-ຊາຍ.

6) **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮ່ວມມືກັບບັນ ດາອາສາສະໝັກຂັ້ນບ້ານຢູ່ແຂວງບໍລິຄໍາໄຊ ແລະ ສາລະວັນ ດໍາເນີນກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ ບັນດາຊຸມຊົນຕ່າງໆທີ່ມີ ລບຕ ຕົກຄ້າງ ໂດຍໄດ້ຮັບທຶນສະ ໜັບສະໜູນຈາກລັດຖະບານຕວັກກີ ຜ່ານ ອົງການ ສປຊ ເພື່ອ ການພັດທະນາ ໃນປີ 2020.

**ອົງການປະຕິບັດງານຂອງລາວ:**

1) **ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)**

- ສ້າງຕັ້ງຂຶ້ນໃນປີ 1996 ໂດຍການສະໜັບສະໜູນ ຈາກ ອົງການແມັກ, ອົງການ ສປຊ ເພື່ອການພັດທະນາ ແລະ ຄູ່ຮ່ວມງານອື່ນໆ.
- ປະຕິບັດໜ້າທີ່ໃນການຫຼຸດຜ່ອນຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແລະ ອຸປະຕິເຫດຈາກ ລບຕ; ກວດກູ້ ລບຕ ອອກຈາກພື້ນທີ່ ເພື່ອນຳໃຊ້ເຂົ້າໃນການ ຜະລິດສະບຽງອາຫານ ແລະ ເປົ້າໝາຍການພັດທະນາ ເສດຖະກິດ-ສັງຄົມຕ່າງໆ.
- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້ ແລະ ທຳລາຍ ລບຕ.

2) **ກອງກວດກູ້ລະເບີດມະນຸດສະທຳກອງທັບ (ກອງ 58)**

- ສ້າງຕັ້ງຂຶ້ນໃນປີ 2013 ໂດຍປະຕິບັດໜ້າທີ່ໃນການສຳ ຫຼວດ ແລະ ກວດກູ້ ລບຕ.
- ປະຕິບັດການສຳຫຼວດ ແລະ ກວດກູ້ ລບຕ ໂດຍທຶນສະໜັບສະໜູນຈາກອົງການກອຍກາ ຜ່ານ ອົງການ ສປຊ ເພື່ອການພັດທະນາ.
- ໄດ້ຮັບເງິນເດືອນຈາກກະຊວງປ້ອງກັນປະເທດ.

**ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອ ມະນຸດສະທຳ - ອົງການຈັດຕັ້ງສາກົນບໍ່ສັງກັດ ລັດຖະບານ:**

1) **ອົງການຮາໂລທຣາດ (ຮາໂລ)**

ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳ ຫຼວດແບບວິຊາການ, ການກວດກູ້, ການທຳລາຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

2) **ອົງການເພື່ອມະນຸດ ແລະ ການມີສ່ວນຮ່ວມ (ເອັດຈ໌ໄອ)**

ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳ ຫຼວດແບບວິຊາການ, ການກວດກູ້, ການທຳລາຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ , ໃນຂອບເຂດຮອບດ້ານຊຶ່ງລວມທັງການພັດທະນາເສດຖະກິດ-ສັງຄົມຫຼັງຈາກການກວດກູ້.

3) **ອົງການບໍລິການແກ້ໄຂບັນຫາລະເບີດຝັງດິນ ຂອງຍີ່ປຸ່ນ (ເຈມັດ)**

ສົ່ງເສີມການກວດກູ້ ລບຕ ໂດຍນຳໃຊ້ກົນຈັກທຳລາຍລະ ເບີດລູກຫວ່ານ, ຊຶ່ງສາມາດຕັດພຸ່ມໄມ້ທີ່ຢູ່ບໍລິເວນສະ ໜາມ ແລະ ທຳລາຍລະເບີດລູກຫວ່ານດ້ວຍກົນຈັກ.

4) **ອົງການໃຫ້ຄຳປຶກສາກ່ຽວກັບການແກ້ໄຂລະເບີດຝັງດິນ (ແມັກ)**

ເປັນອົງການທຳອິດທີ່ເຂົ້າມາປະຕິບັດການແກ້ໄຂບັນ ຫາ ລບຕ ຢູ່ໃນ ສປປ ລາວ ຕັ້ງແຕ່ປີ 1994 ແລະ ໄດ້ ມີສ່ວນ ຮ່ວມສະໜັບສະໜູນໃນການສ້າງຕັ້ງ ຄກລ ນຳອີກ.

ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳ ຫຼວດແບບວິຊາການ, ການກວດກູ້, ການທຳລາຍ, ການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

5) **ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ)**

ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳ ຫຼວດແບບວິຊາການ, ການກວດກູ້, ການທຳລາຍ, ການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

ສະໜອງການປະເມີນຂີດຄວາມຕ້ອງການທາງດ້ານຂີດ ຄວາມສາມາດ ແລະ ສະໜັບສະໜູນ ຄຊກລ; ສະໜັບ ສະໜູນໜ່ວຍງານຄຸ້ມຄອງຂໍ້ມູນ ລບຕ ຂອງຫ້ອງການ ຄຊກລ ຜ່ານລະບົບການຊ່ວຍເຫຼືອແກ້ໄຂບັນຫາຖານຂໍ້ ມູນ ລບຕ ແບບທາງໄກ.

6) **ອົງການສຶກສາໂລກ (ດັບເບີ້ນຢູອີ)**

ຄຸ້ມຄອງ 2 ແຫຼ່ງທຶນຫຼັກຂອງລັດຖະບານ ສະຫະລັດອາ ເມລິກາ ສໍາລັບໂຄງການແກ້ໄຂ ບັນຫາ ລບຕ ທີ່ຕົກຄ້າງ ຢູ່ ສປປ ລາວ.

ຄຸ້ມຄອງກອງທຶນຊ່ວຍເຫຼືອປິ່ນປົວຜູ້ລອດຊີວິດ ຈາກ ລບຕ ປາງສົງຄາມ ແລະ ຄອບຄົວຂອງ ເຂົາເຈົ້າ.

ປະຕິບັດໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນການເຊື່ອມສານວຽກງານ ລບຕ ເຂົ້າໃນ ຫຼັກ ສູດການຮຽນ-ການສອນຢູ່ບັນດາໂຮງຮຽນ ແລະ ຈັດການ ຝຶກອົບຮົມໃຫ້ຄູອາຈານ ກ່ຽວກັບ ການໂຄສະນາສຶກສາ ຄວາມສ່ຽງຈາກ ລບຕ.

7) **ອົງການບໍລິການອົງຄະທຽມ ແລະ ເຄື່ອງຄໍ້າຊູ**

ເປັນຄູ່ຮ່ວມກັບສູນຟື້ນຟູສຸຂະພາບຂອງກະຊວງ ສາທາລະນະສຸກ ເພື່ອສະໜອງການບໍລິການຟື້ນຟູ ຮ່າງກາຍໃນທົ່ວປະເທດ ລວມທັງຜູ້ລອດຊີວິດ ຈາກ ລບຕ

8) **ອົງການ ເທີຣ່າ**

- ປະຕິບັດກິດຈະກໍາໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃນເຂດທີ່ໄດ້ຮັບຜົນກະທົບຈາກ ລບຕ ໃນສປປ ລາວ.

**ບັນດາບໍລິສັດກວດກູ້ລະເບີດ ໃນປີ 2021 ປະກອບມີ 23 ບໍລິສັດດັ່ງລຸ່ມນີ້:**

1. ບໍລິສັດ ອາສາ
2. ບໍລິສັດ ອອດສ໌ລາວ
3. ບໍລິສັດ ບີເອັສແອວ
4. ບໍລິສັດ ແອລເອັກເອັມແອລ
5. ບໍລິສັດ ດວງຈະເລີນ
6. ບໍລິສັດ ເກຣດ
7. ບໍລິສັດ ອິນຊີ
8. ບໍລິສັດ ແອລ ແອນ ບີ
9. ບໍລິສັດ ການຮ່ວມມືລາວ
10. ບໍລິສັດ ແອລຊີວາຍ
11. ບໍລິສັດ ມິວເຊິດ
12. ບໍລິສັດ ແອລເອັນແອລ
13. ບໍລິສັດ ອູມມາ
14. ບໍລິສັດ ພັນວິລະ
15. ບໍລິສັດ ພີເອັສດີ
16. ບໍລິສັດ ພີເອັສວີ
17. ບໍລິສັດ ເອັສບີເທັດ
18. ບໍລິສັດ ເອັສດີເຄ
19. ບໍລິສັດ ແສງເພັດ
20. ບໍລິສັດ ເອັສຈີ
21. ບໍລິສັດ ສີລາວັນ
22. ບໍລິສັດ ໂວມາ
23. ບໍລິສັດ ເອັກທີດີ

**ພາກສ່ວນອື່ນໆ:**

1) **ບໍລິສັດເທັດທສເທັກ**

ຄຸ້ມຄອງທຶນຂອງລັດຖະບານ ສ. ອາເມລິກາ ໃນ ການສະໜັບ ສະໜູນ ຄກລ.

ສະໜອງຄໍາປຶກສາໃຫ້ແກ່ ຄກລ.

2) **ສະມາຄົມປັບປຸງຄຸນນະພາບຊີວິດຂອງຜູ້ລອດຊີວິດ ຈາກ ລບຕ (ຄິວແອວເອ)**

ເຮັດໜ້າທີ່ໃນການສະໜອງການຊ່ວຍເຫຼືອຜູ້ຖືກ ເຄາະຮ້າຍຈາກ ລບຕ, ຄົນພິການ ແລະ ຜູ້ທຸກ ຍາກ.

# Lao PDR Map of Stakeholders' Operation




*Logos of operators showing where each operator is working*

## ພາບລວມ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດ ບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແມ່ນສະຖາບັນ ການຈັດຕັ້ງຂອງລັດຖະບານ ເຮັດໜ້າທີ່ໃນການສະໜອງແນວ ທາງນະໂນຍາຍ, ຄົ້ນຄ້ວາອອກໜັງສືຢັ້ງຢືນຮັບຮອງ, ຄຸ້ມຄອງ ແລະ ປະສານງານກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ. ຄຊກລ ຍັງ ເຮັດໜ້າທີ່ເປັນຈຸດປະສານງານທາງ ດ້ານວິຊາການສຳລັບທຸກໆບັນຫາທີ່ພົວພັນກັບສິນທິສັນຍາສາ ກົນ ແລະ ຖືກມອບໝາຍຈາກລັດຖະບານລາວ ໃຫ້ເຂົ້າຮ່ວມ ກອງປະຊຸມສາກົນຕ່າງໆ ກ່ຽວກັບການແກ້ໄຂບັນຫາ ລບຕ. ນອກຈາກນັ້ນ, ຄຊກລ ຍັງມີໜ້າທີ່ຮັບຜິດຊອບໃນການຄົ້ນ ຄ້ວາສ້າງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາ ລບຕ, ກວດກາຄຸນນະພາບການ ສຳຫຼວດ ແລະ ກວດກູ້ ລບຕ, ດຳເນີນການປະເມີນຜົນກະທົບ ພາຍຫຼັງການກວດກູ້ ລບຕ ແລະ ຕິດຕາມກວດກາການປະຕິ ບັດງານທັງໝົດຂອງຂະແໜງການແກ້ໄຂບັນຫາ ລບຕ.

ຄຊກລ ແມ່ນສະຖາບັນການຈັດຕັ້ງສູງສຸດ ໃນການຊີ້ນຳທົ່ວຂະ ແໜງການ ລບຕ ໂດຍປະກອບດ້ວຍຜູ້ຕາງໜ້າຈາກກະຊວງ ຕ່າງໆ 12 ກະຊວງ ແລະ ບັນດາແຂວງ ຄື: ກະຊວງແຮງ ງານ ແລະ ສະຫວັດດີການສັງຄົມ (ປະທານ), ກະຊວງປ້ອງ ກັນປະເທດ (ຮອງປະທານ), ກະຊວງການຕ່າງປະເທດ (ຮອງ ປະທານ), ກະຊວງແຜນການ ແລະ ການລົງທຶນ (ຮອງປະ ທານ), ມີບັນດາກະຊວງທີ່ເປັນຄະນະກຳມະການຈາກກະຊວງ ສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງການເງິນ, ກະຊວງໂທລະຄົມມະນາຄົມ ແລະ ໄປສະນີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສຶກ ສາທິການ ແລະ ກິລາ, ສູນກາງແນວລາວສ້າງຊາດ, ສູນກາງ ຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສູນກາງສະຫະພັນແມ່ ຍິງລາວ.

ນອກຈາກນັ້ນ, ຄຊກລ ຍັງມີຫ້ອງການ ຄຊກລ ມີພາລະບົດ ບາດເປັນເສນາທິການໃຫ້ ຄຊກລ ໃນການຈັດຕັ້ງປະຕິບັດກິດ ຈະກຳແກ້ໄຂບັນຫາ ລບຕ. ຄຊກລ ຖືກສ້າງຕັ້ງຂຶ້ນ ໂດຍການ ສະໜັບສະໜູນຈາກອົງການ ສປຊ ເພື່ອການພັດທະນາ ແລະ ໄດ້ຮັບການສະໜັບສະໜູນດ້ານຕ່າງໆຕະຫຼອດມາ.

ໂຄງປະກອບກົງຈັກຂອງຫ້ອງການ ຄຊກລ ແບ່ງອອກເປັນ 2 ພະແນກໃຫ່ຍຄື: ພະແນກສະໜັບສະໜູນ ແລະ ພະແນກຄຸ້ມ ຄອງການປະຕິບັດງານ. ແຕ່ລະພະແນກຈະມີໜ່ວຍງານຕ່າງໆ ຂຶ້ນກັບ ໂດຍມີຮອງຫົວໜ້າຫ້ອງການ ຄຊກລ 2 ທ່ານ ເປັນຜູ້ ຊີ້ນຳວຽກງານຂອງແຕ່ລະໜ່ວຍງານ.

**ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ອີໂອອາອີ)**
ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີໜ້າທີ່ຮັບ ຜິດຊອບໃນການປະສານງານ ແລະ ສົມທົບກັບບັນດາອົງການ ປະຕິບັດງານໃຫ້ເຄື່ອນໄຫວວຽກງານໂຄສະນາສຶກສາຄວາມ ສ່ຽງຈາກ ລບຕ ເພື່ອຮັບປະກັນໃຫ້ປະຕິບັດວຽກງານໃຫ້ສອດ ຄ່ອງຕາມມາດຕະຖານແຫ່ງຊາດ ແລະ ຄົ້ນຄ້ວາພັດທະນາສື່ ໂຄສະນາຕ່າງໆ ຮັບໃຊ້ວຽກງານໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ. ຜົນສຳເລັດຕົ້ນຕໍໃນປີ 2021 ມີຄື:

- ສະໜັບສະໜຸນການເຜີຍແຜ່ຂໍ້ມູນສຳຄັນຂອງ ການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ (EORE) ຜ່ານທາງວິທະຍຸກະຈາຍສຽງແຂວງ ໂດຍອອກລາຍງານ 8 ຄັ້ງ ຕໍ່ເດືອນ ທັງໝົດ 12 ເດືອນ ໃນທົ່ວ 5 ສະຖານີວິທະຍຸແຂວງໃນນະຄອນຫຼວງວຽງຈັນ, ຄຳມ່ວນ, ເຊກອງ, ສາລະວັນ ແລະ ຈຳປາສັກ.

- ປະສານງານກິດຈະກຳ ການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ (EORE) ໂດຍຊາວໜຸ່ມອາສາສະບ້ານທັງໝົດ 44ບ້ານໃນທົ່ງ 2 ແຂວງ: ແຂວງຊຽງຂວາງ ແລະ ແຂວງຄຳມ່ວນ. ຈາກການຝຶກອົບຮົມທີ່ດຳເນີນໃນປີ 2020, ອາສາສະໝັກໄດ້ເຜີຍແຜ່ກິດຈະກຳ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ທີ່ສົ່ງຜົນປະໂຫຍດທັງໝົດ 5,294 ຄົນ.

ໄດ້ຈັດກອງປະຊຸມສຳມະນາວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ (EORE) ໃຫ້ບັນດາຫ້ອງການຂັ້ນແຂວງ (PRAs) ລະຫວ່າງວັນທີ 6 ຫາ 11 ກັນຍາ 2021 ທີ່ເມືອງທ່າລາດ, ແຂວງວຽງຈັນ. ຜູ້ເຂົ້າຮ່ວມມີບັນດາຜູ້ແທນຂັ້ນແຂວງຈາກ ແຂວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື, ໄຊສົມບູນ, ບໍລິຄຳໄຊ, ຜົ້ງສາລີ, ຊຽງຂວາງ, ຫຼວງພະບາງ, ຫົວພັນ ແລະ ຜູ້ຕາໜ້າຈາກໜ່ວຍງານ 58.

**ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ**

ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ມີໜ້າທີ່ຮັບຜິດ ຊອບໃນການສ້າງຖານຂໍ້ມູນແຫ່ງຊາດກ່ຽວກັບຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແລະ ຮັບປະກັນໃຫ້ຄວາມຕ້ອງການຂອງ ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຕອບສະໜອງຈາກບັນດາອົງ ການປະຕິບັດງານ ແລະ ພາກສ່ວນກ່ຽວຂ້ອງ. ຜົນສຳເລັດຕົ້ນຕໍ ໃນປີ 2021 ມີຄື:

- ບັນທຶກການເກີດອຸປະຕິເຫດໃຫມ່ຈາກ ລບຕ ແລະ ຜູ້ບາດເຈັບໃນຖານຂໍ້ມູນ IMSMA ແລະ ສະຫຼຸບລາຍງານປະຈຳເດືອນທີ່ເວັບໄຊທ໌ຂອງຫ້ອງການ ຄຊກລ. ໃນປີນີ້ (ແຕ່ເດືອນມັງກອນ ຫາ ເດືອນທັນວາ 2021). ໄດ້ເກີດອຸປະຕິເຫດທັງໝົດ 35 ຄັ້ງ, ສົ່ງຜົນໃຫ້ມີຜູ້ໄດ້ຮັບຜົນກະທົບຈາກ ລບຕ ທັງໝົດ 63 ຄົນ (ບາດເຈັບ 47 ຄົນ ແລະ ເສຍຊີວິດ 16 ຄົນ).
- ປະຕິບັດວຽກງານພາກສະໜາມ ເພື່ອຕິດຕາມການເກີດອຸປະຕິເຫດຈາກ ລບຕ ໃນບັນດາແຂວງ ທົ່ວປະເທດ. ໜ່ວຍງານ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ປະຕິບັດວຽກງານພາກສະໜາມທັງໝົດ 7 ແຂວງ (ລວມເປັນ 21 ຄັ້ງ) ເຊິ່ງມີ: ແຂວງຊຽງຂວາງ, ແຂວງຫົວພັນ, ແຂວງວຽງຈັນ, ແຂວງສະຫວັນນະເຂດ, ແຂວງຈຳປາສັກ, ແຂວງເຊກອງ ແລະ ແຂວງອັດຕະປື.
- ໜ່ວຍງານ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຈັດສັນການຊ່ວຍເຫຼືອ ແລະ ການດູແລທາງການແພດໃຫ້ຜູ້ລອດຊີວິດຈາກ ລບຕ ທີ່ໄດ້ຮັບຜົນກະທົບຈາກອຸປະຕິເຫດໃນປີ 2021.

ໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນສ່ວນໜຶ່ງຂອງໂຄງການສະໜັບສະໜູນຂະແໜງການ ລບຕ ຢູ່ ສປປ ລາວ (ໄລຍະທີ 2) ເພື່ອປັບປຸງຄຸນນະພາບຊີວິດຂອງຜູ້ເຄາະຮ້າຍຈາກ ລບຕ ຢູ່ແຂວງ ຊຽງຂວາງ ແລະ ແຂວງຫົວພັນ ໂດຍການສະໜັບສະໜູນຂອງກິດຈະກຳການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ ໂດຍການສະໜັບສະໜູນຈາກລັດຖະບານ ສ. ເກົາຫຼີ ຜ່ານອົງການ KOICA.UXO Survey and Clearance

**ການສຳຫຼວດ ແລະ ກວດກູ້ ລບຕ**

ສຳລັບວຽກງານການສຳຫຼວດ ແລະ ກວດກູ້ ລບຕ ແມ່ນຮັບປະກັນ ໃຫ້ການປະຕິບັດງານພາກສະໜາມປະຕິບັດສອດຄ່ອງກັບມາດ ຕະຖານແຫ່ງຊາດໃນການແກ້ໄຂບັນຫາ ລບຕ ແລະ ປະສານງານ ສ້າງແຜນການສຳຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງການ. ຄຊກລ ຍັງຮັບຜິດຊອບໃນການຝຶກອົບຮົມທາງດ້ານວິຊາການ ແລະ ຕິດຕາມຂະບວນການກ່ອນການເກັບກູ້ ແລະ ຜົນກະທົບ ພາຍຫຼັງຈາກເກັບກູ້. ຜົນສຳເລັດຕົ້ນຕໍໃນປີ 2021 ປະກອບມີ:

- ຈັດກອງປະຊຸມວິຊາການວຽກງານສຳຫຼວດ ແລະ ກວດກູ້ ລບຕ ທັງໝົດ 3 ຄັ້ງໃນປີ 2021.
- ຈັດກອງປະຊຸມສຳມະນາກ່ຽວກັບ ການປະສານງານ ແລະ ບູລິມະສິດ ຂອງການສຳຫຼວດແບບວິຊາການ ທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ໃຫ້ແກ່ອົງການປົກຄອງແຂວງ ຄຳມ່ວນ ແລະ ເມືອງ. ໃນຊ່ວງວັນທີ 23 ເຖິງ 27 ສິງຫາ 2021, ໜ່ວຍງານກວດກູ້ຈັດ

ກອງປະຊຸມສຳມະນາ ກ່ຽວກັບ ການປະສານງານ ແລະ ບູລິມະສິດ ຂອງການສຳຫຼວດແບບວິຊາການ ໃຫ້ແກ່ ອົງການປົກຄອງແຂວງໄຊສົມບູນ ແລະ ເມືອງ ຢູ່ ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ.

ໜ່ວຍງານດັ່ງກ່າວຍັງໄດ້ດຳເນີນການປະສານງານ ຂັ້ນແຂວງ ແລະ ລົງຕິດຕາມກວດກາພາກສະໜາມ ພ້ອມ ທັງໄດ້ສະໜັບສະໜູນການຈັດຕັ້ງະຕິບັດວຽກງານ ບູລິມະ ສິດໃນວຽກງານການສຳຫຼວດ ແລະ ກວດກູ້ລະຫວ່າງຜູ້ ປະກອບການ ແລະ ບັນດາອົງການປົກຄອງແຂວງ. ໃນ ໄລຍະໜຶ່ງປີ, ໜ່ວຍງານກວດກູ້ໄດ້ລົງຢ້ຽມຢາມວຽກງານ ເກັບກູ້ລະເບີດບໍ່ວ່າຈະເປັນ ຄກລ, ຮາໂລ ແລະ ແມັກ ຢູ່ ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຊຽງຂວາງ. ຊຶ່ງລວມມີບັນຫາດັ່ງນີ້:

- ບັນຫາການເກັບກຳຂໍ້ມູນມີການທັບຊ້ອນກັນ ລະຫວ່າງ ຄກລ ແລະ ແມັກ.
- ການແບ່ງຄວາມຮັບຜິດຊອບວຽກງານການສຳຫຼວດ ລບຕ ລະຫວ່າງ ຄກລ ແລະ ແມັກ.
- ຂະບວນການເກັບກູ້ລະເບີດບໍ່ທັນແຕກ ແລະ ການ ອະນຸມັດຈາກແຕ່ລະຂັ້ນຂອງອຳນາດການປົກຄອງ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ປະຕິບັດຕາມຂໍ້ ກຳນົດການນຳໃຊ້ທີ່ດິນພາຍຫຼັງການກວດກູ້.

ການວາງແຜນບູລິມະສິດ ແລະ ການເຊື່ອມໂຍງກັບ ການກຳນົດໃຊ້ທີ່ດິນ ພາຍຫຼັງກວດກູ້ ເພື່ອສ້າງຄວາມ ເຂັ້ມແຂງໃຫ້ກັບເຈົ້າຂອງທີ່ດິນ ແລະ ຄວາມຍືນຍົງ ຂອງການກວດກູ້.

## ການສະໜັບສະໜູນຂອງອົງການ ສປຊ ເພື່ອການພັດທະນາ

ໃນປີ 2021, ສປຊ ເພື່ອການພັດທະນາ ໄດ້ປະຕິບັດວຽກ ງານຢ່າງໃກ້ຊິດກັບຄູ່ຮ່ວມພັດທະນາ[3], ສະໜັບສະໜູນຂະແ ໜງການແກ້ໄຂ ລບຕ ໂດຍຜ່ານການໃຫ້ຄຳປຶກສາທາງ ດ້ານເຕັກນິກ ແລະ ແຜນງານ ແລະ ການພັດທະນາຄວາມ ສາມາດໃຫ້ແກ່ ຄຊກລ ແລະ ຄກລ. ໃນການປະຕິບັດເຊັ່ນ ນີ້, ສປຊ ເພື່ອການພັດທະນາ ໄດ້ປະກອບສ່ວນເຂົ້າ ບັນດາ ຜົນງານ ແລະ ໝາກຜົນທີ່ໄດ້ບັນລຸຕາມຂະແໜງການແກ້ ໄຂບັນຫາ ລບຕ.

### 1. ການຄຸ້ມຄອງບໍລິຫານ ແລະ ການຈັດຊື້-ຈັດຈ້າງ

ຫ້ອງການ ສປຊ ເພື່ອການພັດທະນາ ໄດ້ປະຕິບັດ ວຽກຢ່າງໃກ້ຊິດກັບ ຄຊກລ ແລະ ຄກລ ເພື່ອກວດກາ ການຈັດຕັ້ງປະຕິບັດວຽກງານການປະສານງານ ແລະ ຕິດຕາມວຽກງານຂອງຂະແໜງການແກ້ໄຂບັນຫາ ລບຕ ແລະ ໃຫ້ການສະໜັບສະໜູນທາງດ້ານເຕັກນິກ ແລະ ບໍລິຫານ. ເພື່ອໃຫ້ຄຳແນະນຳຂັ້ນທີ່ຈຳເປັນ ໃນຂະແໜ ງການແກ້ໄຂບັນຫາ ລບຕ, ອົງການ ສປຊ ເພື່ອການ ພັດທະນາ ໄດ້ໃຫ້ການສະໜັບສະໜູນດ້ານວິຊາການແກ່ ຄຊກລ ແລະ ຄກລ ບໍ່ວ່າຈະເປັນຊ່ຽວຊານດ້ານການເງິນ, ຊ່ຽວຊານດ້ານແຜນການ, ຊ່ຽວຊານດ້ານບົດລາຍງານ, ຊຶ່ງ ໄດ້ໃຫ້ການສະໜັບສະໜູນວຽກງານຢ່າງເຕັມທີ່ໃຫ້ກັບ ຄຊກລ ແລະ ຄກລ ທີ່ຕ້ອງການໃນການສ້າງແຜນຍຸດທະ ສາດ, ແຜນການ, ການຄຸ້ມຄອງໂຄງການ ແລະ ການຄຸ້ມ ຄອງທາງດ້ານການເງິນ.

### 2. ການນຳພາຂະແໜງການແກ້ໄຂບັນຫາ ລບຕ

ໃນນາມເປັນປະທານຮ່ວມກອງປະຊຸມຂະແໜ ງການແກ້ໄຂບັນຫາ ລບຕ, ສປຊ ເພື່ອການພັດທະນາ ໄດ້ ຊ່ວຍສະໜັບສະ ໜູນລັດຖະບານລາວໃນການປະສານງານ ກັບບັນດາຄູ່ຮ່ວມງານຕ່າງໆໃນຂະແໜງການແກ້ໄຂບັນຫາ ລບຕ ແລະ ສະໜັບສະໜູນແຜນພັດທະນາຍຸດທະສາດຂະແ ໜງ ລບຕ ແຫ່ງຊາດ 10 ປີ, ເສັ້ນທາງສູ່ຄວາມປອດໄພ III ໄລຍະ 2021-2030 (SPF III). ອົງການ ຊປຊ ເພື່ອ ການພັດທະນາໄດ້ຊ່ວຍລັດຖະບານລາວ ໃນການກວດກາ ຫາຊ່ອງວ່າງດ້ານການສະໜອງທຶນພາຍໃນຂະແໜງ ການ ແລະ ຮັບປະກັນຄວາມຍືນຍົງຂອງການເຄື່ອນໄຫວ ກິດຈະກຳຫຼັງຈາກສຳເລັດການຂຈັດຫາເງິນທຶນພາຍໃຕ້ ສັນຍາການປະກອບສ່ວນຂອງຜູ້ໃຫ້ທຶນຕ່າງໆ.

### 3. ການພັດທະນາຂີດຄວາມສາມາດ

ທີມງານຊ່ຽວຊານຂອງ ອົງການ ສປຊ ເພື່ອການ ພັດທະນາໄດ້ເຮັດວຽກຢ່າງໃກ້ຊິດກັບຄູ່ຮ່ວມພັດທະນາ ອື່ນໆ ເພື່ອສ້າງຄວາມເຂັ້ມແຂງໃຫ່ແກ້ພະນັກງານ ຄຊກລ ແລະ ຄກລ ໂດຍຜ່ານການຊ່ວຍເຫຼືອໃນການພັດທະນາ

[3] ອຽກລັງ, ນິວຊີແລນ, ສ. ເກົາຫຼີ (ກອຍກ້າ), ລຸກຊຳເບີກ ແລະ ຕວັກ ກີ.

ແຜນຍຸດທະສາດ ແລະ ແຜນວຽກໃໝ່ຂອງຂະແໜງການແກ້ໄຂບັນຫາ ລບຕ. ອົງການ ສປຊ ເພື່ອການພັດທະນາ ຍັງໄດ້ທົບທວນຄືນກ່ຽວກັບຮ່າງແຜນວຽກປະຈຳປີ 2021 ຂອງ ຄຊກລ ແລະ ຄກລ ແລະ ຊ່ວຍໃນການສະຫຼຸບຜົນຂອງກອງປະຊຸມຄະນະບໍລິຫານໂຄງການ, ໄດ້ໃຫ້ຄຳແນະນຳກ່ຽວກັບແຜນການຈັດຊື້ໃນປີ 2021, ຊ່ວຍເຫຼືອ ຄຊກລ ແລະ ຄກລ ໃນການກະກຽມສຳຫຼັບການກວດສອບປະຈຳປີ ແລະ ການປະເມີນຜົນ ແລະ ການປະຕິບັດຄຳແນະນຳດ້ານການກວດສອບທີ່ກ່ຽວຂ້ອງ. ທີມງານຂອງ ສປຊ ເພື່ອການພັດທະນາ ຍັງໄດ້ປະຕິບັດວຽກງານຢ່າງໃກ້ຊິດກັບ ຄຊກລ ແລະ ຄກລ ໃນການກະກຽມ ແລະ ສົ່ງບົດລາຍງານຄວາມຄືບໜ້າໂຄງການປະຈຳປີໃຫ້ແກ່ຜູ້ໃຫ້ທຶນລາຍສະບັບ ແລະ ຊ່ວຍເຫຼືອ ຄຊກລ ໃນການກະກຽມບົດລາຍງານປະຈຳປີ.

### 4. ການລະດົມທຶນຮອນ

ອົງການ ສປຊ ເພື່ອການພັດທະນາ ໄດ້ເປັນສ່ວນສຳຄັນໃນການປະກອບສ່ວນໃຫ້ແກ່ຜູ້ໃຫ້ທຶນໃໝ່ ແລະ ຜູ້ໃຫ້ທຶນທີ່ຜ່ານມາໃນຂະແໜງການແກ້ໄຂບັນຫາ ລບຕ. ແຜນການແບ່ງປັນທຶນສະບັບໃໝ່ ກັບລັດຖະບານນິວຊີແລນ ທີ່ໄດ້ລົງນາມໃນປີ 2020 ທີ່ສະໜອງທຶນໃຫ້ແກ້ ຄຊກລ ແລະ ຄກລ ຜ່ານອົງການ ສປຊ ເພື່ອການພັດທະນາ ເພື່ອສືບຕໍ່ສະໜັບສະໜູນທີມງານ ຄກລ ຢູ່ຊຽງຂວາງ ແລະ ເສີມຂະຫຍາຍປະສິດທິຜົນຂອງສູນຝຶກອົບຮົມ ລບຕ ແຫ່ງຊາດ ແລະ ຂະແໜງການແກ້ໄຂບັນຫາ ລບຕ ໂດຍຜ່ານ ຫຄຊກລ ໃຫ້ສອດຄ່ອງກັບກິດຈະກຳພາຍໃຕ້ກອບຂອບດັ່ງກ່າວ (2021-2024). ອົງການ ສປຊ ເພື່ອການພັດທະນາ ໄດ້ປຶກສາຫາລືກັບບັນດາຜູ້ໃຫ້ທຶນທີ່ຍັງສືບຕໍ່ ແລະ ຜູ້ທີ່ມີທ່າແຮງເຊັ່ນ: ລຸກຊຳບວກ, ອັງກິດ, ຍີ່ປຸ່ນ, ເຢຍລະມັນ, ການາດາ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອສະໜັບສະໜູນທຶນເພີ່ມເຕີມຈາກປະເທດ ອັງກິດ ໃຫ້ແກ່ ຄກລ ແລະ ຄຊກລ ທີ່ບໍ່ໄດ້ມີການສະໜອງທຶນ ແລະ ການຈັດຊື້ໃນປີ 2021.

### 5. ກອງປະຊຸມທົບທວນຄັ້ງທີ 2 ຂອງສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ (2RC)

ເນື່ອງຈາກມີຂໍ້ຈຳກັດກ່ຽວກັບພະຍາດ ໂຄວິດ-19 ໃນການເດີນທາງລະຫວ່າງປະເທດ, ປີນີ້ ກະຊວງການຕ່າງປະເທດ ຈຶ່ງໄດ້ຕົກລົງແຕ່ງຕັ້ງຄະນະປະຈຳ ສປປ ລາວ ປະຈຳ ສຳນັກງານ ສປຊ ທີ່ເຈັນນີວາ ເຂົ້າຮ່ວມກອງປະຊຸມທົບທວນຄືນກ່ຽວກັບ ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ ຄັ້ງທີ 2 (2RC) ເຊິ່ງໄດ້ຈັດຂຶ້ນໃນວັນທີ 20-21 ກັນຍາ 2021 ໃນຮູບແບບປະສົມທີ່ Palais Des Nations, ເຈັນນີວາ.

### 6. ກອງປະຊຸມສາກົນຄັ້ງທີ 24 ຂອງຜູ້ອຳນວຍການການເຄື່ອນໄຫວລະເບີດຝັງດິນ ແລະ ທີ່ປຶກສາສະຫະປະຊາຊາດ (ຜ່ານກອງປະຊຸມທາງໄກ) ທີ່ເມືອງ Bonn, ປະເທດ ເຢຍລະມັນ ລະຫວ່າງວັນທີ 24-27 ພຶດສະພາ 2021.

ຜູ້ຕາງໜ້າຈາກຫ້ອງການ ຄຊກລ ນຳໂດຍທ່ານ ໂຈມແຍງ ແພງທອງສະຫວັດ, ຫົວໜ້າຫ້ອງການ ຄຊກລ ແລະ ທ່ານ ຈັນມີ ແກ້ວດາລາ, ຫົວໜ້າໜ່ວຍງານສົນທິສັນຍາສາກົນ ໄດ້ເຂົ້າຮ່ວມກອງປະຊຸມ ກອງປະຊຸມສາກົນຄັ້ງທີ 24 ຂອງຜູ້ອຳນວຍການການເຄື່ອນໄຫວລະເບີດຝັງດິນ ແລະ ທີ່ປຶກສາສະຫະປະຊາຊາດ (ຜ່ານກອງປະຊຸມທາງໄກ) ທີ່ເມືອງ Bonn, ປະເທດ ເຢຍລະມັນ ລະຫວ່າງວັນທີ 24-27 ພຶດສະພາ 2021. ບັນດາແຂກຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນຕໍ່ກອງປະຊຸມ ໂດຍໄດ້ສະເໜີບາງຈຸດສຳຄັນຕໍ່ກັບບັນຫາ ແລະ ສິ່ງທ້າທາຍຂອງການປະຕິບັດການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໃນປີທີ່ມີການແຜ່ລະບາດຂອງພະຍາດ ໂຄວິດ-19.

# ປະເທດຜູ້ໃຫ້ທຶນ

ສປປ ລາວ

ອຽກລັງ

ຍີ່ປຸ່ນ

ລຸກຊໍາບວກ

ເນເທີແລນ

ນິວຊີແລນ

ນໍ່ອກແວ

ສ. ເກົາຫຼີ

ຕວກກີ

ລາດຊະອານາຈັກອັງກິດ

ສ. ອາເມລິກາ

UNDP

ຜູ້ໃຫ້ທຶນອື່ນໆ:

- Freeman Foundation
- Japanese Mine Action Service
- Norwegian Labour Union
- World Without Mines

# UXO Operators Report



# ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ

## ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ໄດ້ສືບຕໍ່ປະຕິບັດກິດ ຈະກຳຕ່າງໆໃນການແກ້ໄຂບັນຫາ ລບຕ ຢູ່ 9 ແຂວງ ທີ່ມີ ລບຕ ຕົກຄ້າງໜັກໜ່ວງທີ່ສຸດ, ຊຶ່ງກິດຈະກຳທີ່ໄດ້ປະຕິບັດໃນປີ 2020 ປະກອບມີ:

- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:** ຄກລ ດຳເນີນ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອເຮັດໃຫ້ ປະຊາຊົນທີ່ດຳລົງຊີວິດໃນເຂດທີ່ມີ ລບຕ ຕົກຄ້າງ ຮັບຮູ້ເຖິງ ຜົນຮ້າຍ ແລະ ຄວາມອັນຕະລາຍຂອງ ລບຕ ຜ່ານການເຮັດກິດຈະກຳຕ່າງໆເຊັ່ນ: ການຮ້ອງເພັງ, ການເຕັ້ນ, ການຫຼິ້ນເກມ, ການ ຖາມ-ຕອບ ແລະ ລະຄອນຕຸກກະຕາ.
- **ການສຳຫຼວດແບບບໍ່ແມ່ນວິຊາການ:** ຄກລ ດຳເນີນການ ສຳຫຼວດແບບບໍ່ແມ່ນວິຊາການ ໂດຍການທົບທວນຄືນບັນດາ ຂໍ້ມູນທີ່ກ່ຽວຂ້ອງກັບ ລບຕ ຢູ່ບັນດາບ້ານຕ່າງໆ ແລະ ພົບປະ ກັບບັນດາຄົວເຮືອນ ເພື່ອເກັບກຳຂໍ້ມູນຈາກປະຊາຊົນ ທີ່ ເຄີຍພົບເຫັນ ລບຕ ຕົກຄ້າງຢູ່ບັນດາບ້ານ. ນອກຈາກນັ້ນ, ການສຳຫຼວດບໍ່ແມ່ນແບບວິຊາການ ຍັງໄດ້ກຳນົດຈຸດຫຼັກ ຖານ ລບຕ ໃຫ້ແກ່ການທຳລາຍ ລບຕ ແບບເຄື່ອນທີ່ ແລະ ການສຳຫຼວດແບບວິຊາການອີກດ້ວຍ. ການສຳຫຼວດແບບບໍ່ແມ່ນວິຊາການ ຍັງສາມາດກຳນົດໃຫ້ເຫັນການຕົກຄ້າງຂອງ ລບຕ ຢູ່ໃນບ້ານນັ້ນໆ ເຊັ່ນ: ການກວດກູ້ໃນໄລຍະຜ່ານມາ, ພື້ນທີ່ ລບຕ ຕົກຄ້າງ ແລະ ຈຸດຫຼັກຖານ ລບຕ.
- **ການສຳຫຼວດແບບວິຊາການ:** ຄກລ ໄດ້ດຳເນີນການສຳຫຼວດແບບວິຊາການໂດຍນຳໃຊ້ຈຸດຫຼັກຖານ ລບຕ ເປັນຈຸດເລີ່ມຕົ້ນ ແລະ ນຳໃຊ້ເຄື່ອງກວດກາລະເບີດຊອກຫາຈົນກວ່າ ຕະພົບເຫັນລະເບີດລູກຫວ່ານ ຫຼັງຈາກທຳລາຍ ແລ້ວຈຶ່ງຍ້າຍໄປບ່ອນໃໝ່. ແຕະບ໋ອກ ມີຂະໜາດ 50 ຄູນ 50 ແມັດ ນຳໃຊ້ ເຂົ້າໃນການສຳຫຼວດແບບວິຊາການ. ຢູ່ແຕ່ລະບ໋ອກ ຈະສືບ ຕໍ່ຊອກຫາຈົນກວ່າຈະພົບເຫັນລະເບີດລູກຫວ່ານ ຫຼື ໄດ້ມີການສຳຫຼວດຢູ່ໃນບ໋ອກໄປແລ້ວຫຼາຍກວ່າ 50% ຈຶ່ງສາມາດເຊົາໄດ້. ກໍລະນີສຳຫຼວດໄປແລ້ວ ພົບເຫັນຈຸດຫຼັກຖານລະເບີດລູກຫວ່ານ ແມ່ນຈະຢຸດທັນທີ ແລ້ວສືບຕໍ່ຍ້າຍໄປບ໋ອກອື່ນທີ່ຢູ່ຖັດໄປ. ຫຼັງຈາກນັ້ນ, ຂໍ້ມູນຈະຖືກບັນທຶກໄວ້ ແລະ ກຳນົດເປັນພື້ນທີ່ ລບຕ ຕົກຄ້າງ ແລ້ວລາຍງານເຂົ້າ ຖານຂໍ້ມູນຂອງ ຄຊກລ.
- **ການກວດກູ້ ລບຕ:** ຄກລ ໄດ້ດຳເນີນການກວດກູ້ ລບຕ ຕາມພື້ນທີ່ ລບຕ ຕົກຄ້າງ ທີ່ໄດ້ຈາກການສຳຫຼວດແບບວິຊາການ. ແນວໃດກໍ່ຕາມ, ໃນຖານະທີ່ ຄກລ ເປັນອົງການ ປະຕິບັດງານໜຶ່ງຂອງລັດຖະບານ, ບາງຄັ້ງຄາວ ກໍ່ໄດ້ດຳເນີນການກວດກູ້ ລບຕ ຕາມການສະເໜີຂອງປະເທດຜູ້ໃຫ້ທຶນ ສຳລັບໂຄງການພັດທະນາອື່ນໆທີ່ໄດ້ຮັບການອະນຸມັດ. ຫຼັງຈາກນັ້ນ, ກໍ່ໄດ້ມອບໝາຍໃຫ້ທີມງານກວດກູ້ ເຂົ້າໄປດຳເນີນການຊອກຫາ ແລະ ກວດກູ້ ລບຕ ອອກ ຈາກພື້ນທີ່ໂຄງການຕາມລະດັບຄວາມເລິກທີ່ຈະນຳໃຊ້. ສຳລັບເນື້ອທີ່ດິນກະສິກຳ ແມ່ນຈະເລິກ 25 ຊັງຕີແມັດ. ໃນຂະບວນການກວດກູ້ນັ້ນ ລບຕ ທີ່ຖືກພົບເຫັນຈະຖືກທຳລາຍ ຕາມຈຸດປະສົງລະດັບຄວາມເລິກທີ່ຈະນຳໃຊ້ດິນເປັນຕົ້ນຕໍ.

**ການທຳລາຍ ລບຕ ແບບເຄື່ອນທີ່:** ຄກລ ໄດ້ດຳເນີນການທຳລາຍ ລບຕ ແບບເຄື່ອນທີ່ ຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ຫຼື ທີມງານສຳຫຼວດ ໃນເວລາພົບເຫັນ ລບຕ ຕົກຄ້າງຢູ່ຕາມພື້ນທີ່ຕ່າງໆ.

**ຜົນສຳເລັດຕົ້ນຕໍໃນປີ 2021**

**ຕາຕະລາງທາງລຸ່ມນີ້ສະແດງໃຫ້ເຫັນເຖິງຜົນສຳເລັດໃນປີ 2021 ຂອງ ຄກລ**

| ລາຍການ | ເປົ້າໝາຍ | ຜົນສຳເລັດ | ທຽບເປັນເປີເຊັນ | ຜົນໄດ້ຮັບ |
|---|---|---|---|---|
| **ການໂຄສະນາສຶກສາຄວາມສ່ຽງຈາກລບຕ** | 332 ບ້ານ | 306 ບ້ານ | 92% | ສາມາດເຂົ້າເຖິງປະຊາຊົນເປັນຈຳນວນ 156,682 ຄົນ |
| **ການສຳຫຼວດແບບບໍ່ແມ່ນວິຊາການ** | 94 ບ້ານ | 94 ບ້ານ | 100% | ພົບເຫັນ ລບຕ 967 ລາຍການ. ໃນນັ້ນປະກອບມີ ສຳພາອາວຸດອື່ນ ຈຳນວນ 647 ລາຍການ |
| **ການສຳຫຼວດແບບວິຊາການ** | 4,200 ເຮັກຕາ | 4,731 ເຮັກຕາ | 113% | ພົບເຫັນ ລບຕ 6,626 ລາຍການ(83% ແມ່ນສຳພາອາວຸດອື່ນ) |
| **ການກວດກູ້ ລບຕ** | 2,679 ເຮັກຕາ | 2,653 ເຮັກຕາ | 99% | ໃນນີ້ ແມ່ນພື້ນທີ່ກະສິກຳ 2,607 ເຮັກຕາ ແລະ ດິນພັດທະນາ 46 ເຮັກຕາ, ທຳລາຍ ລບຕ 33,736 ລາຍການ (78% ແມ່ນສຳພາອາວຸດອື່ນ) ແລະ ມີຜູ້ໄດ້ຮັບຜົນປະໂຫຍດ 43,199 ຄົນ |
| **ການທຳລາຍ ລບຕ ແບບເຄື່ອນທີ່** | N/A | ສຳຫຼວດ 1,270 ເທື່ອໃນ 521 ບ້ານ ຈາກທັງໝົດ 9 ແຂວງ | N/A | ທຳລາຍ ລບຕ 12,256 ລາຍການ (71% ແມ່ນ ສຳພາອາວຸດອື່ນ) |
| **ການທຳລາຍ ລບຕ** | N/A | ໄດ້ທຳລາຍ 45,992 ລບຕ | N/A | ສາມາດທຳລາຍ ລະເບີດບົມໃຫຍ່ 54 ໜ່ວຍ, ລະເບີດລູກຫວ່ານ 35,028 ໜ່ວຍ, ລະເບີດຝັງດິນ 27 ໜ່ວຍ ແລະ ສຳພາອາວຸດອື່ນອີກ 10,883 ໜ່ວຍ |

**ກໍລະນີສຶກສາ 1**

ໃນປີ 2021, ຄກລ ສາມາດກວດກູ້ ລບຕ ອອກຈາກພື້ນທີ່ດິນ ກະສິກຳໄດ້ຫຼາຍກວ່າ 2,600 ເຮັກຕາ ໃນ 9 ແຂວງ ສາມາດຮັບ ປະກັນໃຫ້ປະຊາຊົນ ສາມາດດຳລົງຊີວິດ ແລະ ເຮັດວຽກຢູ່ ຕາມໄຮ່ນາຮົ້ວສວນໄດ້ຢ່າງປອດໄພ ໂດຍປາສະຈາກຄວາມຢ້ານກົວຂອງ ລບຕ, ຊຶ່ງໜຶ່ງໃນກໍລະນີສຶກສາຂ້າງລຸ່ມນີ້ ຈະສະແດງໃຫ້ເຫັນຄື:

ນາງ ມິນລາ ທະນູສອນ, ອາຍຸ 44 ປີ ອາໄສຢູ່ກັບ ຜົວ, ແມ່ ແລະ ລູກສາວຄົນ ທີ່ ບ້ານຕົ້ນເໜືອ, ເມືອງ ແປກ, ແຂວງ ຊຽງຂວາງ, ຄອບຄົວຂອງລາວ ມີອາຊີບ ປູກຝັງ ແລະ ລ້ຽງສັດ ໃນພື້ນ ລບຕ ຕັ້ງແຕ່ເກີດ ໂດຍບໍ່ສາມາດຫຼີກລ້ຽງໄດ້. ໃນທຸກໆປີ, ລາວຕ້ອງໄດ້ລະມັດລະວັງໃນການທຳມາຫາກິນໃນພື້ນທີ່ ລບຕ, ພາຍໃນປີໜຶ່ງ ລາວສາມາດຜະລິດເຂົ້າໄດ້ເປັນຈຳນວນ 3-4 ໂຕນ ແລະ ສົ່ງອອກຂາຍ 1-2 ໂຕນ/ປີ ເພື່ອການດຳລົງຊີວິດ. ລາຍໄດ້ຂອງມິນລາໃນແຕ່ລະປີແມ່ນ ຕົກຢູ່ປະມານ 21 ລ້ານກີບ/ຕໍ່ ເຊິ່ງໄດ້ມາຈາກການຂາຍເຂົ້າ ແລະ ຜັກຈຳນວນໜຶ່ງເຊັ່ນ: ໝາກແຕງ, ໝາກເຜັດ, ກະທຽມ ແລະ ຫົວຜັກບົ່ວ.

ເປັນໄລຍະເວລາ 10 ມື້ ຕັ້ງແຕ່ວັນທີ 1-10 ເດືອນພະຈິກ ປີ 2021 ຄກລ ໄດ້ເກັບກູ້ ລບຕ ໃນພື້ນທີ່ຂອງມິນລາ ເປັນຈຳນວນ 14,570 ຕາແມັດ ແລະ ກວດພົບເຫັນ ແລະ ທຳລາຍ ລບຕ ຈຳນວນ 63 ລາຍການ. ໃນນັ້ນ, ລວມມີ ສຳພາອາວຸດອື່ນ 43 ລາຍການ. ນາງມິນລາໄດ້ກ່າວວ່າ: "ພື້ນທີ່ຂອງຂ້ອຍໄດ້ຮັບການຊ່ວຍເຫຼືອຈາກທີມ ຄກລ ປະຈຳແຂວງຊຽງຂວາງ, ຕໍ່ໄປຂ້ອຍຄິດວ່າຂ້ອຍສາມາດປູກເຂົ້າ ແລະ ເຮັດກະສິກຳຕ່າງໆໄດ້ຫຼາຍຂຶ້ນ. ໃນອານະຄົດ ຂ້ອຍຄິດວ່າຈະຫາລາຍໄດ້ເສີມເພີ່ມຂຶ້ນຈາກການເຮັດບໍ່ລ້ຽງປາເພື່ອສົ່ງອອກຂາຍ. ສຸດທ້າຍນີ້ ຂ້ອຍຮູ້ສຶກຂອບໃຈຫຼູ້ສະໜັບສະໜູນ ແລະ ທີມງານ ເກັບກູ້ ລບຕ ປະຈຳແຂວງຊຽງຂວາງຫຼາຍໆ ທີ່ໄດ້ມາສຳຫຼວດໃນພື້ນທີ່ອາໄສຂອງຂ້ອຍ ແລະ ຫວັງວ່າໃນອານະຄົດປະເທດຂອງເຮົາຈະບໍ່ມີ ພື້ນທີ່ ລບຕ ອີກຕໍ່ໄປ



---

**ກໍລະນີສຶກສາ 2**

ທ້າວ ດົມພອນ ສີມມະວົງ ອາຍຸ 44 ປີ ອາຊີບ ຊາວນາ, ອາໄສຢູ່ໃນພື້ນທີ່ສ່ຽງ ລບຕ ທີ່ບ້ານ ຕົ້ນເໜືອ, ເມືອງ ແປກ, ແຂວງ ຊຽງຂວາງ. ລາວດຳລົງຊີວິດໃນເຂດນີ້ມາເປັນເວລາຫຼາຍກວ່າ 40 ປີ. ລາວໄດ້ເລົ່າວ່າ ຕອນລາວອາຍຸຍັງນ້ອຍນັ້ນ, ໃນຊ່ວງສົງຄາມອິນດູຈີນ ພໍ່ຂອງລາວໃນເສຍຊີວິດຈາກ ເຫດການ ລະເບີດຂອງ ລບຕ ແລະ ແມ່ຂອງລາວກໍໄດ້ຮັບບາດເຈັບສາຫັດ. ເນື່ອງຈາກການສູນເສຍຫົວໜ້າຄອບຄົວ ລາວ ແລະ ແມ່ຂອງລາວພ້ອມດ້ວຍນ້ອງອີກ 2 ຄົນຈຳຕ້ອງໄດ້ປະກອບອາຊີບປູກຝັງ ເຖິງແມ່ນວ່າພວກເຂົາຈະຮູ້ດີຢູ່ແລ້ວວ່າພື້ນທີ່ນັ້ນເປັນພື້ນທີ່ສ່ຽງ. ເປັນເວລາຫຼາຍກວ່າ 20 ປີທີ່ລາວໄດ້ປະກອບອາຊີບນີ້ ຢູ່ໃນພື້ນທີ່ສ່ຽງ ລບຕ ເພື່ອຫາລ້ຽງຄອບຄົວ, ຜົນຜະລິດໃນແຕ່ລະປີແມ່ນສາມາດຜະລິດເຂົ້າໄດ້ 3ໂຕນ/ປີ ແລະ ສົ່ງອອກຂາຍ 1 ໂຕນ/ປີ ເປັນເງິນຈຳນວນ 23 ລ້ານກີບ/ປີ.

ໃນຊ່ວງທ້າຍປີ 2021, ດົມພອນພົບເກັບສິ້ນສ່ວນ ລບຕ ໃນບໍລິເວນພື້ນທີ່ອາໄສຂອງລາວ ແລະ ໄດ້ລາຍງານໃຫ້ນາຍບ້ານ ເພື່ອຕິດຕໍ່ຫາ ຄກລ ປະຈຳແຂວງຊຽງຂວາງ. ບ້ານຕົ້ນເໜືອເປັນບ້ານໜຶ່ງທີ່ມີ ລບຕ ຕົກຄ້າງເປັນຈຳນວນຫຼວງຫຼາຍ ແລະ ຖືກຈັດເປັນພື້ນທີ່ ລບຕ ຕົກຄ້າງ. ໃນວັນທີ 11-17 ພະຈິກ 2021 ຄກລ ປະຈຳແຂວງຊຽງຂວາງໄດ້

ກວດພົບ ລບຕ 45 ລາຍການ, ໃນນັ້ນແມ່ນ ສຳພາອາວຸດອື່ນ 20 ລາຍການ. ດົມພອນ ຮູ້ສຶກດີໃຈ ແລະ ປອດໄພ, ລາວໄດ້ກ່າວວ່າ: "ຂ້ອຍຮູ້ສຶກປອດໄພຈາກ ລບຕ ຫຼາຍຂຶ້ນ ແລະ ມີແຜນຈະນຳໃຊ້ພື້ນທີ່ໃນການເຮັດກະສິກຳ ເປັນຕົ້ນແມ່ນການປູກມັນຕົ້ນ"



**ສິ່ງທ້າທາຍ**

- ພືດພັນທີ່ດົກໜາຍັງຄົງເປັນບັນຫາ ແລະ ເຮັດໃຫ້ການເຮັດວຽກຂອງທີມງານ ສຳຫຼວດທາງວິຊາການ ແລະ ກວດກູ້ ລບຕ ຊ້າລົງ. ການທຳລາຍພືດຜັກ ເປັນອຸປະສັກຕົ້ນຕໍສຳລັບທີມງານ ເນື່ອງຈາກວ່າພວກເຂົາຈຳຕ້ອງໄດ້ຕັດພືດຜັກທີ່ດົກໜານັ້ນດ້ວຍຕົວເອງ. ເນື່ອງຈາກຂໍ້ຈຳກັດດ້ານພະລັງງານໃນການນຳໃຊ້ເຄື່ອງຕັດໄຟຟ້າ ເຮັດໃຫ້ຕ້ອງໃຊ້ແຮງງານຂອງຄົນມາຊ່ວຍຈຶ່ງຈຳເປັນຕ້ອງໄດ້ໃຊ້ເວລາໃນການຕັດເພີ່ມຂຶ້ນ. ສິ່ງທ້າທາຍນີ້ສົ່ງຜົນໄປເຖິງເປົ້າໝາຍໃນການເກັບກູ້ ລບຕ ແລະ ຜົນສຳເລັດຂອງ ຄກລ ປະຈຳປີ. ພາຍໃນປີ 2022, ເພື່ອຮັບມືກັບບັນຫາພືດພັນທີ່ດົກໜາຢູ່ພາກສະໜາມ, ຄກລ ແລະ ອົງການ Tetra Tech ໄດ້ວາງແຜນທີ່ຈະນຳທີມງານ ຕັດພັນພືດ ຢູ່ແຂວງສະຫວັນນະເຂດ ມາທົດລອງນຳໃຊ້ ແລະ ຫວັງວ່າຈະໄດ້ຮັບຜົນລັບທີ່ດີ ເພື່ອທີ່ຈະໄດ້ນຳໄປຂະຫຍາຍໃຊ້ໃນແຂວງອື່ນໃນຊຸມປີຕໍ່ໜ້າ.
- ປະຈຸບັນ, ຄກລ ໄດ້ສົ່ງໜ່ວຍເກັບກູ້ ແລະ ໜ່ວຍງານສຳຫຼວດແບບວິຊາການ ອອກປະຕິບັດໜ້າທີ່ເກັບກູ້ເມື່ອມີລາຍງານສຸກເສີນຂອງ ລບຕ ໂດຍຊາວບ້ານ ຫຼືທີມງານ ສຳຫຼວດບໍ່ແມ່ນແບບວິຊາການ. ແນວໃດກໍຕາມ, ໜ່ວຍງານ ການກວດກູ້ເຄື່ອນທີ່ຍັງສາມາດ ຫຼຸດປະສິດທິພາບ ແລະ ໝາກຜົນຂອງທີມງານ ສຳຫຼວດແບບວິຊາການ ແລະ ທີມງານກວດກູ້ ລບຕ. ຄກລ ຈຶ່ງຕ້ອງໄດ້ມີ ທີມງານກວດກູ້ເຄື່ອນທີ່ປະຈຳໃນແຕ່ລະແຂວງ. ຍ້ອນຂາດງົບປະມານ, ຄກລ ຈຶ່ງບໍ່ສາມາດຈ້າງທີມກວດກູ້ເຄື່ອນທີ່ປະຈຳໄວ້ໃນແຕ່ລະແຂວງ, ຍົກເວັ້ນແຕ່ແຂວງຊຽງຂວາງທີ່ໄດ້ຮັບສະໜັບສະໜູນຈາກ ລັດຖະບານ ນິວຊີແລນ ໂດຍຜ່ານ ອົງການສະຫະປະຊາຊາດ ເຊິ່ງໄດ້ເຄື່ອນໄຫວໃນວຽກງານກວດກູ້ເຄື່ອນທີ່ນີ້ໂດຍສະເພາະ.
- ໃນປີ 2022, ຄກລ ອາດຈະປະສົບກັບຄວາມຫຍຸ້ງຍາກໃນການດຳເນີນງານພາຍໃນແຂວງຫຼວງພະບາງ, ຫົວພັນ, ຈຳປາສັກ ແລະ ເຊກອງ ເນື່ອງຈາກບັນຫາການຂາດງົບປະມານສະໜັບສະໜູນ. ຖ້າບໍ່ມີງົບປະມານສະໜັບສະໜູນ, ຄກລ ຈະໄດ້ຢຸດຕິວຽກງານຢູ່ບັນດາແຂວງເຫລົ່ານັ້ນ ເຊິ່ງຈະສົ່ງຜົນກະທົບຕໍ່ແຜນການປະຈຳປີ ແລະ ຜົນໄດ້ຮັບທີ່ຄາດໄວ້ໃນປີ 2022.

**ຄູ່ຮ່ວມງານ**

- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ
- ລັດຖະບານໄອແລນ
- ລັດຖະບານຍີ່ປຸ່ນ
- ລັດຖະບານ ສປປ ລາວ
- ລັດຖະບານລຸກຊຳບວກ
- ລັດຖະບານນິວຊີແລນ
- ລັດຖະບານ ສ. ອາເມລິກາ
- ອົງການແກ້ໄຂບັນຫາລະເບີດຝັງດິນຂອງກຳປູເຈຍ
- ອົງການສາກົນເພື່ອການຮ່ວມມືຂອງຂອງຍີ່ປຸ່ນ (ໄຈກາ)

- ອົງການບໍລິການແກ້ໄຂລະເບີດຝັງດິນຂອງຍີ່ປຸ່ນ (ເຈມັດ)
- ລະບົບສາກົນເພື່ອການຮ່ວມມືຂອງຍີ່ປຸ່ນ (ຈິກ)
- ບໍລິສັດ ເທັດທູາເທັກ (ທີທີທີ)
- ສະມາຄົມໂລກປອດຈາກລະເບີດຝັງດິນ

**ວຽກງານຈຸດສຸມໃນປີ 2021**

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນເຖິງຄາດໝາຍກິດຈະກຳຂອງ ຄກລ ສຳລັບປີ 2022

| *ແຂວງ* | *ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ບ້ານ)* | *ການສຳຫຼວດແບບບໍ່ແມ່ນວິຊາການ (ບ້ານ)* | *ການສຳຫຼວດແບບວິຊາການ (ເຮັກຕ້າ)* | *ການກວດກູ້ (ເຮັກຕ້າ)* |
|---|---|---|---|---|
| *ຫຼວງພະບາງ* | 45 | 14 | 300 | 111 |
| *ຫົວພັນ* | 54 | 14 | 500 | 140 |
| *ຊຽງຂວາງ* | 50 | 15 | 1,200 | 705 |
| *ຄຳມ່ວນ* | 60 | 12 | 500 | 355 |
| *ສະຫວັນນະເຂດ* | 50 | 12 | 900 | 665 |
| *ສາລະວັນ* | 60 | 12 | 500 | 383 |
| *ເຊກອງ* | 12 | 12 | 300 | 240 |
| *ຈຳປາສັກ* | 50 | 16 | 450 | 202 |
| *ອັດຕະປື* | 50 | 12 | 350 | 388 |
| **Total:** | **431** | **119** | **5,000** | **3,189** |



**ພື້ນທີ່ການປະຕິບັດງານ**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການໂຄສະນາສຶກສາພື້ນທີ່ຄວາມສ່ຽງໄພຂອງ ລບຕ | • ແຂວງຫຼວງພະບາງ: ເມືອງ ຫຼວງພະບາງ, ປາກອູ, ນ້ຳບາກ, ປາກແສງ, ໂພນໄຊ, ພູຄູນ<br>• ແຂວງຫົວພັນ: ເມືອງຊຳເໜືອ, ວຽງໄຊ, ສອນ<br>• ແຂວງຊຽງຂວາງ: ເມືອງ ແປກ, ຮຽມ, ພູກູດ ແລະ ໝອກໄມ<br>• ແຂວງຄຳມ່ວນ: ເມືອງ ມະຫາໄຊ, ບົວລະພາ, ໄຊບົວທອງ, ເຊບັ້ງໄຟ<br>• ແຂວງສະຫວັນນະເຂດ: ເມືອງ ພີນ, ເຊໂປນ, ນອງ, ທ່າພະລານໄຊ, ວິລະບູລີ<br>• ແຂວງສາລະວັນ: ເມືອງ ສາລະວັນ, ຕະໂອຍ, ຕຸ້ມລານ, ວາປີ, ຄົງເຊໂດນ, ເລົ່າງາມ, ສະໝ້ວຍ<br>• ແຂວງເຊກອງ: ເມືອງ ລະມາມ, ກະລຶມ, ດາກຈຶງ, ທ່າແຕງ<br>• ແຂວງຈຳປາສັກ: ເມືອງ ບາຈຽງຈະເລີນສຸກ, ປາກຊ່ອງ, ປະທຸມພອນ, ຈຳປາສັກ, ມູນລະປະມຸກ, ຊະນະສົມບູນ, ສຸຂຸມມາ ແລະ ໂຂງ<br>• ແຂວງອັດຕະປື: ເມືອງ ໄຊເສດຖາ, ສະໜາມໄຊ, ສາມັກຄີໄຊ, ສານໄຊ ແລະ ພູວົງ |
| ການສຳຫຼວດແບບບໍ່ແມ່ນວິຊາການ | • ແຂວງຫຼວງພະບາງ: ເມືອງ ຫຼວງພະບາງ, ປາກອູ, ນ້ຳບາກ, ປາກແສງ, ໂພນໄຊ, ພູຄູນ<br>• ແຂວງຫົວພັນ: ເມືອງຊຳເໜືອ, ວຽງໄຊ, ສອນ<br>• ແຂວງຊຽງຂວາງ: ເມືອງ ແປກ, ຮຽມ, ພູກູດ ແລະ ໝອກໄມ<br>• ແຂວງຄຳມ່ວນ: ເມືອງ ມະຫາໄຊ, ບົວລະພາ, ໄຊບົວທອງ, ເຊບັ້ງໄຟ<br>• ແຂວງສະຫວັນນະເຂດ: ເມືອງ ພີນ, ເຊໂປນ, ນອງ, ທ່າພະລານໄຊ, ວິລະບູລີ<br>• ແຂວງສາລະວັນ: ເມືອງ ສາລະວັນ, ຕະໂອຍ, ຕຸ້ມລານ, ວາປີ, ຄົງເຊໂດນ, ເລົ່າງາມ, ສະໝ້ວຍ<br>• ແຂວງເຊກອງ: ເມືອງ ລະມາມ, ກະລຶມ, ດາກຈຶງ, ທ່າແຕງ<br>• ແຂວງຈຳປາສັກ: ເມືອງ ບາຈຽງຈະເລີນສຸກ, ປາກຊ່ອງ, ປະທຸມພອນ, ຈຳປາສັກ, ມູນລະປະມຸກ, ຊະນະສົມບູນ, ສຸຂຸມມາ ແລະ ໂຂງ<br>• ແຂວງອັດຕະປື: ເມືອງ ໄຊເສດຖາ, ສະໜາມໄຊ, ສາມັກຄີໄຊ, ສານໄຊ ແລະ ພູວົງ |

**ລາຍງານການເງິນ**

**ປະເທດຜູ້ໃຫ້ທຶນ ທີ່ປະກອບທຶນໃຫ້ໃນປີ 2021, ສັງລວມທຶນທີ່ໄດ້ຮັບ (ໂດລາ ສຫລ), ວັນທີ 1 ມັງກອນ ເຖິງ 31 ທັນວາ 2021**

| ແຫຼ່ງທຶນ | ທຶນທີ່ກຳນົດ ກິດຈະກຳ | ທຶນທີ່ບໍ່ກຳນົດ ກິດຈະກຳ | ລວມ | % |
|---|---|---|---|---|
| ສປຊ | | | | |
| ນິວຊີແລນ | 982,092 | - | 982,092 | 12% |
| ໄອແລນ | - | 204,869 | 204,869 | 3% |
| ລຸກຊຳບວກ | - | - | - | 0% |
| ການາດາ | - | - | - | 0% |
| | **982,092** | **204,869** | **1,186,961** | **15%** |
| ຮ່ວມມືສອງຝ່າຍ | | | | |
| ເທັດທຣາເທັກ (ສ. ອາເມລິກາ) | 5,436,295 | - | 5,436,295 | 68% |
| ອົງການຈິກ(ຍີ່ປຸ່ນ) | 1,094,054 | - | 1,094,054 | 14% |
| ອົງການເອັນພີເອ | - | - | - | 0% |
| ອົງການເວີວິດເອົ້າມາຍ | 153,754 | - | 153,754 | 2% |
| ກອງທຶນເຄົ້າເຕົ້ພາດ | - | - | - | 0% |
| ອົງການເຈມັດ | 134.610 | - | 134,610 | 2% |
| | **6,818,712** | **-** | **9,818,715** | **85%** |
| ທຶນສົມທົບຈາກລັດຖະບານລາວ ແລະ ອື່ນໆ | | | | |
| ລັດຖະບານລາວ | - | - | - | 0% |
| ອື່ນໆ-ຄ່າຝຶກອົບຮົມ, ການຂາຍເຄື່ອງທີ່ລະນຶກຢູ່ຫ້ອງວາງສະແດງ ລບຕ ແຂວງ ຫຼວງພະບາງ | - | 3,064 | 3,064 | 0% |
| | | 3,064 | 3,064 | 0% |
| **ລວມ** | **7,800,804** | **2077,933** | **8,008,737** | **100%** |
| **%** | **97%** | **3%** | **100%** | |

**ລາຍຈ່າຍຂອງໂຄງການ (ຕາມແຜນການປີ) ທຽບໃສ່ ລາຍຈ່າຍໂຕຈິງ ແຍກຕາມປະເທດຜູ້ໃຫ້ທຶນ (ໂດລາ ສຫລ)**

**ວັນທີ 1 ມັງກອນ ເຖິງ 31 ທັນວາ 2021**

| | ຄາດຄະເນລາຍຈ່າຍ (ຕາມແຜນການປີ)-ສະບັບເບື້ອງຕົ້ນ | ຄາດຄະເນລາຍຈ່າຍ (ຕາມແຜນການປີ)-ສະບັບປັບປຸງ | ລາຍຈ່າຍຕົວຈິງ | ລາຍຈ່າຍຕົວຈິງ/ ຄາດຄະເນລາຍຈ່າຍ (%) |
|---|---|---|---|---|
| ທຶນຜ່ານ ສປຊ-ທຶນທີ່ ສປຊ ບໍລິຫານຄຸ້ມຄອງ | | | | |
| ນິວຊີແລນ | 1,596,203 | 1,618,143 | 1,596,262 | 99% |

| | | | | |
|---|---|---|---|---|
| ໄອແລນ | 70,000 | 272,661 | 211,641 | 78% |
| ລຸກຊຳບວກ | 37,500 | 39,660 | 39,660 | 100% |
| ອິດສະຕາລີ | - | - | 1 | - |
| ສ. ເກົາຫຼີ | - | - | 394 | - |
| | **1,703,703** | **1,930,464** | **1,847,958** | **96%** |
| ທຶນຮ່ວມມືສອງຝ່າຍ | | | | |
| ເຫັດທຣາເຫັກ (ສ. ອາເມລິກາ) | 5,582,912 | 6,277,319 | 5,462,827 | 98% |
| ອົງການຈິກ(ຍີ່ປຸ່ນ) | 2,093,983 | 2,093,983 | 1,498,043 | 72% |
| ອົງການເວີວິດເອົ້າມາຍ | 191,835 | 191,835 | 170,630 | 89% |
| ນໍເວ | - | - | 14 | - |
| ກອງທຶນເຄົາເຕີ້ພັດ | - | - | 29,899 | - |
| ອົງການເຈມັດ | - | 228,398 | 135,912 | - |
| | **7,868,730** | **8,791,536** | **7,297,325** | **83%** |
| ທຶນສົມທົບຂອງລັດຖະບານລາວ ແລະ ອື່ນໆ | | | | |
| ອື່ນໆ | - | - | 23,041 | - |
| **ທຶນບໍ່ພຽງພໍ** | **1,237,936** | **408,739** | **0** | **0%** |
| **ລວມ(ລວມທຶນບໍ່ພຽງພໍ)** | **10,810,369** | **11,130,739** | **9,168,324** | **82%** |
| **ລວມ(ບໍ່ລວມທຶນບໍ່ພຽງພໍ)** | **9,572,433** | **10,722,000** | **9,168,324** | **86%** |

**ການປະກອບສ່ວນຂອງຜູ້ໃຫ້ທຶນໃນປີ 2021**

| ຈຳນວນທຶນທີ່ໄດ້ຮັບໃນຊ່ວງວັນທີ 1 ມັງກອນ - 31 ທັນວາ 2021 | |
|---|---|
| ລາຍການຜູ້ໃຫ້ທຶນ | ຈຳນວນທຶນ (ໂດລາ ສຫລ) |
| ນີວຊີແລນ | 982,092 |
| ໄອແລນ | 204,869 |
| ເຫັດທຣາເຫັກ (ສ. ອາເມລິກາ) | 5,436,295 |
| ອົງການຈິກ (ຍີ່ປຸ່ນ) | 1,094,054 |
| ອົງການເຈມັດ | 134,610 |
| ກອງທຶນເຄົາເຕີ້ພັດ | 153,754 |
| ອື່ນໆ | 3,064 |
| **ລວມ** | **8,008,737** |

## ອົງການໃຫ້ຄໍາປຶກສາກ່ຽວກັບການແກ້ໄຂລະເບີດຝັງດິນ (MAG)

ໃນປີ 2021, ອົງການແມັກ ໄດ້ສືບຕໍ່ຈັດຕັ້ງປະຕິບັດການແກ້ໄຂບັນຫາ ລບຕ ເພື່ອມະນຸດສະທໍາຢູ່ 2 ແຂວງທີ່ມີ ລບຕ ຕົກຄ້າງໜັກໜ່ວງທີ່ສຸດຄື: ແຂວງຊຽງຂວາງ ແລະ ຄໍາມ່ວນ. ອົງການແມັກ ຍັງໄດ້ດໍາເນີນການຮັບສະໝັກ ແລະ ຝຶກອົບຮົມຢ່າງກວ້າງຂວາງໃນປີ 2021 ເພື່ອເປັນສ່ວນໜຶ່ງຂອງການຂະຫຍາຍວຽກງານການເກັບກູ້ໃນແຂວງຊຽງຂວາງ. ກິດຈະກໍາທີ່ໄດ້ຈັດຕັ້ງປະຕິບັດປະກອບມີ:

- **ການສໍາຫຼວດແບບບໍ່ແມ່ນວິຊາການ:** ທີມງານພົວພັນປະສານງານ ໄດ້ດໍາເນີນການປະຊຸມພົບປະຢູ່ບັນດາບ້ານຕ່າງໆເພື່ອເກັບກໍາຂໍ້ມູນ ແລະ ສໍາພາດບັນດາຄົວເຮືອນເພື່ອນໍາມາກໍານົດພື້ນທີ່ ລບຕ ຕົກຄ້າງຢູ່ບັນດາຊຸມຊົນ. ທີມງານພົວພັນປະສານງານ ຈະດໍາເນີນການລົງສືບສວນເກັບກໍາຂໍ້ມູນຢູ່ບັນດາບ້ານແຕ່ຕົ້ນຈົນຈົບ ແລະ ຈຸດຫຼັກຖານ ລບຕ ໄດ້ຖືກກໍານົດອອກມາ ແລ້ວສົ່ງຕໍ່ສູ່ຂະບວນການສໍາຫຼວດແບບວິຊາການ.
- **ການສໍາຫຼວດແບບວິຊາການ:** ອົງການແມັກ ຈະສືບດໍາເນີນ ການສໍາຫຼວດແບບວິຊາການ ຕາມຈຸດຫຼັກຖານ ລບຕ ທີ່ໄດ້ຈາກການສໍາຫຼວດແບບບໍ່ແມ່ນວິຊາການເພື່ອກໍານົດພື້ນ ທີ່ ລບຕ ຕົກຄ້າງ. ອົງການແມັກ ໄດ້ສົ່ງທີມງານ ສໍາຫຼວດແບບວິຊາການ ຈໍານວນ 20 ທີມ ປະຈໍາຢູ່ແຂວງຊຽງຂວາງ ແລະ 1 ທີມ ປະຈໍາຢູ່ແຂວງຄໍາມ່ວນ.
- **ການກວດກູ້ ລບຕ:** ອົງການແມັກ ຈະຈັດບູລິມະສິດກວດກູ້ ພື້ນທີ່ ລບຕ ຕົກຄ້າງ ແລ້ວສົ່ງມອບພື້ນທີ່ ທີ່ປອດໄພຄືນໃຫ້ຊຸມຊົນ ເພື່ອນໍາໃຊ້ເຂົ້າໃນການຜະລິດກະສິກໍາ. ອົງການແມັກ ໄດ້ສົ່ງໜ່ວຍເກັບກູ້ 32 ຄົນ ປະຈໍາຢູ່ແຂວງຊ ຽງຂວາງ ແລະ 15 ຄົນ ປະຈໍາຢູ່ແຂວງ ຄໍາມ່ວນ.
- **ການທໍາລາຍ ລບຕ:** ອົງການແມັກ ໄດ້ດໍາເນີນການທໍາລາຍ ລບຕ ຢູ່ບັນດາຊຸມຊົນຕ່າງໆ ເພື່ອຫຼຸດຜ່ອນຄວາມສ່ຽງຈາກ ລບຕ. ການທໍາລາຍປະກອບມີການທໍາລາຍລະເບີດລູກຫວ່ານ, ລະເບີດບົມໃຫຍ່ ແລະ ສິ່ງເສດເຫຼືອປາງສົງຄາມ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:** ອົງການແມັກ ໄດ້ດໍາເນີນກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ບັນດາຊຸມຊົນຕ່າງໆ.

**ຜົນສໍາເລັດຕົ້ນຕໍໃນປີ 2021**

ໂດຍທຶນສະໜັບສະໜູນຂອງລັດຖະບານ ສ. ອາເມລິກາ, ລາດຊະອານາຈັກອັງກິດ, ລັດຖະບານ ນໍອກແວ ແລະ ລຸກຊໍາບວກ, ພ້ອມກັບຜູ້ໃຫ້ທຶນຈາກພາກສ່ວນອື່ນໆຈໍານວນໜຶ່ງ, ອົງການແມັກ ໄດ້ສືບຕໍ່ດໍາເນີນກິດຈະກໍາແກ້ໄຂບັນຫາ ລບຕ ເພື່ອມະນຸດສະທໍາຢູ່ແຂວງຄໍາມ່ວນ ແລະ ຊຽງຂວາງ. ຜົນສໍາເລັດຕົ້ນຕໍປະກອບມີ:

- ການສໍາຫຼວດແບບບໍ່ແມ່ນວິຊາການ: 55 ບ້ານ, 35 ບ້ານ ໃນແຂວງ ຄໍາມ່ວນ ແລະ 23 ບ້ານໃນແຂວງຊຽງຂວາງ.
- ການສໍາຫຼວດແບບວິຊາການ: ເນື້ອທີ່ດິນ 104,910 ເຮັກຕາໄດ້ຖືກກໍານົດເປັນພື້ນທີ່ ລບຕ ຕົກຄ້າງ.
- ການກວດກູ້ ລບຕ: ເນື້ອທີ່ດິນ 1,035 ເຮັກຕາ ໄດ້ຖືກກວດກູ້ ແລະ ສົ່ງຄືນມອບໃຫ້ຊຸມຊົນ. ການກວດກູ້ປະກອບມີເນື້ອທີ່ດິນພັດທະນາຕ່າງໆເຊັ່ນ: ໂຮງຮຽນ, ຂົວ ແລະ ສະຖານທີ່ທ່ອງທ່ຽວ.
- ການທໍາລາຍ ລບຕ: ລບຕ ທໍາລາຍ 20,348 ໜ່ວຍຖືກທໍາລາຍ (87% ແມ່ນລະເບີດລູກຫວ່ານ) ທີ່ຜ່ານຂະບວນການຕ່າງໆ (ການສໍາຫຼວດແບບວິຊາການ, ການກວດກູ້ ແລະ ການທໍາລາຍ ລບຕ ແບບເຄື່ອນທີ່).

- ການທຳລາຍ ລບຕ ແບບເຄື່ອນທີ່: ອົງການແມັກ ໄດ້ຕອບຮັບການທຳລາຍ ລບຕ ແບບເຄື່ອນທີ່ ຈຳນວນ 2,236 ເທື່ອຄັ້ງ ສາມາດທຳລາຍ ລບຕ ໄດ້ 3,493 ໜ່ວຍ.
- ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ: ອົງການແມັກ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ 274 ເທື່ອຄັ້ງ, ມີຜູ້ໄດ້ຮັບຜົນປະໂຫຍດ 6,571 ຄົນ (1,740 ຜູ້ຍິງ, 1,574 ຜູ້ຊາຍ , 825 ເດັກຍິງ ແລະ 859 ເດັກຊາຍ)

**ກໍລະນີສຶກສາ**

ທ້າວ ວົງ ນາຍບ້ານ ບ້ານ ທຳ, ເມືອງຄູນ, ແຂວງຊຽງຂວາງ. ໝູ່ບ້ານນີ້ປະກອບມີ 52 ຄອບຄົວອາໄສຢູ່. ທ້າວ ວົງ ໄດ້ກ່າວວ່າ: "ຂ້ອຍໄດ້ຮັບເລືອກເປັນນາຍບ້ານຕັ້ງແຕ່ປີ 1998, ຂ້ອຍໄດ້ຮັບແຈ້ງຈາກລູກບ້ານກ່ຽວກັບ ລບຕ ທຸກໆອາທິດ. ຖືວ່າບ້ານເຮົາແມ່ນມີ ລບຕ ເປັນຈຳນວນຫຼວງຫຼາຍ, ພວກເຮົາຕ້ອງໄດ້ລະມັດລະວັງຕະຫຼອດ ບໍ່ວ່າຈະເຮັດກິດຈະກຳຕ່າງໆ ເຊັ່ນ: ປູກເຂົ້າ, ປູກຜັກ ຫຼື ໄປເກັບເຄື່ອງປ່າຂອງດົງ. ໃນປີ 1998 ໃນຂະນະທີ່ຂ້ອຍໄດ້ໃຊ້ ຄວາຍຂອງຂ້ອຍໄຖນາ ແລ້ວຂ້ອຍໄດ້ກວດພົບ ລບຕ ຈຳນວນ 25 ໜ່ວຍ ໃນພື້ນທີ່ນາຂອງຂ້ອຍພາຍໃນມື້ດຽວ. ຂ້ອຍຮູ້ສຶກຢ້ານ ແຕ່ກໍບໍ່ມີທາງເລືອກ, ຂ້ອຍຕ້ອງໄດ້ຍອມຮັບຄວາມຈິງ. ຖ້າຂ້ອຍປະມັນໄວ້ແບບນີ້ ຂ້ອຍກໍບໍ່ສາມາດເຮັດນາໄດ້. ດັ່ງນັ້ນ, ຂ້ອຍຈຶ່ງໄດ້ເກັບມັນມາໃສ່ກະຕ່າໄມ້ ແລະ ເອົາໄວ້ໄກໆທົ່ງນາ. ສຳລັບປະຊາຊົນໃນບ້ານຂອງຂ້ອຍ ແມ່ນດຳລົງຊີວິດດ້ວຍການເຮັດກະສິກຳ, ແຕ່ ລບຕ ແມ່ນບັນຫາຫຼັກໃນການນຳໃຊ້ທີ່ພື້ນທີ່ດິນ ເພື່ອການດຳລົງຊີວິດ ແລະ ບາງເຂດແມ່ນເປັນໄປບໍ່ໄດ້ເລີຍທີ່ຈະເຮັດກະສິກຳ. ພວກເຮົາຢາກຂໍໃຫ້ພື້ນທີ່ຂອງຊຸມຊົນໄດ້ຮັບການເກັບກູ້ ລບຕ. ພື້ນທີ່ທີ່ຖືກອອກແບບເພື່ອເກັບກູ້ແມ່ນໄດ້ຖືກແບ່ງອອກລະຫວ່າງແຕ່ລະຄົວເຮືອນໃນໝູ່ບ້ານ"

ໃນປີ 2015, ອົງການແມັກໄດ້ກວດກູ້ ພື້ນທີ່ໃນເຂດບ້ານທຳ ເປັນຈຳນວນ 50,157 ຕາແມັດ ແລະ ໄດ້ເກັບກູ້ ແລະ ທຳລາຍ ລບຕ 245 ໜ່ວຍ.

ທ້າວ ວົງ ຍັງໄດ້ອະທິບາຍອີກວ່າ: "ແຕ່ກ່ອນ, ປະຊາຊົນພະຍາຍາມຈະໃຊ້ທີ່ດິນຊຸມຊົນ ແຕ່ກໍກວດເຫັນ ລບຕ ເປັນຈຳນວນຫຼວງຫຼາຍ. ດັ່ງນັ້ນ, ພວກເຂົາຈຶ່ງຢຸດທີ່ຈະໃຊ້ມັນ. ແຕ່ຫຼັງຈາກມີການເກັບກູ້ ລບຕ, ພວກເຮົາກໍສາມາດນຳໃຊ້ທີ່ດິນຊຸມຊົນໄດ້ຢ່າງປອດໄພ. ພວກເຮົາບໍ່ໄດ້ກັງວົນກ່ຽວກັບ ລບຕ ອີກແລ້ວ. ພວກເຮົານຳໃຊ້ທີ່ດິນນີ້ເຂົ້າໃນການປູກຜັກເພື່ອກິນ ແລະ ສົ່ງຂາຍ. ມີຫຼາຍກວ່າ 20 ຄົວເຮືອນນຳໃຊ້ທີ່ດິນໃນການປູກຜັກ ເຊິ່ງແຕ່ລະປີສາມາດສ້າງລາຍໄດ້ເປັນຈຳນວນ 5 – 10,000,000 ກີບຕໍ່ປີ (US$500-1000). ຊາວບ້ານທີ່ນຳໃຊ້ທີ່ດິນຍັງໄດ້ໃຊ້ນ້ຳ ເພື່ອການປູກຜັກ, ເນື່ອງຈາກວ່າ ພາຍຫຼັງມີການ ເກັບກູ້ ແລະ ທຳລາຍ ລບຕ ແລ້ວ, ໃນປີ 2017 ກອງທຶນຊ່ວຍເຫຼືອຈາກປະເທດ ສ. ເກົາຫຼີໄດ້ສະໜັບສະໜູນກໍ່ສ້າງລະບົບຊົນລະປະທານ ເພື່ອນຳໃຊ້ໃນການກະສິກຳຂອງພວກເຮົາ. ຈຶ່ງເຮັດໃຫ້ເຮົາມີສິນຄ້າທີ່ມີຄຸນນະພາບ"

ນາງ ລຳກົງ ແມ່ນ ຊາວບ້ານຜູ້ໜຶ່ງທີ່ນຳໃຊ້ທີ່ດິນໄດ້ກ່າວວ່າ: "ແຕ່ກ່ອນ ຂ້ອຍໄດ້ໃຫ້ຄົນເຊົ່າທີ່ດິນຂອງຂ້ອບ ຍ້ອນວ່າລູກຂ້ອຍຍັງນ້ອຍ, ຂ້ອຍມີທີ່ດິນປະມານ 4,000 ຕາແມັດ ສຳລັບການເຮັດສວນ. ເມື່ອລູກຂ້ອຍອາຍຸໄດ້ 10 ປີ ຂ້ອຍຈຶ່ງໄດ້ກັບມານຳໃຊ້ທີ່ດິນຂອງຂ້ອຍ, ຂ້ອຍໄດ້ເຮັດສວນຢູ່ນີ້ເປັນເວລາ 2 ປີ ແລະ ແຕ່ລະປີໄດ້ເກັບຄ່າເຊົ່າດິນໄປນຳ. ພືດສວນຂອງຂ້ອຍສ່ວນຫຼາຍຈະແມ່ນ ກະລ່ຳ. ເຊິ່ງເປັນແຫຼ່ງລາຍໄດ້ຂອງຂ້ອຍ ຂ້ອຍໄດ້ເກັບເງິນຈາກພືດສວນຂອງຂ້ອຍ ເພື່ອປຸກບ້ານ ແລະ ຂ້ອຍຫາກໍປຸກບ້ານສຳເລັດໃນປີກ່ອນນີ້".

**ວຽກງານຈຸດສຸມໃນປີ 2022**

ອົງການແມັກ ຈະສືບຕໍ່ຊອກຫາແຫຼ່ງທຶນສະໜັບສະໜູນຈາກປະເທດຜູ້ໃຫ້ທຶນອື່ນໆ ເພື່ອຮັກສາການປະຕິບັດງານຢູ່ ສປປ ລາວ.

ອົງການແມັກ ໄດ້ຮັບທຶນສະໜັບສະໜູນໃຫມ່ ຈາກລັດຖະບານລຸກຊຳບວກ ໃນປີ 2022 ເພື່ອສະໜັບສະໜູນວຽກງານໃນແຂວງຄຳມ່ວນ ແລະ ນອກຈາກນັ້ນ, ຍັງໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ລາດຊະອານາຈັກອັງກິດ ເຊິ່ງຈະເຫັນໄດ້

ຈາກການລະດົມທຶນໃນປີ 2022 ເພື່ອທີ່ຈະໃຊ້ເຂົ້າໃນວຽກງານສະໜັບສະໜຸນທີມເກັບກູ້ ລບຕ ທີ່ແຂວງຄຳມ່ວນ. ສິ່ງເຫຼົ່ານີ້ແມ່ນຈະເປັນໂອກາດທີ່ດີທີ່ຈະເພີ່ມຄວາມຮັບຮູ້ ແລະ ເຂົ້າເຖິງແຫຼ່ງທຶນສະໜັບສະໜູນໃໝ່ຂອງປະເທດລາວ.

ຈຸດປະສົງຂອງອົງການແມັກ ແລະ ບູລິມະສິດຕົ້ນຕໍໃນປີ 2022 ແມ່ນຈະສືບຕໍ່ກວດກູ້ພື້ນທີ່ ລບຕ ຕົກຄ້າງສູງ ແລະ ນຳໃຊ້ທຶນເຂົ້າໃນການປະຕິບັດງານໃຫ້ມີປະສິດທິຜົນ. ອົງການແມັກ ຈະສືບຕໍ່ດຳເນີນການສຳຫຼວດແບບວິຊາການ ແລະ ກວດກູ້ ລບຕ ຢູ່ແຂວງຊຽງຂວາງ ແລະ ຄຳມ່ວນ. ນອກຈາກນັ້ນ, ອົງການແມັກຈະສືບຕໍ່ສຸມໃສ່ເພີ່ມການປະຕິບັດງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອກວດກູ້ພື້ນທີ່ ລບຕ ຕົກຄ້າງສູງ ໃຫ້ແກ່ບັນດາຊຸມຊົນຕ່າງໆ ແລະ ຈຸດປະສົງການພັດທະນາຂອງບັນດາຄູ່ຮ່ວມພັດທະນາອື່ນໆ.

ອົງການແມັກ ຈະສືບຕໍ່ສຸມໃສ່ເຮັດວຽກຢ່າງໃກ້ສິດກັບລັດຖະບານ ສປປ ລາວ ແລະ ຊຸມຊົນຕ່າງໆ ເພື່ອກຳນົດບູລິມະສິດ ວຽກງານແກ້ໄຂບັນຫາ ລບຕ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ແລະ ຊອກຫາຍຸດທະສາດຂອງຄູ່ຮ່ວມງານ ແລະ ຮ່ວມມືກັບອົງການຈັດຕັ້ງອື່ນໆ ເພື່ອເຮັດໃຫ້ການກວດກູ້ ລບຕ ຮັບໃຊ້ວຽກງານດ້ານຕ່າງໆຢ່າງຖືກຕ້ອງ.

ອົງການແມັກ ຍັງຈະສຸມໃສ່ຫຼັກການທາງດ້ານບົດບາດຍິງ-ຊາຍ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ແນ່ໃສ່ການປະຕິບັດບັນດາຫຼັກການຂ້າງເທິງ ໃຫ້ເຊື່ອມສານເຂົ້າໃນບັນດາແຜນງານ ແລະ ການປະຕິບັດງານຕົວຈິງ ເຂົ້າໃນການການຈັດຕັ້ງປະຕິບັດຍຸດທະສາດ ແລະ ຄຳແນະນຳຕ່າງໆ ຈາກຜົນການປະເມີນທີ່ຜ່ານມາ.

**ພື້ນທີ່ການປະຕິບັດງານ ໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດແບບບໍ່ແມ່ນວິຊາການ | ເມືອງ ມະຫາໄຊ/ແຂວງ ຄຳມ່ວນ/<br>ເມືອງ ໜອງແຮດ, ແປກ/ ແຂວງ ຊຽງຂວາງ |
| ການສຳຫຼວດແບບວິຊາການ | ເມືອງ ບົວລະພາ/ແຂວງ ຄຳມ່ວນ<br>ເມືອງ ຄຳ, ຄູນ, ໜອງແຮດ, ແປກ, ພາໄຊ, ພູກູດ/ແຂວງ ຊຽງຂວາງ |
| ການກວດກູ້ ລບຕ | ເມືອງ ບົວລະພາ, ຍົມມະລາດ, ໄຊບົວທອງ/ແຂວງ ຄຳມ່ວນ<br>ເມືອງ ຄູນ, ໜອງແຮດ, ແປກ, ພາໄຊ, ພູກູດ/ແຂວງ ຊຽງຂວາງ |
| ການທຳລາຍ ລບຕ ເຄື່ອນທີ່ | ເມືອງ ບົວລະພາ, ຍົມມະລາດ, ມະຫາໄຊ/ແຂວງ ຄຳມ່ວນ<br>ເມືອງ ຄຳ, ຄູນ, ໜອງແຮດ, ແປກ, ພາໄຊ, ພູກູດ/ແຂວງ ຊຽງຂວາງ |
| ການໂຄສະນາສຶກສາຄວາມສ່ຽງ ລບຕ | ເມືອງ ມະຫາໄຊ/ແຂວງຄຳມ່ວນ<br>ເມືອງ ຄູນ, ແປກ, ພາໄຊ, /ແຂວງ ຊຽງຂວາງ |
| ການປະເມີນຫຼັງຈາກການເກັບກູ້ ລບຕ | ແຂວງ ຊຽງຂວາງ ແລະ ຄຳມ່ວນ |
| ການກວດກາຄຸນນະພາບ | ກວດກາຄຸນນະພາບພາຍໃນ ຢູ່ ແຂວງຊຽງຂວາງ ແລະ ຄຳມ່ວນ |

## ການເງິນໃນປີ 2021

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການສຳຫຼວດ ລບຕ ຢູ່ແຂວງ ຊຽງຂວາງ, ສປປ ລາວ. | 21/9/18 | ຫາ 31/12/21 ຂະຫຍາຍເຖິງ 30/4/22 | 14,462,91 ໂດລາ ສຫຼ | 4,401,070 ໂດລາ ສຫຼ | ຫ້ອງການຫຼຸດຜ່ອນ ອາວຸດຄັງແສງ ແລະ ການສູ້ຮົບຂອງ ກະຊວງການ ຕ່າງປະເທດ ສ. ອາເມລິກາ |
| ໂຄງການສຳຫຼວດ ລບຕ ຢູ່ ແຂວງ ຊຽງຂວາງ (ກອງທຶນເພີ່ມຕື່ມ) ສປປ ລາວ. | 19/10/20 | ຫາ 31/12/21 | 6,534,333 ໂດລາ ສຫຼ | 3,644,473 ໂດລາ ສຫຼ | ຫ້ອງການຫຼຸດຜ່ອນ ອາວຸດຄັງແສງ ແລະ ການສູ້ຮົບຂອງ ກະຊວງການ ຕ່າງປະເທດ ສ. ອາເມລິກາ |
| ໂຄງການກວດກູ້ ລບຕ ຢູ່ ແຂວງ ຄຳມ່ວນ. (ໄລຍະທີ່ II), ສປປ ລາວ | 18/11/20 | ຫາ 31/3/21 | 1,759,459 ໂດລາ ສຫຼ | 602,117 ໂດລາ ສຫຼ | ອົງການພັດທະນາ ສາກົນແຫ່ງ ລາດຊະ ອານາຈັກອັງກິດ |
| ໂຄງການເຊື່ອມສານວຽກງານ ການສຳຫຼວດ ແລະ ກວດກູ້ ລະເບີດລູກຫວ່ານຢູ່ເມືອງ ບົວລະພາ ແຂວງຄຳມ່ວນ (ໄລຍະ VI), ສປປ ລາວ. | 22/12/20 | ຫາ 31/7/21 | 542,363 ໂດລາ ສຫຼ | 394,458 ໂດລາ ສຫຼ | ກະຊວງການ ຕ່າງປະເທດນ໋ອກແວ |
| ໂຄງການກວດກູ້ ລບຕ ເພື່ອສະ ໜັບສະໜູນການພັດທະນາຊຸມຊົນ ຢູ່ເມືອງ ຍົມມະລາດ, ແຂວງຄຳ ມ່ວນ, ສປປ ລາວ. | 19/7/19 | ຫາ 3/8/20 ແລະ ຂະຫຍາຍ ເຖິງ 28/2/21 | 500,000 ໂດລາ ສຫຼ | 43,206 ໂດລາ ສຫຼ | ຄະນະກຳມະການ ບັນເທົາທຸກຂອງ ສະຫະລັດ ເມໂທດິດ |
| ໂຄງການກວດກູ້ລະເບີດລູກຫວ່ານ ແລະ ລບຕ ຢູ່ຊຸມຊົນທຸກຍາກ ຢູ່ ຈຸດສຸມພັດທະນາລັງຄັງ-ວັງມະເນີ, ເມືອງ ບົວລະພາ, ແຂວງ ຄຳມ່ວນ , ສປປ ລາວ. | 24/3/20 | ຫາ 31/8/21 | 272,728 ໂດລາ ສຫຼ | 149,584 ໂດລາ ສຫຼ | ມູນນິທິຟີແມນ |
| ໂຄງການເກັບກູ້ ລບຕ ທີ່ແຂວງ ຄຳມ່ວນ, ສປປ ລາວ. | 26/5/21 | ຫາ 30/6/21 | 90,000 ໂດລາ ສຫຼ | 90,000 ໂດລາ ສຫຼ | ສຳນັກງານໃຫຍ່ ອົງການ ແມັກ |
| ໂຄງການເກັບກູ້ ລບຕໃຫ້ແກ່ຈຸດ ພັດທະນາທີ່ສຳຄັນ ທີ່ແຂວງ ຄຳ ມ່ວນ, ສປປ ລາວ. | 20/1/21 | ຫາ 31/1/22 ແລະ ຂະຫຍາຍ ເຖິງ 31/3/22 | 150,803 ໂດລາ ສຫຼ | 95,371 ໂດລາ ສຫຼ | ພາຫສ່ວນໜຶ່ງຈາກ ແຫຼ່ງທຶນລຸກຊຳບວກ |
| ໂຄງການປະສານງານກັບຊຸມຊົນ ແລະ ຮັບມືສຸກເສີນກັບ ລບຕ ທີ່ ແຂວງ ຄຳມ່ວນ, ສປປ ລາວ. | 30/9/21 | ຫາ 19/3/21 | 227,869 ໂດລາ ສຫຼ | 95,218 ໂດລາ ສຫຼ | ສະຖານທູດຍີ່ປຸ່ນ ປະຈຳ ສປປ ລາວ |
| ໂຄງການສຳຫຼວດແບບປະສົມ ປະສານ ແລະ ເກັບກູ້ ລະເບີດລູກ | 8/2/22 | ຫາ 31/7/22 | 667,096 ໂດລາ ສຫຼ | 131,905 ໂດລາ ສຫຼ | ກະຊວງການ ຕ່າງປະເທດນ໋ອກແວ |

| | | | | | |
|---|---|---|---|---|---|
| ຫວ່ານ ທີ່ເມືອງ ບົວລະພາ, ແຂວງ ຄຳມ່ວນ, ສປປ ລາວ. | | | | | |
| ໂຄງການເກັບກູ້ ລະເບີດລູກຫວ່ານ ແລະ ລບຕ ທີ່ ລັງຄັງ. | 19/5/22 | ຫາ 31/8/22 | 203,780 ໂດລາ ສຫຼ | 82,098 ໂດລາ ສຫຼ | ມູນນິທິຟູ່ແມນ |
| ໂຄງການ ເກັບກູ້ ລບຕ ທີ່ແຂວງ ຄຳມ່ວນ, ສປປ ລາວ. | 21/3/22 | ຫາ 31/3/22 | 1,079,855 ໂດລາ ສຫຼ | 572,249 ໂດລາ ສຫຼ | ອົງການພັດທະນາ ສາກົນແຫ່ງ ລາດຊະ ອານາຈັກອັງກິດ |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021 (ໂດລາ ສຫຼ) : 110,301,749 ໂດລາ ສຫຼ | |
|---|---|
| ລາຍລະອຽດລາຍຈ່າຍໂດຍກົງ ໃນປີ 2021 (ໂດລາ ສຫຼ) | |
| ລາຍລະອຽດ | ຈຳນວນ |
| ເງິນເດືອນພະນັກງານ | 1,709,796 |
| ລາຍຈ່າຍປະຕິບັດງານ | 7,014,319 |
| -ຄ່າໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 134,231 |
| -ການສຳຫຼວດ ແລະ ກວດກູ້ ລບຕ | 6,880,088 |
| ລາຍຈ່າຍຈັດຊື້ວັດຖຸອຸປະກອນ | 1,577,634 |
| **ລວມ** | **10,301,749** |

**ປະເທດຜູ້ໃຫ້ທຶນໃນປີ 2021 (ໂດລາ ສຫຼ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ລັດຖະບານ ສ. ອາເມລິກາ - ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ, ກະຊວງການຕ່າງປະເທດ ສ. ອາເມລິກາ | 4,401,070 |
| ລັດຖະບານ ສ. ອາເມລິກາ - ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ, ກະຊວງການຕ່າງປະເທດ ສ. ອາເມລິກາ | 3,644,473 |
| ອົງການພັດທະນາສາກົນແຫ່ງ ລາດຊະອານາຈັກອັງກິດ | 602,117 |
| ກະຊວງການຕ່າງປະເທດນໍອກແວ | 394,458 |
| ຄະນະກຳມະການບັນເທົາທຸກຂອງ ສະຫະລັດ ເມໂທດິດ | 43,206 |
| ມູນນິທິຟູ່ແມນ | 149,584 |
| ສຳນັກງານໃຫຍ່ ອົງການ ແມັກ | 90,000 |
| ໜ່ວຍງານການຮ່ວມມື ແລະ ພັດທະນາ ປະເທດ ລຸກຊຳບວກ | 95,371 |
| ສະຖານທູດຍີ່ປຸ່ນ ປະຈຳ ສປປ ລາວ | 95,218 |
| ກະຊວງການຕ່າງປະເທດນໍອກແວ | 131,905 |
| ມູນນິທິຟູ່ແມນ | 82,098 |
| ອົງການພັດທະນາສາກົນແຫ່ງ ລາດຊະອານາຈັກອັງກິດ | 572,249 |
| **ລວມ** | **10,301,749** |

## ອົງການເອັນພີເອ (NPA)

**ກິດຈະກຳໃນປີ 2021**

ໃນປີ 2021, ເນື່ອງຈາກວ່າໄດ້ຮັບເງິນສະໜັບສະໜູນເພີ່ມ ຈາກ ລັດຖະບານ ສ. ອາເມລິກາ, ອົງການ ເອັນພີເອໄດ້ ເພີ່ມທີມກວດກູ້ຂຶ້ນຕື່ມອີກ 4 ທີມ (ລວມທີມກວດກູ້ຈາກ ປີກ່ອນ 9 ທີມ) ເພື່ອດຳເນີນການສຳຫຼວດໃນ 4 ແຂວງ ພາກໃຕ້ຂອງ ສປປ ລາວ ພ້ອມກັບຮັກສາມາດຕະຖານ ຄວາມສາມາດເພື່ອຕອບສະໜອງການສຳຫຼວດແບບໃໝ່ໆ. **ອົງການ ເອັນພີເອໄດ້ດຳເນີນ 3 ກິດຈະກຳຕົ້ນຕໍໃນປີ 2021 ເຊິ່ງປະກອບມີ:**

- **ການກວດກູ້ພື້ນທີ່ ລບຕ ຕົກຄ້າງ**: ອົງການ ເອັນພີເອ ນຳໃຊ້ທີມກວດກູ້ 20 ທີມເພື່ອດຳເນີນການ ກວດກູ້ ລບຕ ຕົກຄ້າງຢູ່ແຂວງ ອັດຕະປື, ຈຳປາສັກ, ສາລະວັນ ແລະ ເຊກອງ.
- **ການສຳຫຼວດຊອກຫາລະເບີດລູກຫວ່ານ**: ປະກອບດ້ວຍ ການສຳຫຼວດແບບບໍ່ແມ່ນວິຊາການ ແລະ ການສຳຫຼວດແບບວິຊາການ. ອົງການ ເອນພີເອ ນຳໃຊ້ທີມກວດກູ້ 8 ທີມເພື່ອດຳເນີນການສຳ ຫຼວດຊອກຫາລະເບີດລູກຫວ່ານຢູ່ແຂວງ ອັດຕະປື , ຈຳປາສັກ, ສາລະວັນ ແລະ ເຊກອງ
- **ວຽກງານກວດກູ້ ລບຕ/ການກວດກູ້ ລບຕ ແບບເຄື່ອນທີ່:** ອົງການ ເອັນພີເອ ໄດ້ດຳເນີນການຢູ່ ແຂວງ ອັດຕະປື, ຈຳປາສັກ, ສາລະວັນ ແລະ ເຊກອງ

**ຜົນສຳເລັດຕົ້ນຕໍໃນປີ 2021**

ອີງຕາມການລາຍງານຈາກຖານຂໍ້ມູນ ລບຕ ແຫ່ງ ສປປ ລາວ, ຜົນສຳເລັດຕົ້ນຕໍຂອງອົງການ ເອັນພີເອ ໃນປີ 2021 ປະກອບມີ:

- ການກວດກູ້ພື້ນທີ່ ລບຕ ຕົກຄ້າງ: ພື້ນທີ່ຊຸມຊົນ ຈຳນວນ 542 ເຮັກຕາ ໄດ້ຮັບການກວດກູ້ ແລະ ສາມາດນຳໃຊ້ໄດ້.
- **ການສຳຫຼວດແບບວິຊາການ**: ພື້ນທີ່ດິນປະມານ 502 ເຮັກຕາໄດ້ຮັບການສຳຫຼວດ, ພື້ນທີ່ດິນ ຈຳນວນ 38 ເຂດ ໄດ້ຖືກຢັ້ງຢືນເປັນເຂດ ອັນຕະລາຍກວມເອົາເນື້ອທີ່ປະມານ 159 ເຮັກຕາ.
- **ການທຳລາຍ ລບຕ:** ລບຕ ຈຳນວນ 6,790 ໜ່ວຍ ຖືກທຳລາຍ, ໃນນັ້ນມີລະເບີດລູກຫວ່ານ 6,248 ໜ່ວຍ ແລະ ເສດສິ້ນສ່ວນລະເບີດຕ່າງໆ 542 ໜ່ວຍ.
- **ວຽກງານເກັບກູ້ ລບຕ/ການເກັບກູ້ ລບຕ ແບບເຄື່ອນທີ່:** ອົງການ ເອັນພີເອ ໄດ້ດຳເນີນວຽກງານ ເກັບກູ້ ລບຕ/ການເກັບກູ້ ລບຕ ແບບເຄື່ອນທີ່ 128 ເທື່ອ, ໄດ້ທຳລາຍ ລບຕ 775 ໜ່ວຍ ແລະ ລະເບີດຝັງດິນ 1 ໜ່ວຍ.
- **ຜູ້ໄດ້ຮັບຜົນປະໂຫຍດ**: ມີຜູ້ໄດ້ຮັບຜົນປະໂຫຍດ 6,558 ຄົນ ແລະ 58,775 ຄົນ ແມ່ນໄດ້ຮັບຜົນ ປະໂຫຍດທາງອ້ອມ ຈາກການສຳຫຼດ ແລະ ກວດກູ້ ລບຕ ຂອງອົງການ ເອັນພີເອ ໃນປີ 2021.
- **ບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ**: ອົງການ ເອັນພີເອ ສືບຕໍ່ເຮັດວຽກຮ່ວມກັບອົງການພູມໃຈ ທີ່ເກີດເປັນລາວ, ເຊິ່ງເປັນອົງການລະດັບຊາດເພື່ອ ໂຄສະນາສິດທິ ແລະ ການບໍ່ຈຳແນກຄົນທຸກເພດ, ເອກະລັກ ແລະ ການສະແດງອອກ. ຈັດຕັ້ງກອງ ປະຊຸມ ເພື່ອສຸມໃສ່ການສຳພາດ ແລະ ຝຶກອົບຮົມ ພະນັກງານ ເພື່ອສົ່ງເສີມຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ເຄົາລົບສິດທິເຊິ່ງກັນ ແລະ ກັນ.

ການປົກປັກຮັກສາສິ່ງແວດລ້ອມ: ອົງການເອັນພີເອ ຮ່ວມ ກັບ ຊີໂລ ເວສ ລາວ ໃນການຈັດຕັ້ງການຝຶກອົບຮົມໃນ

ຫົວຂໍ້ ປົກປັກຮັກສາສິ່ງແວດລ້ອມ ໃຫ້ແກ່ ພະນັກງານຫຼາຍກວ່າ 4000 ຄົນ. ອົງການ ເອັນພີເອ ໄດ້ປັບປຸງຫ້ອງການໃຫ້ເປັນຫ້ອງການສີຂຽວ ແລະ ນຳໃຊ້ເຄື່ອງມືທີ່ປະສິດທິພາບ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ໄດ້ສ້າງຈຸດຣີໄຊເຄີລ ແລະ ເຄື່ອງຍ່ອຍສະຫຼາຍຢູ່ໂຮງຮຽນມັດທະຍົມ 3 ແຫ່ງ ໃນເຂດດຳເນີນງານຂອງປ່າສະຫງວນແຫ່ງຊາດ ແລະ ໄດ້ສະໜັບສະໜູນກິດຈະກຳຂອງຊາວໜຸ່ມ ເພື່ອການພັດທະນາແບບຍືນຍົງ, ໂດຍເນັ້ນໃສ່ການປົກປ້ອງສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງທີ 18 ເພື່ອໃຫ້ການດຳລົງຊີວິດປອດໄພຈາກ ລບຕ.

**ກໍລະນີສຶກສາ**



*Ms Khambay and her family (NPA Photo)*

ນາງ ຄຳໃບ ມັນລຸງ ອາຍຸ 55 ອາຊີບ ຊາວນາ ແລະ ແມ່ເຮືອນ. ລາວບໍ່ໄດ້ຮູ້ມາກ່ອນວ່າຄອບຄົວຂອງລາວນັ້ນອາໄສຢູ່ໃນພື້ນທີ່ ລບຕ ມາເປັນເວລາດົນນານເກືອບທົດສະວັດ.

ມື້ນີ້ໜຶ່ງ ຂະນະທີ່ລາວ ແລະ ລູກສາວກຳລັງອະນາໄມ ແລະ ຈູດເສດຂີ້ເຫຍື້ອທີ່ມາຈາກເສດພືດຜົນຂອງລາວ ໃນພື້ນທີ່ຫຼັງສວນ ທີ່ລາວໄດ້ອາໄສຢູ່ມາຕັ້ງແຕ່ ປີ 1973. ພື້ນທີ່ດິນນັ້ນໄດ້ຖືກນຳໃຊ້ເຂົ້າໃນການປູກກາເຟ ແລະ ໝາກເຜັດມາເປັນເວລາຫຼາຍກວ່າ 40 ປີ, ໃນປີ 2021, ຄອບຄົວຂອງລາວໄດ້ວາງແຜນຈະປູກໝາກອຶໃນສ່ວນໜຶ່ງຂອງພື້ນທີ່ດັ່ງກ່າວໃກ້ກັບສວນຜັກ ແລະ ເຮືອນຄົວ. ນາງ ຄຳໃບ ໄດ້ເລົ່າວ່າ: “ໃນຂະນະທີ່ຂ້ອຍກຳລັງເກັບເສດຫຍ້າຕ່າງໆ ແລະ ກຳລັງຈະຈູດມັນໃກ້ໆສວນຜັກຂ້ອຍນັ້ນ, ຂ້ອຍສັງເກດເຫັນບາງຢ່າງຄ້າຍໆຄືລູກໝາກອຶນ້ອຍ. ໂຊກດີທີ່ຂ້ອຍມີບັນຫາກ່ຽວກັບສາຍຕາ ກໍເລີຍເອີ້ນຜົວຂ້ອຍໄປເບິ່ງ, ຫຼັງຈາກຜົວຂ້ອຍໄປເບິ່ງ ລາວກໍບອກວ່າມັນແມ່ນລະເບີດ. ຂ້ອຍຮູ້ສຶກຢ້ານຫຼາຍຍ້ອນວ່າເກືອບຈະເຜົາລະເບີດ.”

ຜົວຂອງລາວໄດ້ຮີບຮ້ອນແຈ້ງໄປຍັງນາຍບ້ານ ພ້ອມກັບບອກໃຫ້ລູກໆ ແລະ ເພື່ອນບ້ານຂອງລາວ ບໍ່ຕ້ອງເຂົ້າໃກ້ເຂດດັ່ງກ່າວ. ນາຍບ້ານໄດ້ແຈ້ງໄປຍັງ ອົງການ ເອັນພີເອ. ຈາກການກວດສອບຂອງອົງການ ເອັນພີເອໄດ້ໃຫ້ຮູ້ວ່າ ລບຕ ດັ່ງກ່າວແມ່ນ ລະເບີດມີ M-26 ແລະ ໄດ້ຖືກທຳລາຍໃນພື້ນທີ່ນັ້ນ ໃນວັນທີ 15 ກຸມພາ 2022 ໂດຍການໃຫ້ຄວາມຮ່ວມມືຂອງປະຊາຊົນໃນເຂດນັ້ນ. ຫລັງຈາກເຫດການນັ້ນ, ຄອບຄົວ ນາງ ຄຳໃບ ກໍສາມາດສືບຕໍ່ດຳລົງຊີວິດ ແລະ ເຮັດກິດຈະກຳຕ່າງໆໄດ້ຢ່າງປອດໄພ, ນາງ ຄຳໃບໄດ້ ກ່າວອີກວ່າ: “ຂ້ອຍຮູ້ສຶກດີໃຈ ແລະ ຫາຍກັງວົນກັບລູກໆ, ຄອບຄົວ ແລະ ເພື່ອນບ້ານຂອງຂ້ອຍ ຫຼັງຈາກທີ່ໄດ້ທຳລາຍ ລບຕ”

## ວຽກງານຈຸດສຸມໃນປີ 2022

ອົງການ ເອັນພີເອ ຈະສືບຕໍ່ປະຕິບັດງານ ໃນປີ 2022, ໂດຍເພີ່ມກອງທຶນສະໜັບສະໜູນຂອງກະຊວງການຕ່າງປະເທດ ສ. ອາເມລິກາ. ການເກັບກູ້ຈະດຳເນີນຢູ່ໃນເຂດອັນຕະລາຍທີ່ໄດ້ຮັບການຢືນຢັນຈາກການສຳຫຼວດ ໂດຍອີງໃສ່ກອງທຶນສະໜັບສະໜູນຂອງກະຊວງການຕ່າງປະເທດ ສ. ອາເມລິກາ ແລະ ຈະສຸມໃສ່ບ້ານທີ່ມີການພັດທະນາດ້ານເສດຖະກິດ-ສັງຄົມ ແລະ ພື້ນທີ່ບູລິມະສິດອື່ນໆ ທີ່ທາງອຳນາດການປົກຄອງບ້ານ ແລະ ຄຊກລ ໄດ້ປະສານຮ່ວມກັນ. ທີມງານສຳຫຼວດແບບປະສົມປະສານຈຳນວນ 9 ທີມ ຈະຍັງຄົງດຳເນີນການປະຕິບັດງານໃນຂົງເຂດຂອງອົງການ ເອັນພີເອ ໄດ້ເມື່ອມີການຮຽກຮ້ອງຕ້ອງການໃນອານະຄົດ. ອົງການເອັນພີເອຍັງສືບຕໍ່ວຽກງານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ.

ນອກຈາກນັ້ນ, ໃນປີ 2022, ອົງການ ເອັນພີເອ ຍັງຈະເລີ່ມໂຄງການພັດທະນາຄວາມສາມາດສະເພາະ 3 ປີ ເພື່ອສະໜັບສະໜູນຄວາມສາມາດໃນການຄຸ້ມຄອງຂໍ້ມູນ

ຂ່າວສານຂອງ ຄຊກລ, ດ້ວຍການສະໜອງທຶນເພີ່ມເຕີມ ຈາກກອງທຶນຂອງກະຊວງການຕ່າງປະເທດ ສ. ອາເມລິກາ, ເຊິ່ງຢູ່ໃນຂັ້ນຕອນລໍຖ້າ ເຊັນສັນຍາບົດ ບັນທຶກຄວາມເຂົ້າໃຈ ສະບັບໃໝ່.

ສິ່ງທ້າທາຍຕົ້ນຕໍຂອງພວກເຮົາ ຍັງຄົງແມ່ນການ ຮັບປະກັນໃຫ້ບົດບັນທຶກຄວາມເຂົ້າໃຈ ຖືກອະນຸມັດຮອງ ຮັບຕາມກອບເວລາທີ່ກຳນົດໄວ້ ແນ່ໃສ່ເຮັດໃຫ້ການຂໍ ອະນຸມັດຂະຫຍາຍເວລາການປະຕິບັດງານ, ການຈັດຊື້ ວັດຖຸອຸປະກອນ ແລະ ການຮັບສະໝັກພະນັກງານ ທັນຕາມໄລຍະເວລາທີ່ກຳນົດ. ນອກຈາກນັ້ນ, ອົງການ ເອັນພີເອ ແມ່ນຍັງບໍ່ສາມາດແນະນຳການໃຊ້ເຄື່ອງມືເຊັ່ນ: ໝາກວດຄົ້ນ ລບຕ ຫຼື Drones ເພື່ອເພີ່ມປະສິດທິພາບ ໃນວຽກງານການສຳຫຼວດ ແລະ ເກັບກູ້ຕາມແຜນການ ໃນປີ 2021.

**ຄູ່ຮ່ວມງານ**

- ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ຫ້ອງການຄຸ້ມຄອງວຽກງານແກ້ໄຂບັນຫາລະເບີດບໍ່ທັນ ແຕກ ແຂວງອັດຕະປື, ຈຳປາສັກ, ສາລະວັນ ແລະ ເຊກອງ
- ລັດຖະບານແຫ່ງ ສ. ອາເມລິກາ
- ນ໋ອກແວ
- ສະຫະພັນແຮງງານ ນ໋ອກແວ

**ພື້ນທີ່ການປະຕິບັດງານ ໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດບໍ່ແມ່ນແບບວິຊາການ | ແຂວງ ສາລະວັນ: ເມືອງ ສາລະວັນ, ສະມ້ວຍ, ຕະໂອ້ຍ |
| ການສຳຫຼວດແບບວິຊາການ | ແຂວງ ອັດຕະປື: ເມືອງ ສາມັກຄີໄຊ, ສານໄຊ, ໄຊເສດຖາ<br>ແຂວງ ຈຳປາສັກ: ເມືອງ ປາກຊ່ອງ, ຊະນະສົມບູນ<br>ແຂວງ ສາລະວັນ: ເມືອງ ສາລະວັນ, ສະມ້ວຍ, ຕະໂອ້ຍ, ຕຸ້ມລານ, ວາປີ |
| ການກວດກູ້ ລບຕ | ແຂວງ ອັດຕະປື: ເມືອງ ພູວົງ, ສາມັກຄີໄຊ, ສານໄຊ, ສະໜາມໄຊ<br>ແຂວງ ຈຳປາສັກ: ເມືອງ ບາຈຽງຈະເລີນສຸກ, ມູນລະປະມຸກ, ປາກຊ່ອງ, ຊະນະສົມບູນ<br>ແຂວງ ສາລະວັນ: ເມືອງ ຄົງເຊໂດນ, ເລົ່າງາມ, ສາລະວັນ, ສະມ້ວຍ, ຕະໂອ້ຍ, ຕຸ້ມລານ, ວາປີ<br>ແຂວງ ເຊກອງ: ເມືອງ ດາກຈຶງ, ລະມາມ |
| ການທຳລາຍ ລບຕ ແບບເຄື່ອນທີ່ | ແຂວງ ອັດຕະປື: ເມືອງ ພູວົງ, ສາມັກຄີໄຊ, ສານໄຊ, ສະໜາມໄຊ<br>ແຂວງ ຈຳປາສັກ: ເມືອງ ບາຈຽງຈະເລີນສຸກ, ມູນລະປະມຸກ, ປາກຊ່ອງ, ສຸຂຸມມາ, ຊະນະສົມບູນ<br>ແຂວງ ສາລະວັນ: ເມືອງ ຄົງເຊໂດນ, ເລົ່າງາມ, ສາລະວັນ, ສະມ້ວຍ, ຕະໂອ້ຍ, ຕຸ້ມລານ, ວາປີ<br>ແຂວງ ເຊກອງ: ເມືອງ ດາກຈຶງ, ທ່າແຕງ |
| ການປະເມີນຫຼັງການກວດກູ້ | ແຂວງ ອັດຕະປື: ເມືອງ ພູວົງ, ສານໄຊ, ໄຊເສດຖາ<br>ແຂວງ ຈຳປາສັກ: ເມືອງ ບາຈຽງຈະເລີນສຸກ, ມູນລະປະມຸກ, ປາກຊ່ອງ, ສຸຂຸມມາ, ຊະນະສົມບູນ<br>ແຂວງ ສາລະວັນ: ເມືອງ ສາລະວັນ, ສະມ້ວຍ, ຕຸ້ມລານ, ວາປີ<br>ແຂວງ ເຊກອງ: ເມືອງ ດາກຈຶງ, ລະມາມ |

**ການເງິນໃນປີ 2021**

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການສຳຫຼວດ ແລະ ເກັບກູ້ ລບຕ ໄລຍະທີIV | 30/4/21 | 1/1/21-31/12/21 | 7,123,785 ໂດລາ ສຫ | 7,123,785 ໂດລາ ສຫ | ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບຂອງກະຊວງການຕ່າງປະເທດ ສ. ອາເມລິກາ ແລະ ກະຊວງການຕ່າງປະເທດນໍ໋ອກແວ |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021 (ໂດລາ ສຫ): 6,223,785 ໂດລາ ສຫ | |
|---|---|
| ລາຍລະອຽດລາຍຈ່າຍໃນປີ 2021 | |
| ລາຍການ | ຈຳນວນ |
| ເງິນເດືອນພະນັກງານ | 650,617 |
| ລາຍຈ່າຍການປະຕິບັດງານ | 4,757,660 |
| ລາຍຈ່າຍການຈັດຊື້ວັດຖຸອຸປະກອນ | 815,508 |
| ລວມ | 6,223,785 |

| ທຶນທາງອ້ອມທີ່ໄດ້ຮັບໃນປີ 2021 (ໂດລາ ສຫ): 459,397 ໂດລາ ສຫ | |
|---|---|
| ລາຍລະອຽດລາຍຈ່າຍໃນປີ 2021 | |
| ລາຍການ | ຈຳນວນ |
| ເງິນເດືອນພະນັກງານ | |
| ລາຍຈ່າຍການປະຕິບັດງານ | 459,397 |
| ລາຍຈ່າຍການຈັດຊື້ວັດຖຸອຸປະກອນ | |
| ລວມ | 459,397 |

**ປະເທດຜູ້ໃຫ້ທຶນ ໃນປີ 2021 (ໂດລາ ສຫ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບຂອງກະຊວງການຕ່າງປະເທດ ສ. ອາເມລິກາ | 7,000,000 |
| ກະຊວງການຕ່າງປະເທດນໍ໋ອກແວ | 654,206 |
| ສະຫະພັນແຮງງານ ປະເທດ ນໍ໋ອກແວ | 37,037 |
| ລວມ | 7,691,243 |

## ອົງການຮາໂລທຼາດ

**ກິດຈະກຳໃນປີ 2021**

ໃນປີ 2021, ຮາໂລທຼາດ ໄດ້ສືບຕໍ່ດຳເນີນການສຳຫຼວດແບບຄົບຊຸດຢູ່ແຂວງສະຫວັນນະເຂດ. ລັດຖະບານ ສ. ອາເມລິກາ ແລະ ລັດຖະບານລາດຊະອານາຈັກອັງກິດ ຍັງສືບຕໍ່ໃຫ້ການສະໜັບສະໜູນທີມງານກວດກູ້ ເພື່ອດຳເນີນການກວດກູ້ພື້ນທີ່ ລບຕ ທີ່ຕົກຄ້າງສູງໃນທົ່ວແຂວງສະຫວັນນະເຂດ. ນອກຈາກນັ້ນ, ຮາໂລທຼາດ ຍັງໄດ້ຂະຫຍາຍຈຳນວນພະນັກງານ ແລະ ການຝຶກອົບຮົມໃນປີ 2021 ໂດຍທຶນສະໜັບສະໜູນໃໝ່ຂອງລັດຖະບານ ສ. ອາເມລິກາ ຈຳນວນ 7 ລ້ານໂດລາ ສຫຼ ໃນການກວດ ກູ້ ລບຕ ຢູ່ແຂວງສະຫວັນນະເຂດ. ກິດຈະກຳທີ່ໄດ້ປະຕິບັດໃນປີ 2021 ປະກອບມີ:

- **ການສຳຫຼວດແບບບໍ່ແມ່ນວິຊາການ:** ຮາໂລທຼາດ ໄດ້ດຳເນີນການສຳຫຼວດແບບບໍ່ແມ່ນວິຊາການ ຢູ່ເມືອງ ອາດສະພອນ, ອຸທຸມພອນ, ຈຳພອນ, ສອງຄອນ, ທ່າປາງທອງ, ພະລານໄຊ, ໄຊບູລີ. ໄຊພູທອງ, ເຊໂປນ, ວິລະບູລີ ແລະ ຊົນບູລີ.
- **ການສຳຫຼວດແບບວິຊາການ:** ຮາໂລທຼາດ ໄດ້ດຳເນີນການສຳຫຼວດແບບວິຊາການ ຢູ່ເມືອງອາດສະພັງທອງ, ອາດສະພອນ, ນອງ, ພະລານໄຊ, ພີນ, ທ່າປາງທອງ, ໄຊບູລີ, ເຊໂປນ, ວິລະບູລີ ແລະ ຊົນບູລີ.
- **ການກວດກູ້ ລບຕ:** ຮາໂລທຼາດ ໄດ້ດຳເນີນການກວດກູ້ ລບຕ ຢູ່ເມືອງອາດສະພັງທອງ, ນອງ, ພະລານໄຊ, ພີນ, ເຊໂປນ ແລະ ວິລະບູລີ.
- **ການທຳລາຍ ລບຕ ສຸກເສີນ:** ຮາໂລທຼາດ ໄດ້ດຳເນີນການ ທຳລາຍ ລບຕ ເຄື່ອນ ຢູ່ເມືອງອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ພະລານໄຊ, ພີນ, ເຊໂປນ, ທ່າປາງທອງ, ວິລະບູລີ, ສອງຄອນ, ໄຊບູລີ, ອຸທຸມພອນ ແລະ ຊົນບູລີ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:** ຮາໂລທຼາດ ໄດ້ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ ເມືອງອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ພະລານໄຊ, ພີນ, ສອງຄອນ, ທ່າປາງທອງ,ຊົນບູລີ, ເຊໂປນ ແລະ ວິລະບູລີ. .

**ຜົນສຳເລັດຕົ້ນຕໍ ໃນປີ 2021**

ໂດຍການສືບຕໍ່ສະໜັບສະໜູນຈາກລັດຖະບານ ສ. ອາເມລິກາ ແລະ ລັດຖະບານລາດຊະອານາຈັກອັງກິດ ເຮັດໃຫ້ອົງການ ຮາໂລທຼາດ ສາມາດເພີ່ມຂີດຄວາມສາມາດໃນການປະຕິບັດງານຂອງຕົນເອງຂຶ້ນເປັນ 36% ໃນປີ 2021 ເປັນຕົ້ນແມ່ນການເພີ່ມຈຳນວນພະນັກງານຈາກ 750 ເປັນ 1,024 ຄົນ, ຖືວ່າເປັນການກ້າວກະໂດດເຖິງສອງເທົ່າພາຍໃນປີດຽວ. ຜົນສຳເລັດຕົ້ນຕໍໃນປີ 2021 ປະກອບມີ:

- ການກວດກູ້: ສາມາດກວດກູ້ ລບຕ ອອກຈາກພື້ນທີ່ ລບຕ ຕົກຄ້າງສູງໄດ້ 492 ເຮັກຕາ
- ການສຳຫຼວດແບບບໍ່ແມ່ນວິຊາການ: ສາມາດດຳເນີນການສຳຫຼວດແບບບໍ່ແມ່ນວິຊາການ ຢູ່ຫຼາຍກວ່າ 99 ບ້ານ
- ການສຳຫຼວດແບບວິຊາການ: ສາມາດດຳເນີນການສຳຫຼວດແບບວິຊາການ ຢູ່ຫຼາຍກວ່າ 177 ບ້ານ ແລະ ກວດກູ້ ລບຕ 69 ບ້ານ
- ການທຳລາຍ ລບຕ ແບບເຄື່ອນທີ່: ໄດ້ດຳເນີນການທຳລາຍ ລບຕ 760 ເທື່ອ
- ການທຳລາຍ ລບຕ: ໄດ້ດຳເນີນການທຳລາຍ ລບຕ ຫຼາຍກວ່າ 10,347 ໜ່ວຍ ໃນນັ້ນມີລະເບີດລູກຫວ່ານ 7,245 ໜ່ວຍ

**ກໍລະນີສຶກສາ**

ໃນປີ 2021, ຫ້ອງການ ສະຫວັດດີການສັງຄົມ ເມືອງເຊໂປນ ໄດ້ຂໍການຊ່ວຍເຫຼືອຈາກອົງການ ຮາໂລທຼາດ ເພື່ອທີ່ຈະບຸກເບີກພື້ນທີ່ 2 ພື້ນທີ່ໃນບ້ານ ແກ້ງຫີວປາ ແລະ ບ້ານ ເມືອງຈັນ ເພື່ອໃຫ້ບັນດາຄອບຄົວທີ່ຢູ່ແຄມແມ່ນ້ຳເຊໂປນ ທີ່ໄດ້ຮັບຜົນກະທົບຈະໄພນ້ຳຖ້ວມ ໃນເມື່ອບໍ່ດົນມາ

ນີ້ ສາມາດຍົກຍ້າຍໄປຢູ່ບ່ອນສູງໄດ້.

ໃນເດືອນຕຸລາ ປີ 2021 ພາກຕາເວັນອອກຂອງແຂວງສະຫວັນນະເຂດໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມຢ່າງ
ຮ້າຍແຮງ, ຫຼາຍບ້ານເຮືອນ ແລະ ສັດລ້ຽງທີ່ອາໄສຢູ່ລຽບຕາມແມ່ນ້ຳຂອງໄດ້ຮັບຜົນກະທົບ. ເພື່ອແກ້ໄຂບັນຫານ້ຳຖ້ວມທີ່ຈະເກີດຂຶ້ນອີກໃນອານະຄົດ, ອຳນາດການປົກຄອງເມືອງເຊໂປນ ໄດ້ຕົກລົງຍ້າຍບ້ານທີ່ຖືກຜົນກະທົບຈຳນວນໜຶ່ງ, ໃນນັ້ນມີ 16 ຄອບຄົວ ຈາກບ້ານແກ້ງຫີນປາ ແລະ 30 ຄອບຄົວຈາກບ້ານ ເມືອງຈັນ. ແນວໃດກໍ່ຕາມ, ກ່ອນທີ່ເຂົາເຈົ້າຈະຖືກຍົກຍ້າຍ, ພື້ນທີ່ດິນທີ່ຈະຍົກຍ້າຍໄປຈຳຕ້ອງໄດ້ເກັບກູ້ ລບຕ.

ອົງການ ຮາໂລທຣາດ ໄດ້ສຳເລັດການເກັບກູ້ ລບຕ ໃນ 2 ເຂດພື້ນທີ່ບ້ານ, ສາມາດເກັບກູ້ໄດ້ 3,5 ເຮັກຕ້າ ແລະ ທຳລາຍ ລບຕ 97 ໜ່ວຍ

**ແຜນການສຳລັບປີ 2022**

ໃນປີ 2022, ຮາໂລທຣາດ ຈະສືບຕໍ່ດຳເນີນການສຳຫຼວດ, ກວດກູ້, ທຳລາຍ ລບຕ ເຄື່ອນທີ່ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງສະຫວັນນະເຂດ.

ເງິນສະໜັບສະໜູນຈາກລັດຖະບານແຫ່ງ ສ. ອາເມລິກາ ທີ່ໄດ້ເພີ່ມຈຳນວນ 8,5 ລ້ານ ໂດລາ ສຫຼ ຈະເຮັດໃຫ້ໂຄງການ ເກັບກູ້ ລບຕ ໃນປີ 2022 ສືບຕໍ່ໄປຮອດປີ 2023. ການເຊັນສັນຍາບົດບັນທຶກຄວາມເຂົ້າໃຈສະບັບໃໝ່ນີ້ ຈະສາມາດເຮັດໃຫ້ ອົງການຮາໂລທຣາດຜັນປ່ຽນທີມງານສຳຫຼວດ ລບຕ ມາເປັນທີມງານກວດກູ້ ແລະ ທຳລາຍ ລບຕ ກໍຄືການເກັບກູ້ລະເບີດລູກຫວ່ານທີ່ໄດ້ສະຫຼຸບໄວ້ ໃນເດືອນສິງຫາ 2022.

ໃນເດືອນ ມີນາ 2022, ອົງການ ຮາໂລທຣາດ ຈະສະຫຼຸບໂຄງການເກັບກູ້ຂອງລັດຖະບານແຫ່ງ ລາດຊະອານາຈັກອັງກິດ. ອົງການ ຮາໂລທຣາດ ຈະຮ່ວມມືກັບອຳນາດການປົກຄອງແຂວງສະຫວັນນະເຂດ ແລະ ຄຊກລ ເພື່ອລົງນາມ ບົດບັນທຶກຄວາມເຂົ້າໃຈ ສະບັບໃໝ່ ເພື່ອເຮັດໃຫ້ວຽກງານການເກັບກູ້ພາຍໃນແຂວງ ສາມາດດຳເນີນໄປໄດ້ອີກ 1 ປີ.

ອົງການ ຮາໂລທຣາດ ຈະສືບຕໍ່ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອຮັບສະໝັກພະນັກງານ ໂດຍໃຫ້ບູລິມາສິດ ຜູ້ທີ່ມາຈາກເຂດທຸກຍາກ ແລະ ພື້ນທີ່ ລບຕ ຕົກຄ້າງ. ໃນປີ 2021, ພະນັກງານຂອງອົງການ ຮາໂລທຣາດ 51% ແມ່ນຜູ້ຍິງ, ໃນການຮັບສະໝັກພະນັກງານໃນປີ 2022 ອົງການ ຮາໂລທຣາດ ຈະສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ບົດບາດຍິງ-ຊາຍ, ໃນນັ້ນລວມໄປເຖິງ ຄົນພິການ ໃຫ້ໄດ້ເຮັດວຽກໃນພາກສ່ວນປະຕິບັດງານ ແລະ ສະໜັບສະໜູນ.

**ຄູ່ຮ່ວມງານ**

- ຄຊກລ
- ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ
- ລັດຖະບານແຫ່ງ ສ. ອາເມລິກາ
- ລັດຖະບາລາດຊະອານາຈັກອັງກິດ

**ບຸກຄະລະກອນໃນປີ 2021**

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 42 | 32 | 1 | 1 | 459 | 491 | 5 | 0 |
| ລວມ | 1,031 | | | | | | |

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດບໍ່ແມ່ນແບບວິຊາການ | ອາດສະພອນ, ຈຳພອນ, ອຸທຸມພອນ, ພະລານໄຊ, ສອງຄອນ, ທ່າປາງທອງ, ວິລະບູລີ, ໄຊບູລີ, ໄຊພູທອງ, ເຊໂປນ, ຊົນບູລີ. ແຂວງ ສະຫວັນນະເຂດ |
| ການສຳຫຼວດແບບວິຊາການ | ອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ພະລານໄຊ, ພິນ, ທ່າປາງທອງ, ວິລະບູລີ, ໄຊບູລີ, ເຊໂປນ, ຊົນບູລີ. ແຂວງ ສະຫວັນນະເຂດ. |
| ການກວດກູ້ ລບຕ | ອາດສະພັງທອງ, ນອງ, ພະລານໄຊ, ພິນ, ວິລະບູລີ, ເຊໂປນ. ແຂວງ ສະຫວັນນະເຂດ |
| ການທຳລາຍ ລບຕ ເຄື່ອນທີ່ | ອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ອຸທຸມພອນ, ພະລານໄຊ,ພິນ, ສອງຄອນ, ທ່າປາງທອງ, ວິລະບູລີ, ໄຊບູລີ, ເຊໂປນ, ຊົນບູລີ. ແຂວງ ສະຫວັນນະເຂດ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ພະລານໄຊ, ພິນ, ສອງຄອນ, ທ່າປາງທອງ, ວິລະບູລີ, ເຊໂປນ, ຊົນບູລີ. ແຂວງ ສະຫວັນນະເຂດ |
| ການປະເມີນຫຼັງການກວດກູ້ | ນອງ, ພະລານໄຊ, ພິນ, ວິລະບູລີ, ເຊໂປນ. ແຂວງ ສະຫວັນນະເຂດ |

**ການເງິນໃນປີ 2021 (ໂດລາ ສຫຼ)**

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການສຳຫຼວດ ລບຕ ແຂວງ ສະຫວັນນະເຂດ | 21/6/19 | 1/1/18 ຫາ 30/6/22 | 17,335,000 ໂດລາ ສຫຼ | 3,665,743 ໂດລາ ສຫຼ | ລັດຖະບານ ສ. ອາເມລິກາ |
| ໂຄງການກວດກູ້ ລບຕ ແຂວງ ສະຫວັນນະເຂດ | 30/4/21 | 1/4/20 ຫາ 31/3/21 | 1,824,550 ໂດລາ ສຫຼ | 618,419 ໂດລາ ສຫຼ | ລັດຖະບານ ລາດຊະ ອານາຈັກ |

| | | | | | |
|---|---|---|---|---|---|
| | | | | | ອັງກິດ |
| ໂຄງການສຳຫຼວດ ແລະ ກວດກູ້ ລບຕ ແຂວງ ສະຫວັນນະເຂດ | 30/4/21 | 1/5/20 ຫາ 31/12/21 | 7,000,000 ໂດລາ ສຫຼ | 5,247,113 ໂດລາ ສຫຼ | ລັດຖະບານ ສ. ອາເມລິກາ |
| ໂຄງການກວດກູ້ ລບຕ ແຂວງ ສະຫວັນນະເຂດ | 19/5/22 | 1/4/21 ຫາ 31/3/22 | 546,000 ໂດລາ ສຫຼ | 352,878 ໂດລາ ສຫຼ | ລັດຖະບານ ລາດຊະອານາຈັກ ອັງກິດ |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021 (ໂດລາ ສຫຼ): 9,078,961 ໂດລາ ສຫຼ | |
|---|---|
| ຄ່າໃຊ້ຈ່າຍທັງໝົດໃນປີ 2021 (ໂດລາ ສຫຼ) | |
| ລາຍລະອຽດ | ຈຳນວນ |
| ເງິນເດືອນພະນັກງານ | 5,474,993 |
| ລາຍຈ່າຍຄ່າປະຕິບັດງານ | 1,033,131 |
| -ຄ່າໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 15,497 |
| -ຄ່າສຳຫຼວດ ແລະ ກວດກູ້ ລບຕ | 1,017,634 |
| ຄ່າຈັດຊື້ວັດຖຸອຸປະກອນ | 2,570,837 |
| **ລວມ** | **9,078,961** |
| ທຶນທາງອ້ອມທີ່ໄດ້ຮັບໃນປີ 2021 (ໂດລາ ສຫຼ): 805,193 ໂດລາ ສຫຼ | |
| ຄ່າໃຊ້ຈ່າຍທັງໝົດໃນປີ 2021 (ໂດລາ ສຫຼ) | |
| ລາຍລະອຽດ | ຈຳນວນ |
| ເງິນເດືອນພະນັກງານ | 485,565 |
| ລາຍຈ່າຍຄ່າປະຕິບັດງານ | 9,926 |
| -ຄ່າໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 1,374 |
| -ຄ່າສຳຫຼວດ ແລະ ກວດກູ້ ລບຕ | 90,252 |
| ຄ່າຈັດຊື້ວັດຖຸອຸປະກອນ | 228,002 |
| **ລວມ** | **805,193** |

**ປະເທດຜູ້ໃຫ້ທຶນໃນປີ 2021 (ໂດລາ ສຫຼ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ລັດຖະບານ ສ. ອາເມລິກາ | 7,329,457 |
| ລັດຖະບານລາດຊະອານາຈັກອັງກິດ | 1,167,828 |
| **ລວມ** | **8,497,285** |

ອົງການມະນຸດສະທຳ ແລະ ການມີສ່ວນຮ່ວມ

(HI)

## ກິດຈະກຳໃນປີ 2021

ໃນປີ 2021, ອົງການ ເຫັດໄອ ໄດ້ສືບຕໍ່ວຽກງານດ້ານລະເບີດຝັງດິນ ເພື່ອມະນຸດສະທຳດ້ວຍໂຄງການປະຕິສັງຂອນລະເບີດຝັງດິນ ແບບປະສົມປະສານ (RIMA) ຢູ່ແຂວງຫົວພັນ ໂດຍມີ ເປົ້າໝາຍຢູ່ 2 ເມືອງຄື: ເມືອງ ຫົວເມືອງ ແລະ ເມືອງຊຽງ. ໂດຍໄດ້ຮັບທຶນສະໜັບສະໜູນຈາກກະຊວງການຕ່າງປະເທດ ໂຮນລັງ. ໂຄງການນີ້ ກຳລັງດຳເນີນການເກັບກູ້ ແລະ ສຳຫຼວດພື້ນທີ່ ລບຕ ໂດຍໃຫ້ບູລິມະສິດ 39 ບ້ານເປົ້າໝາຍ. ໂຄງການ RIMA ຍັງໄດ້ລົມທົບກິດຈະກຳເກັບກູ້ລະເບີດ, ການສຶກສາຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ ໃນ 18 ບ້ານໃໝ່. ບົດບັນທຶກຄວາມເຂົ້າໃຈແມ່ນໄດ້ອະນຸມັດມາຕັ້ງແຕ່ວັນທີ 19 ກໍລະກົດ ແລະ ໄດ້ຖືກຈັດຕັ້ງປະຕິບັດມາເຖິງທ້າຍເດືອນທັນວາ ປີ 2021. ໃນປີ 2022, ບົດບັນທຶກຄວາມເຂົ້າໃຈສະບັບໃໝ່ທີ່ຈະໄດ້ລົງນາມກັບແຂວງຜົ້ງສາລີຈະເຮັດໃຫ້ສາມາດຂະຫຍາຍໂຄງການນີ້ໄປສູ່ພື້ນທີ່ໃໝ່. ພາຍໃນ 4 ເດືອນໃນປີ 2021, ໂຄງການໄດ້ບັນລຸບາງລາຍການ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ການສຳຫຼວດແບບບໍ່ແມ່ນວິຊາການ: ແມ່ນໄດ້ດຳເນີນກິດຈະກຳ ແລະ ເກັບຂໍ້ມູນໄປພ້ອມໆກັບການທຳລາຍ ລບຕ, ການໂຄສະນາສຶກສາຄວາມສ່ຽງ ແລະ ການຊວ່ຍເຫຼືອຜູ້ຖືກເຄາະຮ້າຍ ໃນ 15 ບ້ານ ໂດຍສອດຄ່ອງກັບ IMAS 13.10.
- ການສຳຫຼວດແບບວິຊາການ: ແມ່ນຖືເອົາພື້ນທີ່ ລບຕ ຕົກຄ້າງເປັນບູລິມະສິດ.
- ການກວດກູ້ ລບຕ: ການກວດກູ້ ລບຕ ແມ່ນຖືເອົາພື້ນທີ່ ລບຕ ຕົກຄ້າງທີ່ໄດ້ກຳນົດໄວ້ ເປັນບູລິມະສິດ ແລະ ມີສ່ວນຮ່ວມ ໃນການສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນໃນພື້ນທີ່ຊົນນະບົດ ແລະ ການພັດທະນາທ້ອງຖິ່ນ.
- ການທຳລາຍ ລບຕ ແບບເຄື່ອນທີ່: ແມ່ນໄດ້ສຸມໃສ່ 2 ເມືອງເປັນຫຼັກ, ລບຕ ທີ່ໄດ້ຖືກລາຍງານ 100% ໂດຍການທຳລາຍ ລບຕ ແບບເຄື່ອນທີ່.
- ການເສີມສ້າງຄວາມສາມາດ: ພະນັກງານຈາກຫ້ອງການ ຄຊກລ ແຂວງ ແລະ ຫ້ອງການສະຫວັດດີການສັງຄົມເມືອງ ຈຳນວນ 6 ທ່ານ, ໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອດ້ານການເງິນ, ອຸປະກອນ ແລະ ແຜນພັດທະນາຂີດຄວາມສາມາດ ເພື່ອນຳມາປະຕິບັດໜ້າທີ່ວຽກງານກວດກາ ແລະ ຕິດຕາມຄຸນນະພາບ.
- ການໂຄສະນາສຶກສາຄວາມສ່ຽງ: ໄດ້ມີການເຜີຍແຜ່ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍຜ່ານການສະເໜີບົດສະຫຼຸບຫຍໍ້ກ່ຽວກັບຄວາມປອດໄພ, ຜ່ານລະບົບອອນລາຍ, ມີການຝຶກອົບຮົມກ່ຽວກັບ ລບຕ ສຳລັບຄູຊັ້ນປະຖົມ ແລະ ສ້າງຍຸດທະສາດຮັກສາຄວາມປອດໄພຂອງຊຸມຊົນ.
- ການຊ່ວຍເຫຼືອຜູ້ເຄາະຮ້າຍ: ໄດ້ມີການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ກ່ຽວກັບ ສິດທິຂອງຄົນພິການ, ບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ. ດຳເນີນການກວດກາຜູ້ລອດຊີວິດຈາກ ລບຕ/ຄົນພິການ ເພື່ອໃຫ້ບູລິມະສິດໃນການສະໜັບສະໜູນໂດຍກົງຕໍ່ພວກເຂົາເຫຼົ່ານັ້ນ ແລະ ສົ່ງຕໍ່ການບໍລິການດ້ານການແພດ ແລະ ການຟື້ນຟູ.

**ຜົນສຳເລັດໃນປີ 2021**

- ການສຳຫຼວດແບບບໍ່ແມ່ນວິຊາການ: ອົງການ ເຫັດໄອ ໄດ້ສຳຫຼວດແບບບໍ່ແມ່ນວິຊາການ ໄດ້ 15 ບ້ານຕາມເປົ້າໝາຍ, ການລາຍງາຍ ກ່ຽວກັບ ລບຕ ແມ່ນໄດ້ລາຍງານຜ່ານທາງ ສາຍດ່ວນຂອງອົງກອນເຫັດໄອ 020 56611110.
- ການສຳຫຼວດແບບວິຊາການ: ໄດ້ກຳນົດພື້ນທີ່ ອັນຕະລາຍທີ່ມີຜົນກະທົບທາງດ້ານ ເສດຖະກິດ-ສັງຄົມ, ອົງການ ເຫັດໄອ ໄດ້ ບັນລຸການສຳຫຼວດແບບວິຊາການ ຈຳນວນ 1,150,000 ຕາແມັດ ໃນ 7 ບ້ານທີ່ໄດ້ຮັບ ຜົນກະທົບ, ໃນນັ້ນ ມີພື້ນທີ່ 570,000 ຕາ ແມັດ ຖືກກຳນົດເປັນພື້ນທີ່ ລບຕ ຕົກຄ້າງ.
- ການກວດກູ້ ລບຕ: ໄດ້ມີການກວດກູ້ພື້ນທີ່ ດິນຊຸມຊົນ ແລະ ດິນພັດທະນາ ຈຳນວນ 254,083 ຕາແມັດ.
- ການທຳລາຍ ລບຕ: ໄດ້ ທຳລາຍ ລບຕ ຈຳນວນ 1,021 ໜ່ວຍ ໃນນັ້ນ ແມ່ນ ລະເບີດລູກຫວ່ານ ຈຳນວນ 977 ໜ່ວຍ ພາຍໃນ 30 ໝູ່ບ້ານ.
- ການເສີມສ້າງຄວາມສາມາດ: ພະນັກງານ ຈາກຫ້ອງການ ຄຊກລ ແຂວງ ແລະ ຫ້ອງການສະຫວັດດີການສັງຄົມເມືອງ ຈຳນວນ 9 ທ່ານ ໄດ້ຮັບການເພີ່ມທັກສະ ແລະ ຄວາມຮູ້ກ່ຽວກັບ ການສຳຫຼວດ, ກວດ ກູ້ ລບຕ, ການປະສານງານ ແລະ ການຄຸ້ມ ຄອງຂໍ້ມູນພາຍໃນ. ອົງການເຫັດໄອ ຍັງໄດ້ ສະໜອງຄ່າໃຊ້ຈ່າຍບໍລິຫານພາຍໃນ ຫ້ອງການ, ຄ່າວັດຖຸອຸປະກອນໃຫ້ແກ່ ຫ້ອງການ ຄຊກລ ແຂວງ ແລະ ຫ້ອງການ ສະຫວັດດີການສັງຄົມເມືອງ ປະຈຳເມືອງ ຫົວ ເມືອງ ແລະ ຊຽມມູນຄ່າ 5,480 ໂດລາ ສຫຼ.
- ການໂຄສະນາສຶກສາຄວາມສ່ຽງ: ອົງການ ເຫັດໄອ ໄດ້ສຳເລັດການໂຄສະນາສຶກສາ ຄວາມສ່ຽງຈາກ ລບຕ ໄດ້ຈຳນວນ 15 ບ້ານ ໃນ ເມືອງ ຫົວເມືອງ ແລະ ເມືອງ ຊຽມ ຕາມ ເປົ້າໝາຍ. ມີຜູ້ໄດ້ຮັບຜົນປະໂຫຍດ 3,901 ຄົນ (ຍິງ 1,259 ຄົນ, ຊາຍ 1,185 ຄົນ, ເດັກຍິງ 728 ຄົນ ແລະ ເດັກຊາຍ 729 ຄົນ) ພະນັກງານຄູຊັ້ນປະຖົມໄດ້ ເຂົ້າຝຶກອົບຮົມ ກ່ຽວກັບຄວາມຮູ້ ລບຕ.
- ການຊ່ວຍເຫຼືອຜູ້ເຄາະຮ້າຍ: ທີມຊ່ວຍເຫຼືອຜູ້ ຖືກເຄາະຮ້າຍ ໄດ້ດຳເນີນການປະຕິບັດງານຕໍ່ ກັບຜູ້ພິການ ແລະ ຜູ້ລອດຊີວິດຈາກ ລບຕ ຈຳນວນ 323 ຄົນ. ພະນັກງານໃນສູນການ ແພດ ແລະ ຟື້ນຟູ ປະຈຳແຂວງ ຈຳນວນ 16 ຄົນໄດ້ຮັບການຝຶກອົບຮົມການໃຫ້ຄວາມ ຊ່ວຍເຫຼືອດ້ານສຸຂະພາບຈິດ.

## ກໍລະນີສຶກສາ

ອົງການເຫັດໄອ ໄດ້ເລີ່ມຈາກການຮັບຮູ້ ແລະ ເຂົ້າໃຈ ເຖິງບັນດາບົດບາດ ແລະ ໂຄງການຕ່າງໆພາຍໃນ ແຂວງເຊີນ: ໂຄງການທ່ອງທ່ຽວແບບອານຸລັກຈາກ ສະມາຄົມອະນຸລັກສັດປ່າ (WCS). ໃນປີ 2021, ໃນຊ່ວງ ໄລຍະໃໝ່ຂອງໂຄງການ ປະຕິສັງຂອນລະເບີດຝັງດິນແບບ ປະສົມປະສານ (RIMA), ອົງການເຫັດໄອ ໄດ້ພິຈາລະນາ ມູນຄ່າຜົນກະທົບໃນຂອບເຂດຂອງໂຄງການນີ້ ແລະ ໄດ້ ຊຸກຍູ້ການມີສ່ວນຮ່ວມຂອງຂັ້ນບ້ານ ພາຍໃຕ້ຂອບເຂດ ຂອງບົດບັນທຶກຄວາມເຂົ້າໃຈ ແລະ ໄດ້ໃຫ້ບູລິມະສິດໂດຍ ກົງເຂົ້າໃນຜົນປະໂຫຍດຂອງໂຄງການ RIMA ນີ້: "ສໍາລັບ ເຂດພື້ນທີ່ອາໄສຊຸມຊົນທີ່ຢູ່ໃນເຂດ ລບຕ, ຕ້ອງຊຸກຍູ້ວິທີ ຊີວິດການເປັນຢູ່ ແລະ ສະພາບເສດຖະກິດສັງ-ຄົມ ໂດຍ ການມີສ່ວນຮ່ວມນໍາທຸກຝ່າຍ". ອໍານາດການປົກຂອງ ທ້ອງຖິ່ນ ແລະ ຄຊກລ ແຂວງ ລ້ວນແລ້ວແຕ່ສະໜັບສະ ໜູນຄໍາເວົ້ານີ້.

ອົງການ ເຫັດໄອ ໄດ້ເຜີຍແຜ່ຄວາມຮັບຮູ້ກ່ຽວກັບ ລບຕ ໃຫ້ແກ່ພະນັກງານ ຊັ້ນນາຍຮ້ອຍ ຈໍານວນ 30 ຄົນ ແລະ ໃຫ້ການສະໜັບສະໜູນ ເກັບກູ້ພື້ນທີ່ ລບຕ 13,649 ເຮັກຕາ ໃຫ້ແກ່ເຈົ້າໜ້າທີ່ອຸດທະຍານແຫ່ງຊາດນໍ້າແອັດພູ ເລີຍ (ເສັ້ນທາງຍ່າງທ່ອງທ່ຽວໃໝ່ໃນເຂດນອນເຕັ້ນ) ໂດຍອີງຕາມຂໍ້ຕົກລົງຂອງ ອໍານາດການປົກຄອງທ້ອງຖິ່ນ ແລະ ຄຊກລ ປະຈໍາແຂວງ.



*EOD level 4 expert providing a tailor-made safety briefing to the rangers of the NEPL National park*

ທ່ານບຸນເພັງ ຜູ້ອໍານວຍການ ປ່າສະຫງວນ ອຸດທະຍານແຫ່ງຊາດນໍ້າແອັດພູເລີຍໄດ້ກ່າວວ່າ: "ນີ້ເປັນ ກິດຈະກໍາທີ່ດີຫຼາຍ, ປັດຈຸບັນ ໂຄງການແມ່ນກໍາລັງຈະສ້າງ ສະຖານທີ່ພັກຜ່ອນເພື່ອຮອງຮັບນັກທ່ອງທ່ຽວໄດ້ຫຼາຍຂຶ້ນ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນທັງ 15 ບ້ານໃນເຂດນີ້".

ການຮ່ວມມືໃນຄັ້ງນີ້ສ້າງຜົນປະໂຫຍດໃຫ້ແກ່ ປະຊາຊົນໃນເຂດ 15 ບ້ານ (ເປັນຜູ້ໃຫ້ບໍລິການດ້ານ ການທ່ອງທ່ຽວແບບຮັກສາລະບົບນິເວດ) ຂອງ 2 ແຂວງທີ່ ແຕກຕ່າງກັນ. ມີຜູ້ໄດ້ຮັບຜົນປະໂຫຍດຈາກການເກັບກູ້ ລບຕ ຈໍານວນ 129 ຄົນ ແລະ ມີນັກທ່ອງທ່ຽວປະມານ 500- 600 ຄົນ ໄດ້ຮັບປະສົບການການປີນຜາ ແລະ ນອນ ເຕັ້ນໃນແຕ່ລະປີ.

### ວຽກງານຈຸດສຸມໃນປີ 2021

- **ການສໍາຫຼວດແບບບໍ່ແມ່ນວິຊາການ:** ສືບຕໍ່ລົງຢ້ຽມ ຢາມ 3 ບ້ານ ເພື່ອນໍາໄປປະຕິບັດກັບ 21 ບ້ານ ໃ ໝ່ ໃນແຂວງ ຜົ້ງສາລີ
- **ການສໍາຫຼວດແບບວິຊາການ:** ອົງການເຫັດໄອ ໄປ ວາງແຜນຮ່ວມກັບ ອໍານາດການປົກຄອງທ້ອງຖິ່ນ ແລະ ຄຊກລ ແຂວງ ເພື່ອຂະຫຍາຍການສໍາຫຼວດ ແບບວິຊາການ ຢ່າງຕໍ່າ 650,000 ຕາແມັດໃນເຂດ ພື້ນທີ່ ລບຕ ໃໝ່.
- **ການກວດ ລບຕ:** ອົງການເຫັດໄອ ໄດ້ວາງແຜນຮ່ວມ ກັບ ອໍານາດການປົກຄອງທ້ອງຖິ່ນ ເພື່ອທໍາລາຍ ລບຕ ເປັນບູລິມະສິດ, ເພື່ອພັດທະນາຊີວິດການເປັນ ຢູ່ ແລະ ຂະຫຍາຍພື້ນທີ່ກວດກູ້ ລບຕ 817,250 ຕາ ແມັດ ໃນແຂວງຫົວພັນ ແລະ ວາງແຜນກວດກູ້ ລບຕ ຕື່ມໃນແຂວງ ຜົ້ງສາລີ.
- **ການທໍາລາຍ ລບຕ ເຄື່ອນທີ່:** ທີມການທໍາລາຍ ລບຕ ເຄື່ອນທີ່ຈະໄດ້ປະຕິບັດງານທຸກຄັ້ງທີ່ມີການລາຍງານ ຂອງ ລບຕ.
- **ການໂຄສະນາສຶກສາຄວາມສ່ຽງ:** ກອງປະຊຸມເຜີຍແຜ່ ການໂຄສະນາສຶກສາຄວາມສ່ຽງຂອງ ລບຕ ຈະໄດ້ ດໍາເນີນຢູ່ 3 ບ້ານເປົ້າໝາຍທີ່ຍັງເຫຼືອຢູ່ແຂວງຫົວພັນ ໂດຍຜ່ານກອງປະຊຸມ, ການໂຄສະນາຜ່ານການ ສາຍຮູບເງົາ ແລະ ການລົງຢ້ຽມຢາມຄອບຄົວ. ໃນ ນັ້ນລວມມີການໃຫ້ຄວາມຮູ້ກ່ຽວກັບ ລບຕ ແກ່ ນາຍຄູ ຈໍານວນ 11 ຄົນ. ອົງການເຫັດໄອ ຍັງໄດ້

ຈັດການຝຶກອົບຮົມໃຫ້ແກ່ GALS ໃນ 15 ໝູ່ບ້ານ ແລະ ເພື່ອບົດບັນທຶກຄວາມເຂົ້າໃຈສະບັບໃໝ່ສຳເລັດ ກໍຈະໄດ້ເພີ່ມເຂດບ້ານໃໝ່ໃນ ແຂວງຜົ້ງສາລີ ຕື່ມອີກ.

- **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ:** ສືບຕໍ່ລົງຢ້ຽມຢາມຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການ ເປັນຮອບທີ 2, ອົງການເຫັດໄອຈະຈັດສັນ DIT ໃຫ້ແກ່ພະນັກງານ CSFPs ຈຳນວນ 40 ຄົນ ແລະ ລວມໄປເຖິງການຝຶກອົບຮົມຂັ້ນພື້ນຖານ. ອົງການເຫັດໄອຈະສະໜັບສະໜູນສິ່ງຜູ້ລອດຊີວິດຈາກ ລບຕ ໃຫ້ໄດ້ຮັບການປິ່ນປົວ ແລະ ຟື້ນຟູ ພ້ອມຈະໃຫ້ການຊ່ວຍເຫຼືອດ້ານຊີວິດການເປັນຢູ່ຂອງຜູ້ເຄາະຮ້າຍ/ພິການ ທີ່ໄດ້ຄັດເລືອກ.
- **ການເສີມສ້າງຄວາມສາມາດ:** ອົງການ ເຫັດໄອ ຈະໄດ້ຈັດການຝຶກອົບຮົມ ແລະ ໃຫ້ທຶນສະໜັບສະໜູນແກ່ ອຳນາດການປົກຄອງທ້ອງຖິ່ນ ແລະ ຄຊກລ ແຂວງ ໂດຍອີງຕາມຜົນລາຍງານດ້ານທັກສະຂອງພວກເຂົາ. ນອກຈາກນີ້, ຍັງຈະໄດ້ໃຫ້ການສະໜັບສະໜູນຈັດຊື້ວັດຖຸອຸປະກອນຕ່າງໆຕາມການຮຽກຮ້ອງ.
- **ໂອກາດອື່ນໆ:** ອົງການເຫັດໄອຈະພະຍາຍາມເຊື່ອມຕໍ່ໂຄງການນີ້ ເຂົ້າກັບອົງການຈັດຕັ້ງຕ່າງໆໃຫ້ດີຂຶ້ນ ເພື່ອກຳນົດທ່າແຮງການຮ່ວມມື ແລະ ຄູ່ຮ່ວມງານໃຫ້ຫຼາຍກວ່າເກົ່າ.
- **ສິ່ງທ້າທາຍ:** ອົງການເຫັດໄອໄດ້ພົບສິ່ງທ້າທາຍກໍຄືງົບປະມານສະໜັບສະໜູນຂອງໂຄງການ ເກັບກູ້ ລບຕ ແລະ ພ້ອມດຽວກັນນັ້ນ ທາງອຳນາດການປົກຄອງທ້ອງຖິ່ນ ແມ່ນໄດ້ຮຽກຮ້ອງການສະໜັບສະໜູນຫຼາຍເກີນແຮງງານຂອງທີມງານ ເຫັດໄອ.

**ຄູ່ຮ່ວມງານ**

- ຫ້ອງການ ຄຊກລ ແຂວງ
- ຫ້ອງການສະຫວັດດີການ-ສັງຄົມ ເມືອງ ຫົວເມືອງ ແລະ ຫ້ຽມ
- ຫ້ອງການ ສຶກສາທິການ ແລະ ກິລາ ເມືອງ
- ສະຫະພັນແມ່ຍິງແຫ່ງຊາດລາວ
- DAFO
- ປ່າສະຫງວນອູດທະຍານແຫ່ງຊາດ ນ້ຳແອັດພູເລີຍ
- ກອງທຶນຫຼຸດຜ່ອນຄວາມທຸກຍາກ

.

**ພື້ນທີ່ການປະຕິບັດງານ ໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດບໍ່ແມ່ນແບບວິຊາການ | ເມືອງ ຫົວເມືອງ ແລະ ຫ້ຽມ ແຂວງ ຫົວພັນ |
| ການສຳຫຼວດແບບວິຊາການ | ເມືອງ ຫົວເມືອງ ແຂວງ ຫົວພັນ |
| ການກວດກູ້ ລບຕ | ເມືອງ ຫົວເມືອງ ແຂວງ ຫົວພັນ |
| ການທຳລາຍ ລບຕ ເຄື່ອນທີ່ | ເມືອງ ຫົວເມືອງ ແລະ ຫ້ຽມ ແຂວງ ຫົວພັນ |
| ການຊ່ວຍເຫຼືອຜູ້ເຄາະຮ້າຍ | ເມືອງ ຫົວເມືອງ ແລະ ຫ້ຽມ ແຂວງ ຫົວພັນ |
| ການໂຄສະນາສຶກສາຄວາມສ່ຽງ | ເມືອງ ຫົວເມືອງ ແລະ ຫ້ຽມ ແຂວງ ຫົວພັນ |
| ການປະເມີນຫຼັງການກວດກູ້ | ເມືອງ ຫົວເມືອງ ແຂວງ ຫົວພັນ |
| ການກວດກາຄຸນນະພາບ | ເມືອງ ຫົວເມືອງ ແຂວງ ຫົວພັນ |

**ການເງິນໃນປີ 2021 (ໂດລາ ສຫຼ)**

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| RIMA ແຂວງ ຫົວພັນ | 29/7/21 | 31/8/23 | 1,889,395 ໂດລາ ສຫຼ | ປີ1: 654,852<br>ປີ2: 847,126<br>ປີ3: 384,709<br>ໂດລາ ສຫຼ | ກະຊວງການ ຕ່າງປະເທດ ໂຮນລັງ |
| RIMA ແຂວງ ຜົ້ງສາລີ | ຍັງບໍ່ໄດເຊັນ | 2022-2024 | 586,540 ໂດລາ ສຫຼ | | ກະຊວງການ ຕ່າງປະເທດ ໂຮນລັງ |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021 (ໂດລາ ສຫຼ): 654,582 ໂດລາ ສຫຼ | |
|---|---|
| ລາຍລະອຽດລາຍຈ່າຍ | |
| ລາຍການ | ຈຳນວນ |
| ເງິນເດືອນພະນັກງານ | 130,000 |
| ຄ່າປະຕິບັດງານ | 65,800 |
| -ຄ່າໂຄສະນາສຶກສາຄວາມສ່ຽງ | 358,420 |
| -ຄ່າຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | 60,500 |
| -ຄ່າ ສຳຫຼວດ ແລະ ກວດກູ້ ລບຕ | |
| ຄ່າຈັດຊື້ວັດຖຸອຸປະກອນ | 39,500 |
| **ລວມ** | **654,582** |

## ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ (ກອງ 58)

**ກິດຈະກຳໃນປີ 2021**

ໃນປີ 2021, ກອງ 58 ຈຳນວນ 7 ທີມ ໄດ້ດຳເນີນການປະຕິບັດງານດ້ານ ໂຄສະນາສຶກສາຄວາມສ່ຽງ, ການສຳຫຼວດແບບບໍ່ແມ່ນວິຊາການ, ການສຳຫຼວດແບບວິຊາການ, ການເກັບກູ້ ແລະ ທຳລາຍ ລບຕ. ກິດຈະກຳດັ່ງກ່າວໄດ້ຮັບການສະໜັບສະໜູນໂດຍອົງການ KOICA ຜ່ານທາງ UNDP ແລະ ຢູ່ພາຍໃຕ້ການຄຸ້ມຄອງ ຂອງ ຄຊກລ.

| ແຂວງ | ການໂຄສະນາສຶກສາຄວາມສ່ຽງ ລບຕ (ບ້ານ) | ການສຳຫຼວດແບບບໍ່ແມ່ນວິຊາການ (ບ້ານ) | ການສຳຫຼວດແບບວິຊາການ (ເຮັກຕາ) | ການກວດກູ້ ລບຕ (ເຮັກຕາ) |
|---|---|---|---|---|
| ບໍລິຄຳໄຊ | 19 | 19 | 234 | 4,86 |
| ວຽງຈັນ | 7 | 12 | 65 | 1,28 |
| ຄຳມ່ວນ | - | - | - | 0,37 |
| ຊຽງຂວາງ | - | - | - | 3,33 |

**ວຽກງານບູລິມະສິດໃນປີ 2022**

ຂະຫຍາຍພື້ນທີ່ດຳເນີນງານ ແລະ ຈັດຕັ້ງທີມງານໄປຍັງແຂວງ ບໍລິຄຳໄຊ ແລະ ວຽງຈັນ.

**ຄູ່ຮ່ວມງານ**

- ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ກະຊວງປ້ອງກັນປະເທດ
- ອົງການກອຍກາ ປະຈຳ ສປປ ລາວ
- ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ
- ອຳນາດການປົກຄອງທ້ອງຖິ່ນ
- ກອງທັບລັດເຊຍ

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການໂຄສະນາສຶກສາຄວາມສ່ຽງ | ເມືອງ ຄຳເກີດ, ວຽງທອງ, ແຂວງ ບໍລິຄຳໄຊ<br>ເມືອງ ກາສີ, ຫີນເຫີບ, ແຂວງ ວຽງຈັນ |
| ການສຳຫຼວດແບບບໍ່ແມ່ນວິຊາການ | ເມືອງ ປາກຊັນ, ປາກກະດິງ, ຄຳເກີດ, ວຽງທອງ, ແຂວງ ບໍລິຄຳໄຊ<br>ເມືອງ ວັງວຽງ, ກາສີ, ຫີນເຫີບ, ແຂວງ ວຽງຈັນ |
| ການສຳຫຼວດແບບວິຊາການ | ເມືອງ ຄຳເກີດ, ແຂວງ ບໍລິຄຳໄຊ<br>ເມືອງ ກາສີ, ແຂວງ ວຽງຈັນ |
| ການກວດກູ້ ລບຕ | ເມືອງ ຄຳເກີດ, ແຂວງ ບໍລິຄຳໄຊ<br>ເມືອງ ກາສີ, ແຂວງ ວຽງຈັນ<br>ເມືອງ ແປກ, ແຂວງ ຊຽງຂວາງ<br>ເມືອງ ນາຄາລີ, ແຂວງ ຄຳມ່ວນ |
| ການທຳລາຍ ລບຕ ເຄື່ອນທີ່ | ເມືອງ ປາກຊັນ, ປາກກະດິງ, ຄຳເກີດ, ທ່າພະບາດ, ບໍລິຄັນ, ແຂວງ ບໍລິຄຳໄຊ<br>ເມືອງ ວັງວຽງ, ກາສີ, ແຂວງ ວຽງຈັນ<br>ເມືອງ ນາຄາລີ, ແຂວງຄຳມ່ວນ<br>ເມືອງ ສັງທອງ, ນະຄອນຫຼວງວຽງຈັນ |

**ການເງິນໃນປີ 2021**

**ລາຍຈ່າຍໃນປີ 2021 (ໂດລາ ສຫຼ)**

| ລາຍການ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | ອີງຕາມລັດຖະບານ ສປປ ລາວ |
| ຄ່າປະຕິບັດງານ | 37,799 |
| ຄ່າຈັດຊື້ວັດຖຸອຸປະກອນ | 60,000 |
| **ລວມ** | **97,799** |

**ການມີສ່ວນຮ່ວມຂອງຜູ້ໃຫ້ທຶນ ໃນປີ 2021 (ໂດລາ ສຫຼ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ອີງການກອຍກາ ປະຈຳ ສປປ ລາວ | 97,799 |
| ລວມ | 97,799 |

## ອົງການສຶກສາໂລກ (ເວີອິດູເຄເຊັ້ນ)

WORLD EDUCATION

**ກິດຈະກຳໃນປີ 2021**

ໃນປີ 2021, ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ຈາກສິງຄາມ (WVMF), ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ດ້ວຍການສະໜັບສະໜຸນດ້ານການເງິນສຳຫຼັບການເດີນທາງ, ຢາປິ່ນປົວ, ແລະ ເງິນອຸກໜຸນຈຳນວນໜຶ່ງໃຫ້ແກ່ຜູ້ເບິ່ງແຍງດູແລໃນຂະນະທີ່ເຂົາເຈົ້າຢູ່ ໂຮງໝໍ ຫຼື ສູນຟື້ນຟູ. ກອງທຶນດັ່ງກ່າວຍັງໄດ້ຈ່າຍຄ່າປິ່ນປົວຢ່າງຕໍ່ເນື່ອງ ແລະ ຄ່າໃຊ້ຈ່າຍໃນການຜ່າຕັດສຳລັບຜູ້ລອດຊີວິດຈາກການ
ບາດເຈັບຢ່າງຮຸນແຮງ ແລະ ສະໜອງການສະໜັບສະໜຸນທາງດ້ານການເງິນໃນການຈັດພິທີສົບ ແລະ ທາງສາດສະໜາ. ໃນປີ 2021, ກອງທຶນການແພດແກ່ຜູ້ຖືກເຄາະຮ້າຍຈາກສິງຄາມ (WVMF) ຍັງໄດ້ສະໜັບສະໜຸນພະນັກງານ ຄຊກລ ລະດັບແຂວງ ເພື່ອສົ່ງເງິນຊ່ວຍເຫຼືອໃຫ້ແກ່ຄອບຄົວ ແລະ ແບ່ງປັນຂໍ້ມູນກ່ຽວກັບນະໂຍບາຍ ແລະ ຂັ້ນຕອນຂອງ WVMF ໃນຂັ້ນບ້ານ.

- ໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນໂຄງການຢູ່ ສປປ ລາວ, ເຊິ່ງໄດ້ຈັດຕັ້ງປະຕິບັດ ໂດຍການຮ່ວມມືກັບ MOES, ໄດ້ປິດລົງໃນວັນທີ 30 ກັນຍາ 2021. ກິດຈະກຳຫຼັກປີ 2021 ລວມມີການຝຶກອົບຮົມຄູ ກ່ຽວກັບຫຼັກສູດ MRE ຂັ້ນປະຖົມ; ຝຶກອົບຮົມພະນັກງານຂັ້ນແຂວງ ແລະ ເມືອງ ໃຫ້ເປັນຄູຝຶກຫຼັກສູດຢູ່ໂຮງຮຽນມັດທະຍົມຕອນຕົ້ນ; ສ້າງຕັ້ງຄະນະລະຄອນຕຸກກະຕາ MRE; ແລະ ສະໜັບສະໜຸນການສະແດງຄະນະ.
- WEI ໄດ້ລິເລີ່ມການປະຕິບັດວຽກງານກັບ MOES ໃນລະດັບສູນກາງ ແລະ ແຂວງ, ແລະ ຫ້ອງການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ເພື່ອທົບທວນຮ່າງບົດບັນທຶກຄວາມເຂົ້າໃຈ Lawang (“ລະວັງ”): ການຂະຫຍາຍຂອບເຂດການສຶກສາຄວາມສ່ຽງດ້ານລະເບີດ (EORE) ໃນໂຄງການຢູ່ ສປປ ລາວ.
- WEI ຈັດຕັ້ງປະຕິບັດກິດຈະກຳ ອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ Okard ທີ່ສະໜັບສະໜຸນການພັດທະນາລວມໃຫ້ແກ່ຄົນພິການໃນ ສປປ ລາວ. ໃນປີ 2021, ໂດຍການຮ່ວມມືຢ່າງໃກ້ຊິດກັບຄະນະກຳມະການຄົນພິການ ແລະ ຜູ້ສູງອາຍຸແຫ່ງຊາດ (NCDE), ກົມປິ່ນປົວ ແລະ ຟື້ນຟູສຸຂະພາບ (DHR) ແລະ ສູນຟື້ນຟູການແພດ (CMR) ທີ່ກະຊວງສາທາລະນະສຸກ (MOH), ແລະ ສອງອົງການຈັດຕັ້ງສັງຄົມພົນລະເຮືອນ (ສະມາຄົມຄຸນນະພາບຊີວິດ (QLA) ແລະ ສະມາຄົມສົ່ງເສີມ ແລະ ປັບປຸງຊົນນະບົດ (ARMI), USAID Okard ສືບຕໍ່ດຳເນີນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍແບບປະສົມປະສານ ເພື່ອແກ້ໄຂຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການຈາກສາເຫດອື່ນໆ.

**ຜົນສຳເລັດ ໃນປີ 2021:**

- ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ຈາກສິງຄາມ ສະໜັບສະໜຸນຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ ບົນພື້ນຖານຄວາມຈຳເປັນ ຫຼັງຈາກເກີດອຸປະຕິເຫດຈາກ ລບຕ. ໃນປີ 2021, ກອງທຶນການແພດແກ່ຜູ້ຖືກເຄາະຮ້າຍຈາກສິງຄາມ ໄດ້ຊ່ວຍເຫຼືອ 41 ກໍລະນີ. (40 ກໍລະນີແມ່ນຊ່ວຍເຫຼືອສຳຫຼັບຜູ້ເຄາະຮ້າຍຄັ້ງທຳອິດ ແລະ 1 ກໍລະນີແມ່ນຕິດຕາມຮັກສາຜູ້ທີ່ໄດ້ຮັບຜົນກະທົບຈາກທີ່ຜ່ານມາ).

- ຕາຕະລາງຂ້າງລຸ່ມ ແມ່ນການສັງລວມຜົນສໍາເລັດໃນປີ 2020 ຂອງໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບຮອບດ້ານ:

| ກິດຈະກໍາ | ແຜນການປີ 2021 | ແຜນສໍາເລັດໃນປີ 2021 | |
|---|---|---|---|
| | ຄາດໝາຍ | ການປະຕິບັດຕົວຈິງ | ເປີເຊັນ (%) |
| ສືບຕໍ່ຖ່າຍທອດບົດຮຽນໃຫ້ແກ່ ຄູອາຈານ ກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໂຮງຮຽນ | 180 ຄົນ | 180 ຄົນ | 100% |
| ດໍາເນີນການຝຶກອົບຮົມໃຫ້ແກ່ຄູຝຶກ ກ່ຽວກັບການສອນບົດຮຽນການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ສໍາຫຼັບຊັ້ນມັດທະຍົມຕອນຕົ້ນ) | 92 ຄົນ | 92 ຄົນ | 100% |
| ດໍາເນີນກອງປະຊຸມ TOT ກ່ຽວກັບ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ພະນັກງານ DESB ແລະ ຄູອາຈານ ເພື່ອໃຫ້ສາມາດຝຶກອົບຮົມ/ຊ່ວຍເຫຼືອຄະນະ ແລະ ຮັກສາ/ສ້າງຕຸກກະຕາ | 107 ຄົນ | 107 ຄົນ | 100% |
| ສ້າງກອງລະຄອນຕຸກກະຕາກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 33 ກອງລະຄອນ | 33 ກອງລະຄອນ | 100% |
| ສະໜັບສະໜູນການສະແດງຂອງກອງລະຄອນຕຸກກະຕາໃນວັນແມ່ຍິງສາກົນ | 20 ການສະແດງ | 20 ການສະແດງ | 100% |
| ຈັດພິມເອກະສານກ່ຽວກັບໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ປຶ້ມຄູ່ມື, ປຶ້ມນິທານ ແລະ ໂປສເຕີ້) | 88,000 | 102,870 ສິ້ນສ່ວນ | 117% |

| | | | |
|---|---|---|---|
| ລາຍງານຄວາມສຳເລັດບົດລາຍງານຂອງໂຄງການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ລາຍງານຄວາມສຳເລັດບົດລາຍງານຂອງໂຄງການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ລາຍງານຄວາມສຳເລັດບົດລາຍງານຂອງໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ສຳເລັດ | 100% |

ຕາຕະລາງດ້ານລຸ່ມນີ້ແມ່ນຜົນສະຫຼຸບຄວາມສຳເລັດຂອງໂຄງການ USAID Okard 2021 ທີ່ກ່ຽວຂ້ອງກັບແນວທາງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ:

| ກິດຈະກຳ | ແຜນການປີ 2021 | ຜົນສຳເລັດໃນປີ 2021 | |
|---|---|---|---|
| | ຄາດໝາຍ | ປະຕິບັດຕົວຈິງ | ເປີເຊັນ (%) |
| ສະໜັບສະໜູນການແນະນຳການລິການດ້ານສຸຂະພາບ ແລະ ການຟື້ນຟູ | 360 ກໍລະນີ | 233 ກໍລະນີໄດ້ຖືກສົ່ງໄປຫາຜູ້ໃຫ້ບໍລິການດ້ານສຸຂະພາບ ແລະ ການຟື້ນຟູສະພາບຈາກ PRCs, CMR ແລະ ໂຮງໝໍເມືອງ ແລະ ແຂວງ, ແລະ ໄດ້ຮັບການຮັກສາສຸຂະພາບ ແລະ ການຟື້ນຟູຢ່າງສົມບູນ ແລະ ໃຫ້ການຊ່ວຍເຫຼືອທີ່ຈຳເປັນ.<br>ໃນນັ້ນ, 11 ຄົນແມ່ນຜູ້ລອດຊີວິດຈາກ ລບຕ | 64% |
| ສະໜັບສະໜູນຜູ້ໄດ້ຮັບຜົນປະໂຫຍດ ເພື່ອເຂົ້າເຖິງກິດຈະກຳທີ່ສາມາດສ້າງລາຍໄດ້ | 180 | 167 ກໍລະນີ ໄດ້ປະເມີນໃຫ້ເປັນຜູ້ໄດ້ຮັບການສ້າງລາຍໄດ້ ຜ່ານກິດຈະກຳຂອງໂຄງການ.<br>ໃນນັ້ນ, ຜູ້ໄດ້ຮັບປະໂຫຍດ 5 ຄົນແມ່ນຜູ້ລົດຊີວິດຈາກ ລບຕ.<br>ອົງການ ສາກົນເພື່ອການພັດທະນາຂອງ ສ. ອາເມລິກາ Okard ໄດ້ປະສານສົມທົບກັບ ຄຊກລ ເພື່ອດຳເນີນການເກັບກູ້ລະເບີດບໍ່ທັນແຕກ ໃຫ້ແກ່ 33 ຄອບຄົວ ຜູ້ທີ່ລິເລີ່ມກິດຈະກຳສ້າງລາຍຮັບ, ຊຶ່ງມີເນື້ອທີ່ທັງໝົດ 1,968 ຕາແມັດ. | 92% |

## ກໍລະນີສຶກສາ

ທ້າວ ຕຸ່ນຄໍາ ອາຍຸ 18 ປີ, ອາໄສຢູ່ແຂວງຊຽງຂວາງ, ໃນປີ 2016, ທ້າວ ຕຸ່ນຄໍາ ໄດ້ຮັບອຸປະຕິເຫດ ຈາກ ລບຕ ໃນຂະນະທີ່ກໍາລັງຈັບຫຼິ້ນ. ລູກລະເບີດໄດ້ແຕກ ແລະ ເສດລະເບີດໄດ້ກະຈາຍອອກໄປ, ເຮັດໃຫ້ລາວເສຍຕາ ແລະ ມືຂ້າງຊ້າຍ. ທ້າວ ຕຸ່ນຄໍາ ໄດ້ສືບຕໍ່ໄປໂຮງຮຽນ ແຕ່ລາວບໍ່ສາມາດເຂົ້າຮ່ວມຊຸມຊົນໄດ້ ຢ່າງເມື່ອກ່ອນ. ຄອບຄົວຂອງຕຸ່ນຄໍາ ພະຍາຍາມຮັກສາປິ່ນປົວ ແລະ ໃຫ້ກໍາລັງໃຈລາວໃນການເຂົ້າຮ່ວມກິດຈະກໍາຂອງສັງຄົມ ແລະ ສືບຕໍ່ໃຫ້ການສຶກສາ.

ທ້າວ ຕຸ່ນຄໍາ ແມ່ນຖືກລະບຸເຂົ້າໃນໂຄງການທີມພັດທະນາລວມໃນຊຸມຊົນຂອງ ອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ Okard (CBID) ໂດຍນາຍບ້ານ. ຜ່ານການຄຸ້ມຄອງກໍລະນີ CBID, ຕຸ່ນຄໍາ ຖືກນໍາສົ່ງໂຮງໝໍແຂວງ ເພື່ອກວດສຸຂະພາບຕາ ແລະ ການເບິ່ງເຫັນ ຊຶ່ງເປັນຜົນມາຈາກຜົນຮ້າຍຂອງ ລບຕ. ຕາເບື້ອງຊາຍຂອງທ້າວ ຕຸ່ນຄໍາ ແມ່ນບອດ ແລະ ອ່ອນໄຫວຕໍ່ແສງ ແລະ ເຊື້ອໂລກ, ຊຶ່ງໄດ້ຖືກແນະນໍາໃຫ້ມີການຜ່າຕັດ ເພື່ອປ່ຽນໃສ່ຕາທຽມ. ໃນເດືອນກຸມພາ 2022, ການຜ່ານຕັດແມ່ນໄດ້ປະສົບຜົນສໍາເລັດ. ທ້າວ ຕຸ່ນຄໍາ ດໍາລົງຊີວິດດ້ວຍຕາທຽມໜ່ວຍໃໝ່ ແລະ ແວ່ນຕາ ເພື່ອພັດທະນາການເບິ່ງເຫັນຂອງຕາເບື້ອງຂວາຂອງລາວ ແລະ ປ້ອງການແສງອາທິດ. ສິ່ງທີ່ສໍາຄັນທີ່ສຸດແມ່ນມັນໄດ້ເສີມສ້າງຄວາມໝັ້ນໃຈ ແລະ ຄວາມພາກພູມໃຈ ໃນການດໍາລົງຊີວິດຢູ່ໃນສັງຄົມ, ສ້າງເພື່ອຝູງ, ຕັ້ງໃຈຮໍ່າຮຽນ ແລະ ປະກອບສ່ວນເຂົ້າໃນກິດຈະກໍາໃນສັງຄົມ. ທ້າວ ຕຸ່ນຄໍາ ຫວັງວ່າ ຈະສືບຕໍ່ຮໍ່າຮຽນສາຍ IT ຫຼັງຈາກຮຽນຈົບຊັ້ນມັດທະຍົມ.

ການຊ່ວຍເຫຼືອທາງດ້ານຈິດໃຈແມ່ນສໍາຄັນໃນຂະບວນການຟື້ນຟູພາຍຫຼັງໄດ້ຮັບອຸປະຕິເຫດຈາກ ລບຕ. ຖ້າ ຕຸ່ນຄໍາ ແລະ ຄອບຄົວຂອງລາວສົນໃຈ, ໂຄງການ CBID ກໍ່ພ້ອມທີ່ໃຫ້ໂອກາດລາວໃນການເຂົ້າຮ່ວມ ກັບຜູ້ສະໜັບສະໜູນຕົວຕໍ່ຕົວ ທີ່ປະສົບອຸປະຕິເຫດຄ້າຍຄືກັບລາວ, ເພື່ອສົ່ງເສີມໃນການໃຊ້ຊີວິດແບບອິດສະຫຼະ ແລະ ປະມວນສິ່ງທີ່ເກີດຂຶ້ນກັບລາວ. ຄອບຄົວຂອງລາວຈະໄດ້ຮັບການປຶກສາ ແລະ ສະໜັບສະໜຸນ ເພື່ອເຂົາເຈົ້າມີແນວທາງຊ່ວຍ ທ້າວ ຕຸ່ນຄໍາ ທາງດ້ານຮ່າງກາຍ ແລະ ຈິດໃຈ ທີ່ດີກວ່າ ໂດຍຜ່ານກິດຈະກໍາຂອງໂຄງການອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ Okard ເຊັ່ນ: ການຝຶກອົບຮົມຜູ້ເບິ່ງແຍງ, ການສົນທະນາສື່ສານກຸ່ມໃນສັງຄົມ ແລະ ກຸ່ມຊ່ວຍເຫຼືອໂຕເອງ.

**ແຜນການສໍາຫຼັບປີ 2022:**

- ຫຼັງຈາກການເກີດອຸປະຕິເຫດ, ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ຈາກສົງຄາມ ຈະສືບຕໍ່ສະໜັບສະໜຸນຄ່າປິ່ນປົວໂດຍດ່ວນ ແລະ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກ ລບຈ ແລະ ຄ່າເຮັດພິທີບວງສົບໃຫ້ແກ້ຄອບຄົວຜູ້ເສຍຊີວິດ;
- ປະສານກັບ ຄຊກລ ແລະ ບັນດາກະຊວງທີ່ກ່ຽວຂ້ອງເພື່ອຂໍການອະນຸມັດສ້າງບົດບັນທຶກຄວາມເຂົ້າໃຈສະບັບໃໝ່ (ໄລຍະເວລາປະຕິບັດງານ: ເດືອນມິຖຸນາ 2022 ເຖິງ ເດືອນ ພະຈິກ 2024);
- ຮ່ວມກັບ ຄຊກລ, ດໍາເນີນການຕິດຕາມກວດກາຜູ້ຖືກເຄາະຮ້າຍ ແລະ ຄອບຄົວຜູ້ຖືກເຄາະຮ້າຍ ຈາກ ລບຕ;
- ດໍາເນີນຈັດຕັ້ງສໍາມະນາກ່ຽວກັບ ນະໂຍບາຍ ເພື່ອພະນັກງານໃນໂຮງໝໍຂອງ WVMF

**ກິດຈະກໍາຕົ້ນຕໍຂອງ Lawang ໃນປີ 2022: ຂະຫຍາຍຂອບເຂດຂອງໂຄງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (ລໍຖ້າການອະນຸມັດບົດບັນທຶກຄວາມເຂົ້າໃຈ)**

- ຝຶກຝົນຄູອາຈານ ກ່ຽວກັບວິຊາຮຽນ ໃນຊັ້ນມັດທະຍົມສຶກສາ (ໂດຍການພັດທະນາພາຍໃຕ້ໂຄງການ MRE ຮອບດ້ານ) ໃນ 88 ເມືອງ ທົ່ວ 10 ແຂວງ;
- ດໍາເນີນການປະເມີນຄວາມຕ້ອງການກ່ຽວກັບວິທີການລວມກິດຈະກໍາຂອງ EORE ໃນໝູ່ບ້ານ (ກັບຄະນະກໍາມະການພັດທະນາການສຶກສາຂອງບ້ານ (VEDCs) ແລະ ສູນການສຶກສານອກໂຮງຮຽນ (NFE);

- ເຮັດວຽກຮ່ວມກັບກົມການສຶກສານອກໂຮງຮຽນ ເພື່ອສ້າງບົດຮຽນຂອງ EORE ສຳຫລັບສູນ NFE;
- ສ້າງປຶ້ມຄູ່ມື EORE ສຳລັບ VEDCs ແລະ ອາສາສະໝັກຊາວໜຸ່ມ;

**ກິດຈະກຳຕົ້ນຕໍຂອງ USAID Okard**

- ສືບຕໍ່ສະໜັບສະໜຸນ COPE ແລະ CMR/PRSC ເພື່ອສະໜອງຂາທຽມ, ກະດູກແຂນ ແລະ ໄມ້ຄໍ້າຊ່ວຍຍ່າງ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ແລະ ຜູ້ປະສົບຄວາມຫຍຸ້ງຍາກໃນການເຄື່ອນຍ້າຍ, ການດູແລຕົວເອງ ແລະ ການດຳລົງຊີວິດປະຈຳວັນ;
- ສືບຕໍ່ໃຫ້ການຊ່ວຍເຫຼືອ CMR ໂດຍການຝຶກອົບຮົມໃຫ້ການດູແລສຸຂະພາບຂັ້ນຕົ້ນ 150 ຄົນ ກ່ຽວກັບວຽກງານຟື້ນຟູທີ່ຈຳເປັນ ເພື່ອໃຫ້ຜູ້ລອດຊີວິດຈາກ ລບຕ,ໃນນັ້ນ, ເຂົ້າເຖິງການຟື້ນຟູຢ່າງທັນການ ແລະ ມີປະສິດທິພາບ ແລະ ໃຫ້ຜະລິດຕະພັນການຊ່ວຍເຫຼືອຫຼັງຈາກເກີດອຸປະຕິເຫດ;
- ຈັດຕັ້ງໜ່ວຍຟື້ນຟູໜ້າທີ່ການ ຢູ່ໂຮງໝໍເມືອງຄຳ (ແຂວງຊຽງຂວາງ) ເພື່ອເພີ່ມຄວາມພ້ອມໃນການບໍລິການຟື້ນຟູຜູ້ລອດຊີວິດ ຂັ້ນປະຖົມພະຍາບານຈາກ ລບຕ ແລະ ອື່ນໆ;
- ສະໜັບສະໜຸນ DHR ໃນການຈັດຫາ ແລະ ສະໜອງອຸປະກອນຊ່ວຍເຫຼືອທີ່ຈຳເປັນຫຼາຍກວ່າທາງໂຄງການ COPE ໄດ້ຈັດຫາໃຫ້ CMR/PRSC ດ້ວຍທຶນຂອງ Okard;
- ສະໜັບສະໜຸນ NCDE ເພື່ອກຳນົດ, ປະເມີນ ແລະ ອອກບັດຜູ້ພິການ ແລະ ສ້າງຖານຂໍ້ມູນສຳຫຼັບຄົນພິການ ລວມທັງຜູ້ລອດຊີວິດຈາກ ລບຕ.

**ຄູ່ຮ່ວມງານ**

- ກະຊວງສຶກສາ ແລະ ກິລາ
- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ
- ອົງການ NCDE, DHR, COPE, ສະມາຄົມຄຸນະພາບຊີວິດ (QLA), ສະມາຄົມ ເພື່ອການເຄື່ອນໄຫວ ແລະ ປັບປຸງຊົນນະບົດ (ARMI).

**ພື້ນທີ່ການປະຕິບັດງານ**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງເຊກອງ, ຈຳປາສັກ, ສະຫວັນນະເຂດ, ສາລະວັນ, ອັດຕະປື, ບໍລິຄຳໄຊ (ທຸກເມືອງໃນແຕ່ລະແຂວງ). |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ແຂວງຫຼວງພະບາງ, ຊຽງຂວາງ, ຫົວພັນ, ຄຳມ່ວນ, ສະຫວັນນະເຂດ , ສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ສະຖານທີ່ອື່ນໆ ຕາມການຮ້ອງຂໍມາຈາກອົງການປົກຄອງທ້ອງຖິ່ນ ແລະ ຄຊກລ. |

| ຊື່ໂຄງການ | ລົງວັນທີ ລາຍເຊັນ | ໄລຍະເວລາ | ມູນຄ່າທັງໝົດ | ມູນຄ່າແຍກ ເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການໂຄສະນາສຶກສາ ຄວາມສ່ຽງຈາກ ລບຕ ຢູ່ ສປປ ລາວ | 6 ກຸມພາ 2019 | 31 ສິງຫາ 2021 (31 ເດືອນ) | $2,018,471 | $665,580 | ກະຊວງການ ຕ່າງປະເທດ ສ. ອາເມລິກາ |
| ກອງທຶນຊ່ວຍເຫຼືອປິ່ນປົວຜູ້ ຖືກ ເຄາະຮ້າຍຈາກສົງຄາມ ຢູ່ ສປປ ລາວ | 3 ກໍລະກົດ 2022 | 31 ພຶດສະພາ 2021 (21 ເດືອນ) | $100,000 | $41,960 | ກະຊວງການ ຕ່າງປະເທດ ສ. ອາເມລິກາ |
| USAID Okard | 16 ພຶດສະພາ 2019 | 30 ກັນຍາ 2022 | $3,565,996 | $1,019,831 | ອົງການສາກົນ ເພື່ອການ ພັດທະນາຂອງ ສ. ອາເມລິກາ |

**ການເງິນ ໃນປີ 2020**

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021: **1,072,694** ໂດລາ ສຫຼ | |
|---|---|
| ລາຍລະອຽດຄ່າໃຊ້ຈ່າຍ (ຕັ້ງແຕ່ເດືອນມັງກອນ ເຖິງ ເດືອນທັນວາ 2021) (ໂດລາ ສຫຼ) | |
| ລາຍລະອຽດ | ຈຳນວນ |
| ເງິນເດືອນພະນັກງານ | **209,843** |
| ຄ່າໃຊ້ຈ່າຍການປະຕິບັດງານ: | **862,850** |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | **458,899** |
| - ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | **403,951** |
| ລວມທັງໝົດ | **1,072,694** |

**ປະເທດຜູ້ໃຫ້ທຶນ ໃນປີ 2021 (ໂດລາ ສຫຼ)**

| ຈຳນວນທຶນທີ່ໄດ້ຮັບຕັ້ງແຕ່ເດືອນ ມັງກອນ ເຖິງ ທັນວາ 2021 (ໂດລາ ສຫຼ) | |
|---|---|
| ລາຍຊື່ປະເທດຜູ້ໃຫ້ທຶນ | **Amount** |
| ກະຊວງການຕ່າງປະເທດ ສ. ອາເມລິກາ | 535,049 |
| ອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ | 537,645 |
| ລວມ | **1,072,694** |

# ອົງການສະໜອງເຄື່ອງຄ້ຳຊູ ແລະ ອົງຄະທຽມ (COPE)

**ກິດຈະກຳໃນປີ 2021**

ໃນປີ 2021, ໄດ້ມອບເຄື່ອງອຸປະກອນ ຈຳນວນ **678** ເຄື່ອງໃຫ້ແກ່ຜູ້ຖືກເຄາະຮ້າຍ, ສ້ອມແປງອຸປະກອນ 112 ເຄື່ອງ ແລະ ມອບອຸປະກອນອົງຄະທຽມຊ່ວຍອີກ 114 ໂດຍຜ່ານ CMR ແລະ 4 ສູນຟື້ນຟູຂັ້ນແຂວງ. ອົງຄະທຽມ (ຂາທຽມ) ຈຳນວນ 206 ເຄື່ອງ ຍັງຄົງເປັນສິ່ງຕ້ອງການຫຼາຍທີ່ສຸດຈາກເຫດການ ອຸບັດຕິເຫດ ລບຕ.

**ຜົນສຳເລັດໃນປີ 2021**

- ໄດ້ສ້າງຕັ້ງສູນຄລີນິກເຄື່ອນທີ່ ທີ່ແຂວງຄຳມ່ວນ.
- ໄດ້ຕິດຕາມການປະຕິບັດງານຢູ່ແຂວງຄຳມ່ວນ.
- ໄດ້ຈັດຝຶກອົບຮົມດ້ານ ກາຍະພາບບຳບັດໂລກ clubfoot ໃຫ້ແກ່ພະນັກງານໃນ CMR ແລະ 4 ສູນຟື້ນຟູຂັ້ນແຂວງ.
- ໄດ້ຈັດຝຶກອົບຮົມກ່ຽວກັບ Knee Ankle Foot Orthosis ໃຫ້ແກ່ CMR ແລະ 4 ສູນຟື້ນຟູຂັ້ນແຂວງ.
- ໄດ້ຕິດຕາມກ່ຽວກັບ Knee Ankle Foot Orthosis ໃນ CMR ແລະ 4 ສູນຟື້ນຟູຂັ້ນແຂວງ.
- ໄດ້ດຳເນີນການບໍລິຫານ 4 ສູນຟື້ນຟູຂັ້ນແຂວງ

**ກໍລະນີສຶກສາ**

- ນ້ອງ ນ້ຳຫວານ ອາຍຸ 8 ເດືອນ, ເກີດໃນວັນທີ 10 ເມສາ 2021, ອາໄສຢູ່ບ້ານ ປາກກະດິງ, ເມືອງ ປາກກະດິງ, ແຂວງ ບໍລິຄຳໄຊ. ລາວໄດ້ເກີດມາໂດຍມີຄວາມຜິດປົກກະຕິຄື ຕີນຂ້າງຊາຍມີລັກສະນະຫັນເຂົ້າໄປທາງໃນ ເຊິ່ງເອີ້ນວ່າໂລກ “clubfoot”



- ຫຼັງຈາກທີ່ລາວເກີດ, ທ່ານໝໍໄດ້ໃຫ້ຄຳປຶກສາ ແລະ ແນະນຳແມ່ຂອງລາວໃຫ້ໄປສູນໃຫຍ່ CMR ທີ່ນະຄອນຫຼວງວຽງຈັນ, ແຕ່ເນື່ອງຈາກການສະກັດກັ້ນພະຍາດ ໂຄວິດ-19 ຈຶ່ງເຮັດໃຫ້ລາວບໍ່ສາມາດເດີນທາງໄປສູນໃຫຍ່ CMR ທີ່ນະຄອນຫຼວງວຽງຈັນໄດ້.
- ນ້ຳຫວານໄດ້ເຂົ້າຮັບການບຳບັດໃນວັນທີ 10 ສິງຫາ 2021, ພາຍຫຼັງການປະເມີນ ພະນັກງານວິຊາການໄດ້ບອກກັບພໍ່ແມ່ຂອງນ້ຳຫວານວ່າ ໂລກ “clubfoot” ແມ່ນຄວາມຜິດບົກຜ່ອງແຕ່ກຳເນີດ ທີ່ເຮັດໃຫ້ຕີນເບື້ອງໃດເບື້ອງໜຶ່ງ ຫຼື ທັງສອງເບື້ອງຫັນເຂົ້າໃນ. ຖ້າເດັກໄດ້ຮັບການຕິດຕາມ ແລະ ປິ່ນປົວທີ່ຖືກຕ້ອງ ພາຍໃນ ອາທິດທຳອິດ-ໜຶ່ງເດືອນ ກໍຈະມີໂອກາດ 95% ທີ່ຈະກັບມາເປັນປົກກະຕິ. ເພື່ອແກ້ໄຂຄວາມຜິດປົກກະຕິ ນ້ຳຫວານຕ້ອງໄດ້ຮັບ

ການຜ່າຕັດຢ່າງໜ້ອຍ 4-6 ເທື່ອ, ສະນັ້ນ ພໍ່ແມ່ຂອງນ້ຳຫວານຕ້ອງໄດ້ພາລາວມາສູນ CMR ໃນທຸກໆອາທິດ ເພື່ອນຳເອົາຜ້າພັນແຜເກົ່າອອກ ແລະ ໃສ່ແຜ່ນໃໝ່.

- ມື້ນີ້, ນ້ຳຫວານໄດ້ມາປ່ຽນຜ້າພັນແຜເທື່ອທີ 5 ແລະ ຈະໄດ້ເລີ່ມໃສ່ສາຍແຂນທີ່ມີຊື່ວ່າ: Dennis Brown Bar (DBB). DBB ນີ້ຈະຊ່ວຍແກ້ໄຂຄວາມຜິດປົກກະຕິ ແລະ ປ້ອງກັນການເກີດ ໂລກ clubfoot ແຕ່ ນ້ຳຫວານຈະຕ້ອງໃສ່ DBB 23 ຊົ່ວໂມງຕໍ່ມື້ ເປັນເວລາ 3 ເດືອນ ແລະ ສືບຕໍ່ໃສ່ຢ່າງໜ້ອຍ 12 ຊົ່ວໂມງຕໍ່ມື້ ໃນເວລານອນຫຼັບ ຈົນກວ່ານ້ອງຈະມີອາຍຸເຖິງ 4 ປີ. ເພື່ອຈະເຮັດໃຫ້ການບຳບັດນີ້ສຳເລັດ, ພໍ່ແມ່ຂອງນ້ຳຫວານຈຳຕ້ອງພາລາວໄປ CMR ເພື່ອປ່ຽນ DBB ຕາມຄຳແນະນຳຂອງພະນັກງານຟື້ນຟູ.

**ພື້ນທີ່ການປະຕິບັດງານ**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | ນະຄອນຫຼວງວຽງຈັນ |

**ການເງິນໃນປີ 2021 (ໂດລາ ສຫລ)**

| ລາຍການ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | |
| ຄ່າປະຕິບັດງານ | |
| **ລວມ** | **416,000** |

**ຜູ້ໃຫ້ທຶນປະຈຳປີ 2021 (ໂດລາ ສຫລ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ປະເທດນໍອກແວ | 230,000 |
| USAID | 300,000 |
| ສະຖານທູດ ນິວຊີແລນ | 16,000 |
| ISO-ITO | 10,000 |
| | **556,000** |

## ອົງກອນຟື້ນຟູ ເທີລາ

Terra Renaissance

**ກິດຈະກຳໃນປີ 2021**

ອົງກອນຟື້ນຟູ ເທີລາ ໄດ້ດຳເນີນການຈັດຕັ້ງປະຕິບັດການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ເດັກເຍົາວະຊົນ 2 ຄັ້ງໃນ 7 ບ້ານເປົ້າໝາຍ (ບອກກົບ, ນາສາລາ, ນາຄຳແພງ, ພູສິນ, ແກ້ວ, ວຽງໄຊ, ອໍອຸນ, ເມືອງ ແປກ, ແຂວງ ຊຽງຂວາງ)

ອົງກອນຟື້ນຟູ ເທີລາ ໄດ້ຄັດເລືອກເອົາຜູ້ໄດ້ຮັບຜົນປະໂຫຍດມາຝຶກອົບຮົມວິຊາຊີບ ໂດຍຄັດເລືອກຈາກຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄອບຄົວທຸກຍາກ ທີ່ມີລາຍໄດ້ຕ່ຳ.

ອົງກອນຟື້ນຟູ ເທີລາ ໄດ້ຈັດຕັ້ງປະຕິບັດການຝຶກອົບຮົມວິຊາຊີບຕັດຫຍິບ ໂດຍຮ່ວມມືກັບ ວິທະຍາໄລເຕັກນິກ-ວິຊາຊີບແບບປະສົມປະສານ ແຂວງຊຽງຂວາງ ແລະ ມີຜູ້ໄດ້ຮັບການຝຶກອົບຮົມຈຳນວນ 10 ຄົນ.

ອົງກອນຟື້ນຟູ ເທີລາ ໄດ້ຈັດຕັ້ງປະຕິບັດການຝຶກອົບຮົມວິຊາຊີບຕັດຫຍິບຕື່ມອີກ ແລະ ມີຜູ້ໄດ້ຮັບການຝຶກອົບຮົມຈຳນວນ 5 ຄົນ.

ອົງກອນຟື້ນຟູ ເທີລາ ໄດ້ຈັດການຝຶກອົບຮົມການນຸ່ງຖືຂອງຊົນເຜົ່າມົ້ງ ເປັນຕົ້ນແມ່ນການນຸ່ງຖືຂອງເພດຊາຍ , ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 15 ຄົນ ແຕ່ເຂົ້າຮ່ວມພຽງ 11 ຄົນ, ສ່ວນ 4 ຄົນ ແມ່ນມີບັນຫາທາງຄອບຄົວເລີຍບໍ່ສາມາດເຂົ້າຮ່ວມໄດ້.

ອົງກອນຟື້ນຟູ ເທີລາໄດ້ສ້າງຮ້ານຕັດຫຍິບ 3 ຮ້ານ ເພື່ອຜະລິດ ແລະ ຂາຍ ເຄື່ອງນຸ່ງໃນເຂດ ຍອດງື່ມ ແລະ ມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 5 ຄົນ

ອົງກອນຟື້ນຟູ ເທີລາ ຮ່ວມກັບ IVET COLLEGE ໄດ້ຈັດການຝຶກອົບຮົມປູກເຫັດ, ມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 10 ຄົນ. ຫຼັງຈາກນັ້ນກໍ່ໄດ້ສະໜອງສວນເຫັດ ຈຳນວນ 5 ຕູບ ແລະ ເງິນສະໜັບສະໜູນເລີ່ມຕົ້ນ (ປະມານ 2ລ້ານກີບ)ໃຫ້ແຕ່ລະຄູ່ (1 ຄູ່ ແມ່ນເປັນເຈົ້າຂອງ 1 ຕູບ)

ອົງກອນເທີລາໄດ້ຈັດການຝຶກອົບຮົມການລ້ຽງເຜິ້ງເປັນເວລາ 5 ມື້ ແລະ ມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 26 ຄົນ.

ໄດ້ສ້າງສູນພັດທະນາຊຸມຊົນ ແລະ ຮ້ານຕັດຫຍິບ ຈຳນວນ 3 ຮ້ານ ໃນເຂດຍອດງື່ມ.

**ຜົນສຳເລັດໃນປີ 2021**

ອົງກອນ ຟື້ນຟູ ເທີລາ ໄດ້ວາງແຜນໂຄສະນາສຶກສາຄວາມສ່ຽງຈາກ ລບຕ ສຳລັບກຸ່ມເດັກນ້ອຍເຍົາວະຊົນໃນ 7 ກຸ່ມບ້ານເປົ້າໝາຍ ໃນປີ 2020 ຈຳນວນ 2 ຄັ້ງ ແລະ ປີ 2021 ຈຳນວນ 2 ຄັ້ງ ເຊັ່ນດຽວກັນ, ແຕ່ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃນປີ 2020 ຈຶ່ງເຮັດໃຫ້ ອົງກອນ ເທີລາ ບໍ່ສາມາດປະຕິບັດງານໄດ້, ສະນັ້ນ ຈຶ່ງໄດ້ດຳເນີນງານໃນປີ 2021 ໂດຍມີເຍົາວະຊົນເຂົ້າຮ່ວມຈຳນວນ 458 ຄົນ ແລະ ປະຊາຊົນ 209 ຄົນ (ສ່ວນຫຼາຍແມ່ນຜູ້ປົກຄອງຂອງເຍົາວະຊົນ).

ກ່ອນການໂຄສະນາສຶກສາຄວາມສ່ຽງຂອງ ລບຕ, ອົງກອນ ເທີລາ ໄດ້ດຳເນີນການທົດສອບຄວາມຮູ້ເບື້ອງຕົ້ນສຳລັບເດັກນ້ອຍເຍົາວະຊົນ ເຊິ່ງຜົນການປະເມີນແມ່ນປະມານ 18%, ແຕ່ຫຼັງຈາກມີການໂຄສະນາສຶກສາຄວາມສ່ຽງຂອງ ລບຕ ຄັ້ງທີ່ 1 ເຫັນວ່າຄະແນນດີຂຶ້ນປະມານ 68%.

ຮ້ານຕັດຫຍິບແມ່ນໄດ້ເລີ່ມທຳການຜະລິດ ແລະ ສົ່ງອອກຂາຍ, ສາມາດສ້າງໄດ້ 40 ລ້ານກີບ (ສະເລ່ຍ 4 ລ້ານກີບ/ຄົນ) ໃນປີ 2021.

ການປູກເຫັດແມ່ນສາມາດສ້າງລາຍໄດ້ທັງໝົດ 30 ລ້ານກີບ (ສະເລ່ຍ 3 ລ້ານກີບ/ຄົນ)ໃນປີ 2021.

ສາມາດເກັບກ່ຽວນ້ຳເຜິ້ງໄດ້ 10 ກິໂລ ໃນປີ 2021

ສູນພັດທະນາຊຸມຊົນ ແລະ ຮ້ານຕັດຫຍິບ 3 ຮ້ານ ໄດ້ສ້າງສຳເລັດໃນເດືອນ ສິງຫາ 2021.

**ກິລະນີສຶກສາ**

- ການໂຄສະນາສຶກສາຄວາມສ່ຽງ: ອົງກອນ ເຫີລາ ປະຕິບັດການໂຄສະນາສຶກສາຄວາມສ່ຽງ ສໍາລັບເດັກນ້ອຍ ເຍົາວະຊົນ ແລະ ເດັກນ້ອຍອາຍຸຕໍ່າກວ່າ 3 ປີ. ໄດ້ໂຄສະນາ ຜ່ານປື້ມຮູບພາບທີ່ອົງກອນໄດ້ຜະລິດຂື້ນ, ເຮັດໃຫ້ພວກ ເຂົາມີຄວາມຮັບຮູ້ກ່ຽວກັບ ລບຕ ເພີ່ມຂື້ນຈາກ 5,21% ເປັນ 49,29%.

- ນາງ ຊິວ ຢາ ໜຶ່ງໃນຜູ້ເຄາະຮ້າຍຈາກ ລບຕ ແຕ່ປີ 2016 ແລະ ຍັງຄົງມີບາດແຜນັບແຕ່ນັ້ນມາ ຈິ່ງເຮັດໃຫ້ບໍ່ສາມາດ ເຮັດວຽກໜັກໄດ້. ລາວໄດ້ເຂົ້າຮ່ວມການຝຶກອົບຮົມ ຕັດຫຍິບ ແລະ ໄດ້ສໍາເລັດການຝຶກອົບຮົມ. ປັດຈຸບັນລາວ ໄດ້ເຮັດວຽກຢູ່ບ່ອນຕັດຫຍິບທີ່ອົງກອນ ເຫີລາ ໄດ້ຈັດຕັ້ງ ຂຶ້ນ ແລະ ສາມາດສ້າງລາຍໄດ້ ຈໍານວນ 1,500,000 ກີບຕໍ່ ເດືອນ.

- ທ້າວ ສີໄວ ໜຶ່ງໃນຜູ້ປູກເຫັດທີ່ໄດ້ຮັບຄັດເລືອກຈາກຜູ້ທີ່ ມີລາຍໄດ້ຕໍ່າ. ລາວໄດ້ເຂົ້າຮ່ວມຝຶກອົບຮົມການປູກເຫັດ ເພື່ອຜະລິດ ແລະ ຂາຍອອກໃນຊ່ວງເດືອນ ມັງກອນ-ກຸມພາ ປີ 2021. ປັດຈຸບັນລາວສາມາດສ້າງລາຍຮັບຈາກ ການຂາຍເຫັດໄດ້ 800,000 ກີບ ຕໍ່ເດືອນ.

- ນາງ ຫຼ້າ ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ເປັນຜູ້ທີ່ມີ ລາຍໄດ້ຕໍ່າ, ໄດ້ເຂົ້າຮ່ວມການຝຶກອົບຮົມເກັບກ່ຽວນໍ້າເຜີ້ງ, ໃນປີ 2021, ລາວສາມາດເກັບນໍ້າເຜີ້ງໄດ້ 4 ກິໂລ ແລະ ຫວັງວ່າຈະເກັບໄດ້ຫຼາຍຂຶ້ນໃນປີ 2022. ນອກຈາກນີ້, ພາຍໃນປີ 2022, ລາວຍັງໄດ້ວາງແຜນຈະເຂົ້າຝຶກອົບຮົມ ດ້ານຕັດຫຍິບອີກດ້ວຍ.

**ວຽກງານຈຸດສຸມໃນປີ 2022**

ໃນປີ 2022, ອົງກອນ ເຫີລາ ຈະສືບຕໍ່ດໍາເນີນການໂຄສະນາສຶກສາຄວາມສ່ຽງຂອງ ລບຕ ຄັ້ງທີ 3 ແລະ 4 ໂດຍ ເນັ້ນໃສ່ເດັກນ້ອຍອະນຸບານ ແລະ ປະຖົມ ໃນເຂດຍອດງື່ມ, ເມືອງ ແປກ, ແຂວງ ຊຽງຂວາງ ແລະ ເນື່ອງຈາກວ່າກຸ່ມເປົ້າໝາຍຂອງພວກເຮົາແມ່ນ ຊົນເຜົ່າ ມົ້ງ 100%, ດັ່ງນັ້ນຈະໄດ້ດໍາເນີນການໂຄສະນາສຶກສາຄວາມສ່ຽງ ລບຕ ໂດຍນໍາໃຊ້ ພະນັກງານທີ່ເປັນຊົນເຜົ່າມົ້ງ ແລະ ໃຊ້ພາສາມົ້ງ ເພື່ອໂຄສະນາ.

**ສິ່ງທ້າທາຍ:** ເນື່ອງຈາກທາງອົງກອນເຮົາບໍ່ມີຂໍ້ມູນຈໍານວນ ຫຼື ສະຖານທີ່ຂອງໂຮງຮຽນ ອະນຸບານ, ດັ່ງນັ້ນ ວິທີການທີ່ເຮົາຈະ ນໍາໃຊ້ໃນການໂຄສະນາສຶກສາຄວາມສ່ຽງຂອງ ລບຕ ແມ່ນ ສອບຖາມນໍາຜູ້ອໍານວຍການໂຮງຮຽນປະຖົມ ຫຼື ອາຈານໃນແຕ່ ລະຊັ້ນ.

ຫຼັກສູດຂອງໂຮງຮຽນປະຖົມແມ່ນມີປື້ມກ່ຽວກັບການໂຄສະນາສຶກສາຄວາມສ່ຽງແລ້ວ ຂໍພຽງແຕ່ພວກເຂົານໍາໃຊ້ ເຂົ້າໃນຫຼັກສູດການຮຽນ-ການສອນ.

ອົງກອນ ເຫີລາ ຈະສືບຕໍ່ ຕິດຕາມ ຮ້ານຕັດຫຍິບ ແລະ ຕູບປູກເຫັດຕໍ່ໄປ

ໃນປີ 2022, ອົງກອນ ເຫີລາ ຈະສືບຕໍ່ຂະຫຍາຍພື້ນທີ່ປູກເຫັດ ໂດຍຫຼີກລ້ຽງເຂດພື້ນທີ່ຊື້ນ ເພື່ອໃຫ້ມີຜູ້ໄດ້ຮັບຜົນ ປະໂຫຍດເພີ່ມຂຶ້ນ. ໃນປີ 2021 ຜູ້ໄດ້ຮັບຜົນປະໂຫຍດຈາກການປູກເຫັດຈໍານວນ 10 ຄົນ ແມ່ນບໍ່ໄດ້ໃສ່ໃຈໃນການປູກ ເຫັດ ເນື່ອງຈາກວ່າ ພວກເຂົາມີກິດຈະກໍາອື່ນທີ່ຕ້ອງໄດ້ເຮັດ (ປູກເຂົ້າ, ລ້ຽງສັດ ແລະ ອື່ນໆ).

ເນື່ອງຈາກຄວາມໜາວເຢັນ ແລະ ຝົນຕົກແຮງໃນລະດູຝົນ ໃນປີ 2021, ເຮັດໃຫ້ຮັງເຜີ້ງບາງບ່ອນເສຍຫາຍ ແລະ ບໍ່ ສາມາດເກັບກ່ຽວໄດ້. ໃນປີ 2022, ຜູ້ຊ່ຽວຊານດ້ານການເກັບຮັງເຜີ້ງຈະຕິດຕາມ ແລະ ໃຫ້ຄໍາແນະນໍາຕໍ່ກັບ ຜູ້ໄດ້ຮັບຜົນ ປະໂຫຍດ ໃນການເກັບກ່ຽວຮັງເຜີ້ງ.

ສ້າງຕັ້ງລະບົບການຄຸ້ມຄອງຮ້ານຕັດຫຍິບ 3 ຮ້ານ ແລະ ສູນພັດທະນາຊຸມຊົນ.

**ພື້ນທີ່ການປະຕິບັດງານໃນປີ 2021.**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການໂຄສະນາສຶກສາຄວາມສ່ຽງ | ເມືອງ ແປກ, ແຂວງ ຊຽງຂວາງ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | ເມືອງ ແປກ, ແຂວງ ຊຽງຂວາງ |

**ການເງິນໃນປີ 2021 (ໂດລາ ສຫຼ)**

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການໂຄສະນາສຶກສາຄວາມສ່ຽງ ແລະ ຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຜູ້ທີ່ມີລາຍໄດ້ຕ່ຳ ເມືອງ ແປກ, ແຂວງ ຊຽງຂວາງ | 21/8/20 | 21/8/20 ຫາ 31/10/22 | 298,430 ໂດລາ ສຫຼ | ມັງກອນ-ສິງຫາ 2021: 216,394 ໂດລາ ສຫຼ | ກະຊວງການຕ່າງປະເທດຍີ່ປຸ່ນ |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2021 (ໂດລາ ສຫລ): 203,851 ໂດລາ ສຫລ | |
|---|---|
| ລາຍລະອຽດລາຍຈ່າຍ(ສະເພາະຊ່ວງເດືອນ ມັງກອນ-ທັນວາ ປີ 2021 ເທົ່ານັ້ນ) | |
| ລາຍການ | ຈຳນວນ |
| ເງິນເດືອນພະນັກງານ | 63,723 |
| -ຄ່າປະຕິບັດງານ | 129,825 |
| -ຄ່າໂຄສະນາສຶກສາຄວາມສ່ຽງ ລບຕ | 54,460 |
| -ຄ່າຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | 73,365 |
| -ຄ່າຈັດຊື້ອຸປະກອນ | 10,303 |
| **ລວມ** | **203,851** |

| ທຶນທາງອ້ອມທີ່ໄດ້ຮັບໃນປີ 2021 (ໂດລາ ສຫລ): 12,543 ໂດລາ ສຫລ | |
|---|---|
| ລາຍລະອຽດລາຍຈ່າຍ (ສະເພາະຊ່ວງເດືອນ ມັງກອນ ເຖິງ ທັນວາ ປີ 2021 ເທົ່ານັ້ນ) | |
| ລາຍການ | ຈຳນວນ |
| ເງິນເດືອນພະນັກງານ | 0 |
| ຄ່າປະຕິບັດງານ | 11,490 |
| -ຄ່າໂຄສະນາສຶກສາຄວາມສ່ຽງ ລບຕ | 3,529 |
| -ຄ່າຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | 8,231 |
| ຄ່າຈັດຊື້ອຸປະກອນ | 1,053 |
| **ລວມ** | **12,543** |

**ຜູ້ໃຫ້ທຶນໃນປີ 2021 (ໂດລາ ສຫຼ):**

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ກະຊວງການຕ່າງປະເທດຍີ່ປຸ່ນ | 216,394 |
| **ລວມ** | **216,394** |

# ບັນດາບໍລິສັດ ເກັບກູ້ ລະເບີດ[4]

[4] ບົດລາຍງານຂອງຜູ້ດຳເນີນງານ UXO ແມ່ນປະກອບໂດຍອີງໃສ່ບົດລາຍງານການເຄື່ອນໄຫວປະຈຳປີທີ່ໄດ້ຮັບ

## ບໍລິສັດ ລາວ-ອົດສະຕາລີ
## ເກັບກູ້ລະເບີດ ຈຳກັດ

AUSLAO GROUP

**ກິດຈະກຳໃນປີ 2021**

ເນື່ອງຈາກສະພາບການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ຫຼາຍໆບໍລິສັດ ຫຼື ໂຄງການຈຳຕ້ອງໄດ້ເລື່ອນ ຫຼື ຢຸດການດຳເນີນການປະຕິບັດວຽກງານ. ບໍລິສັດ ລາວ-ອົດສະຕາລີ ເກັບກູ້ລະເບີດ ໄດ້ດຳເນີນການໃນປີ 2021 ໂດຍແບ່ງເປັນ 2 ໄລຍະຄື:

ໄລຍະທີ 1 (ມັງກອນ-ມິຖຸນາ 2021): ໄດ້ດຳເນີນວຽກງານເກັບກູ້ ລບຕ ຢູ່ຕາມແລວສາຍສົ່ງ 22 kv ຂອງໂຄງການເຂື່ອນໄຟຟ້ານ້ຳພາກ ທີ່ເມືອງ ປາກຊ່ອງ ແລະ ອຸທຸມພອນ, ແຂວງ ຈຳປາສັກ.

ໄລຍະທີ 2 (ກໍລະກົດ-ທັນວາ 2021): ໄດ້ດຳເນີນວຽກງານກວດກູ້ ລບຕ ຢູ່ຕາມແລວເສັ້ນທາງ, ພື້ນທີ່ກໍ່ສ້າງ ຂອງໂຄງການເຂື່ອນໄຟຟ້ານ້ຳພາກ ທີ່ເມືອງ ປາກຊ່ອງ ແລະ ອຸທຸມພອນ, ແຂວງ ຈຳປາສັກ.

**ຜົນສຳເລັດໃນປີ 2021**

ເນື່ອງຈາກສະພາບການພະຍາດໂຄວິດ-19 ເຮັດໃຫ້ເກີດມີການຈຳກັດບໍລິເວນ ແລະ ສົ່ງຜົນໃຫ້ແຜນການຈັດຕັ້ງປະຕິບັດໂຄງການຂອງພວກເຮົາ ບໍ່ບັນລຸເປົ້າໝາຍໄດ້ເທົ່າທີ່ຄວນ.

ທີມງານວິສະວະກອນໄດ້ພົບກັບຄວາມຫຍຸ້ງຍາກໃນການຈັດແຈງແຮງງານ, ອຸປະກອນສຳຫຼັບການສຳຫຼວດ ແລະ ກໍ່ສ້າງ. ດັ່ງນັ້ນ, ພວກເຂົາຈຶ່ງບໍ່ສາມາດບັນລຸເປົ້າໝາຍຂອງພວກເຂົາໄດ້ ແລະ ສົ່ງຜົນຕໍ່ການບໍ່ສາມາດສະໜອງຂໍ້ມູນໃຫ້ແກ່ທີມງານສຳຫຼວດໄດ້ຕາມແຜນການ. ມີພຽງ 2 ທີມງານເທົ່ານັ້ນທີ່ສາມາດເຮັດວຽກໄດ້ຕາມເປົ້າໝາຍໃນປີ 2021.

ດັ່ງນັ້ນ, ທີມງານບໍລິຫານຈຶ່ງໄດ້ປັບປຸງແຜນຍຸດທະສາດ ແລະ ສຸມໃສ່ດ້ານການຕະຫຼາດໃນປີ 2022.

**ວຽກງານບູລິມະສິດໃນປີ 2021**

ບໍລິສັດ ລາວ-ອົດສະຕາລີ ເກັບກູ້ ຈຳກັດ ກຳລັງສຸມໃສ່ໂຄງການທີ່ມີທ່າແຮງໃນຂະແໜງການພະລັງງານ ແລະ ບໍ່ ແຮ່, ຖະໜົນຫົນທາງ ທີ່ສອດຄ່ອງກັບຍຸດທະສາດການພັດທະນາໃນອານະຄົດຂອງລັດຖະບານ. ເຊິ່ງບາງລາຍການແມ່ນໄດ້ຕິດຕໍ່ໄປແລ້ວ.

**ລູກຄ້າໃນປີ 2021**

- ບໍລິສັດ EDL ແລະ EDL Gen,
- ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ,
- ກຸ່ມບໍລິສັດ ພົງຊັບທະວີ,

**ພື້ນທີ່ການປະຕິບັດງານ ໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການກວດກູ້ ລບຕ | ເມືອງ ອຸທຸມພອນ, ປາກຊ່ອງ, ແຂວງ ຈຳປາສັກ |
| ການທຳລາຍ ລບຕ ເຄື່ອນທີ່ | ເມືອງ ປາກຊ່ອງ, ແຂວງ ຈຳປາສັກ |

**ການເງິນໃນປີ 2021**

**ລາຍຈ່າຍໃນປີ 2021 (ໂດລາ ສຫລ)**

| ລາຍການ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 23,450 |
| ຄ່າປະຕິບັດງານ | 112,550 |
| ການສຳຫຼວດ ແລະ ກວດກູ້ ລບຕ | 12,000 |
| ຄ່າຈັດຊື້ວັດຖຸອຸປະກອນ | 500 |
| **ລວມ** | **48,500** |

**ທຶນປະກອບສ່ວນຂອງລູກຄ້າ ໃນປີ 2021 (ໂດລາ ສຫລ)**

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ເຂື່ອນໄຟຟ້ານ້ຳຕົກ ນ້ຳພາກ | 50,000 |
| **ລວມ** | **50,000** |

## ບໍລິສັດ ລາວບີເອັດສ໌ເອວ ເກັບກູ້ລະເບີດ ຈຳກັດ

### ກິດຈະກຳໃນປີ 2021



- ໄດ້ເຄື່ອນໄຫວການສຳຫຼວດ ແລະ ກວດກູ້ ລບຕ ທີ່ ໂຮງຮຽນ ມັດທະຍົມສົມບູນ ສີວິໄລ, ເມືອງ ໄຊບົວທອງ, ແຂວງ ຄຳມ່ວນ: 7,173 ຕາແມັດ ໂດຍການສະໜັບສະໜຸນຈາກ ກອງທັບ ສ. ອາເມລິກາ
- ດຳເນີນການທີ່ບ່ອນເກັບມ້ຽນຂີ້ເຫຍື້ອ ຂອງເມືອງ ປາກຊັນ ຈຳນວນ 96,000 ຕາແມັດ, ໂດຍໄດ້ຮັບ ທຶນຈາກການພັດທະນາບັນດາເມືອງຕາມແລວ ທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງ ແຫ່ງທີ່ 4.
- ດຳເນີນການທີ່ບ່ອນຈອດລົດ ຂົນສົ່ງສິນຄ້າສາກົນ ແດນສະຫວັນ 31,774 ຕາແມັດ, ໂດຍໄດ້ຮັບທຶນ ຈາກງົບປະມານແຂວງສະຫວັນນະເຂດ.
- ພົບ ລບຕ BLU 26:01; ລະເບີດໃຫຍ່ 1 ໜ່ວຍ, Mortar 2 ໜ່ວຍ.

### ວຽກງານບູລິມາສິດໃນປີ 2022

- ພື້ນທີ່ເກັບມ້ຽນຂີ້ເຫຍື້ອ ແຂວງຄຳມ່ວນ
- ພື້ນທີ່ກໍ່ສ້າງໂຮງໝໍໃຫ້ແກ່ຄະນະສະເພາະກິດເພື່ອ ປ້ອງກັນ ແລະ ຕ້ານພະຍາດໂຄວິດ
- ພື້ນທີ່ເຂດກໍ່ສ້າງ RISL ແຂວງ ອັດຕະປື/ GITEC-IGIP GmbH

ເນື້ອທີ່ລວມໃນການກວດກູ້ ລບຕ: **396,047.90** ຕາແມັດ

### ລູກຄ້າ/ຄູ່ຮ່ວມງານ

- ກອງວິສະວະກອນກອງທັບ ສ. ອາເມລິກາ.
- ການພັດທະນາບັນດາເມືອງຕາມແລວເສດຖະກິດ ອະນຸພາກພື້ນແມ່ຂອງ ຄັ້ງທີ 4.
- ອຳນາດການປົກຄອງທ້ອງຖິ່ນແຂວງ ສະຫວັນນະ ເຂດ.

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ ລບຕ | ເມືອງ ໄຊບົວທອງ, ແຂວງ ຄຳມ່ວນ<br>ເມືອງ ບໍລິຄຳໄຊ, ແຂວງ ບໍລິຄຳໄຊ<br>ເມືອງ ເຊໂປ, ແຂວງ ສະຫວັນນະເຂດ |

**ການເງິນໃນປີ 2021**

**ລາຍຈ່າຍໃນປີ 2021 (ໂດລາ ສຫລ)**

| ລາຍການ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 7,600 |
| ຄ່າປະຕິບັດງານ | 4,560 |
| ຄ່າຈັດຊື້ວັດຖຸອຸປະກອນ | 3,040 |
| **ລວມ** | **15,200** |

**ການມີສ່ວນຮ່ວມຂອງລູກຄ້າໃນປີ 2021 (ໂດລາ ສຫລ)**

| ລູກຄ້າ | ຈຳນວນ |
|---|---:|
| ກອງວິສະວະກອນກອງທັບ ສ. ອາເມລິກາ | 1,450 |
| ການພັດທະນາບັນດາເມືອງຕາມແລວເສດຖະກິດອະນຸພາກພື້ນແມ່ຂອງຄັ້ງທີ 4 | 9,000 |
| ລັດຖະບານແຫ່ງ ສປປ ລາວ | 4,750 |
| **ລວມ** | **10,900** |

## ບໍລິສັດ ອຸມມາ ເກັບກູ້ລະເບີດ ຈຳກັດ

**ຜົນສຳເລັດໃນປີ 2021**

ບໍລິສັດ ອຸມມາ ເກັບກູ້ລະເບີດ ຈຳກັດ ໄດ້ຮ່ວມມືກັບຜູ້ໃຫ້ທຶນ ແລະ ຝ່າຍປະຕິບັດງານ ໃນການກວດກູ້ ແລະ ທຳລາຍ ລບຕ ສຳເລັດຕາມເປົ້າໝາຍ.

**ວຽກງານບູລິມະສິດໃນປີ 2022**

**ສິ່ງທ້າທາຍ:** ບໍລິສັດ ອຸມມາ ເກັບກູ້ລະເບີດ ຈຳກັດ ຈະສືບຕໍ່ເພີ່ມປະສິດທິພາບ ແລະ ຄຸນນະພາບວຽກງານການກວດກູ້ ແລະ ທຳລາຍ ລບຕ , ສືບຕໍ່ຊອກຫາແຫຼ່ງທຶນສະໜັບສະໜູນສຳລັບວຽກງານນີ້

**ໂອກາດ:** ອີງຕາມຜົນງານໃນອະດີດ ແລະ ປັດຈຸບັນ, ບໍລິສັດຂອງພວກເຮົາສາມາດສ້າງຄວາມໄວ້ວາງໃຈກ່ຽວກັບວຽກງານໃນດ້ານຕ່າງໆ ແກ່ຜູ້ມອບທຶນ ແລະ ຊ່ວຍໃຫ້ສັງຄົມໃຫ້ມີວຽກເຮັດງານທຳ.

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ | ເມືອງ ຫີນບູນ, ແຂວງ ຄຳມ່ວນ<br>ເມືອງ ຊຳເໜືອ, ແຂວງ ຫົວພັນ<br>ເມືອງ ໄຊ, ແຂວງ ອຸດົມໄຊ |

**ການເງິນປະຈຳປີ 2021 (ໂດລາ ສຫລ)**

**ລາຍຈ່າຍປະຈຳປີ 2021 (ໂດລາ ສຫລ):**

| ລາຍການ | ຈຳນວນ |
|---|---|
| ເງິນເດືອນພະນັກງານ | |
| ຄ່າປະຕິບັດງານ | |
| ຄ່າຈັດຊື້ວັດຖຸອຸປະກອນ | |
| **ລວມ** | |

**ການມີສ່ວນຮ່ວມຂອງລູກຄ້າໃນປີ 2021 (ໂດລາ ສຫລ)**

| ລູກຄ້າ | ຈຳນວນ |
|---|---|
| | |
| **ລວມ** | |

## ບໍລິສັດ ລ້ານຊ້າງ ມິເນໂລ ຈຳກັດ

**ກິດຈະກຳໃນປີ 2021**

- ໃນປີ 2021, ທີມງານ ເກັບກູ້ ລບຕ ຂອງບໍລິສັດ ໄດ້ສືບຕໍ່ສຳຫຼວດ ແລະ ກວດກູ້ ລບຕ ໃນພື້ນທີ່ສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່, ແນ່ໃສ່ພື້ນທີ່ຂຸດຄົ້ນບໍ່ແຮ່ ຢູ່ຕາມຄວາມເລິກທີ່ໄດ້ຂຸດຄົ້ນ, ເຂດພື້ນທີ່ຂະຫຍາຍເຂື່ອນ WTSF, ເຂດຂຸມ ພູແດງທາງຕາເວັນອອກ ແລະ ເຂດຂຸດຄົ້ນທາງພາກຕາເວັນຕົກ. ນອກຈາກນີ້, ຍັງໄດ້ດຳເນີນການສຳຫຼວດ ແລະ ກວດກູ້ ລບຕ ເຊັ່ນ: ເຂດພູແດງ, ພູໂຊ, ວັງຢາງ, ດອກບົວ ແລະ ກາບັນເໜືອ.
- ບໍລິສັດໄດ້ຖືເອົາການກວດກູ້ ລບຕ ໃນເຂດຊຸມຊົນເປັນບູລິມະສິດ ໂດຍສະເພາະເສັ້ນທາງເຊື່ອມຕໍ່ກັບໝູ່ບ້ານ, ເສັ້ນທາງ 28A, ເຂດປ່າຊ້າຂອງບ້ານຫ້ວຍເກິ່ງ ແລະ ຍັງໄດ້ໃຫ້ການສະໜັບສະໜູນວຽກງານຂຸດຄົ້ນສິລະປະ. ລບຕ ທີ່ພົບເຫັນຢູ່ໃຫ້ພື້ນທີ່ຂຸດຄົ້ນບໍ່ແຮ່ແມ່ນໄດ້ຖືກທຳລາຍ.
- ບໍລິສັດຍັງໄດ້ດຳເນີນການເຜີຍແຜ່ ແລະ ປູກຈິດສຳນຶກໃຫ້ຊຸມຊົນ ກ່ຽວກັບໄພອັນຕະລາຍຂອງ ລບຕ ຢູ່ໂຮງຮຽນປະຖົມໃນບ້ານທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19.
- ຕັ້ງແຕ່ຊ່ວງເດືອນມັງກອນ-ທັນວາ ປີ 2021, ພື້ນທີ່ຂຸດຄົ້ນບໍ່ແຮ່ໄດ້ຮັບການກວດກູ້ ລບຕ 321 ເຮັກຕາ, ກວດພົບ ແລະ ທຳລາຍ ລບຕ 1,368 ໜ່ວຍ. ໃນນັ້ນ, ມີລະເບີດເຮືອບິນ 6 ໜ່ວຍ.
- ສຳລັບຊຸມຊົນ, ໄດ້ສຳເລັດການເກັບກູ້ ລບຕ ທີ່ເສັ້ນທາງ 28 A, ປ່າຊ້າບ້ານຫ້ວຍເກິ່ງ ແລະ ສະໜັບສະໜູນການຂຸດຄົ້ນສິລະປະ. ນອກຈາກນັ້ນ, ຍັງໄດ້ດຳເນີນວຽກງານ ໂຄສະນາສຶກສາຄວາມສ່ຽງ ລບຕ ແລະ ປູກຝັງຈິດສຳນຶກ ໄດ້ພຽງແຕ່ 5 ໂຮງຮຽນປະຖົມ ແລະ ມັດທະຍົມ ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19.

**ກິລະນີສຶກສາ**

- ທີມງານ ເກັບກູ້ ລບຕ ຂອງບໍລິສັດ ໄດ້ຮ່ວມມືກັບ GAP EOD ໃນການພັດທະນາອຸປະກອນ/ລະບົບເກັບກູ້ EM ທີ່ດັດແປງຈາກ Ultra TEM, ສາມາດສາກແບັດໄດ້ ແລະ ສາມາດກວດພົບລູກລະເບີດ Mk81 ຂະໜາດ 250 lbs ຢູ່ທີ່ຄວາມເລິກ 2,9 ແມັດ, ພາຍໃນພື້ນທີ່ທີ່ມີລັງສີສູງ. ອຸປະກອນປະເພດນີ້ມີຂະໜາດທີ່ເໝາະສົມ ແລະ ສາມາດຂົນສົ່ງໃສ່ລົດກະບະໄດ້ ພ້ອມຍັງແທດເໝາະກັບສະພາບແວດລ້ອມທີ່ເຮັດວຽກໃນປະຈຸບັນ.

**ວຽກງານບູລິມະສິດໃນປີ 2022**

- ໃນປີ 2022, ການດຳເນີນງານຈະສຸມໃສ່ການຂຸດຄົ້ນ ເພື່ອຍືດອາຍຸການຂຸດຄົ້ນບໍ່ແຮ່, ການດຳເນີນງານຂອງທີມງານ ລບຕ ຈະສະໜັບສະໜູນແຜນການຂະຫຍາຍການຂຸດຄົ້ນບໍ່ແຮ່ ແລະ ທີມຂຸດຄົ້ນບໍ່ແຮ່ ລວມທັງການສະໜັບສະໜູນໂຄງການບຳບັດນ້ຳ. ໂຄງການເຫຼົ່ານີ້ຈະສ້າງລາຍຮັບໃຫ້ແກ່ຊຸມຊົນທ້ອງຖິ່ນ ລວມທັງພະນັກງານ ກວດກູ້ ລບຕ ຂອງພວກເຮົາ, ທີ່ສ່ວນຫຼາຍແມ່ນຄົນທ້ອງຖິ່ນ

- ມາດຕະຖານສຳລັບທີມງານກວດກູ້ ລບຕ ຂອງບໍລິສັດເຮົາແມ່ນຖືເອົາຄວາມປອດໄພມາເປັນອັນດັບໜຶ່ງ ແລະ ຮັກສາໂຕເລກຂອງຜູ້ໄດ້ຮັບບາດເຈັບໃຫ້ເປັນ 0.

ບໍລິສັດພວກເຮົາ ຈະສືບຕໍ່ຂະຫຍາຍການຄຸ້ມຄອງຄຸນະພາບຢ່າງຕໍ່ເນື່ອງ. ໃນປີ 2021 ພວກເຮົາໄດ້ທົດລອງລະເບີດ ຫຼາຍກວ່າ 200 ໜ່ວຍ ເພື່ອຮັບປະກັນພື້ນທີ່ກວດກູ້ຈາກ ລບຕ ໃຫ້ໄດ້ 100 ເປີເຊັນ ແລະ ຢືນຢັນວ່າ ລບຕ ໄດ້ກວດກູ້ທັງໝົດ ແລະ ມີຄຸນນະພາບສູງ. ໃນປີ 2022, ເປົ້າໝາຍແມ່ນຮັກສາ ແລະ ເສີມຂະຫຍາຍມາດຕະຖານການດຳເນີນວຽກງານ ແລະ ຄຸນະພາບ ດ້ວຍໂຄງການທົດລອງລະເບີດ

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ໂຄສະນາສຶກສາຄວາມສ່ຽງ | ເມືອງ ວິລະບູລີ, ແຂວງສະຫວັນນະເຂດ |
| ການກວດກູ້ ລບຕ | ເມືອງ ວິລະບູລີ, ແຂວງສະຫວັນນະເຂດ |

**ການເງິນໃນປີ 2021**

**ລາຍຈ່າຍໃນປີ 2021 (ໂດລາ ສຫລ)**

| ລາຍການ | ຈຳນວນ |
|---|---|
| ເງິນເດືອນພະນັກງານ | |
| ຄ່າສຳຫຼວດ ແລະ ກວດກູ້ | |
| ຄ່າຈັດຊື້ວັດຖຸອຸປະກອນ | |
| ທຶນທາງອ້ອມ | |
| **ລວມ** | |

**ການມີສ່ວນຮ່ວມຂອງລູກຄ້າໃນປີ 2021 (ໂດລາ ສຫລ)**

| ລູກຄ້າ | ຈຳນວນ |
|---|---|
| ທຶນຕົວເອງ | 3,139,275 |
| **ລວມ** | **3,139,275** |

# ບໍລິສັດ ມິວເຊີດສ໌ ເກັບກູ້ລະເບີດ

**ກິດຈະກຳໃນປີ 2021**

ໃນປີ 2021, ເປັນເວລາ 28 ປີ, ທີ່ບໍລິສັດໄດ້ເຄື່ອນໄຫວປະຕິບັດວຽກງານໃນ ສປປ ລາວ. ໃນຊ່ວງ 9 ເດືອນທຳອິດຂອງປີແມ່ນ ມີຄວາມຫຍຸ້ງຍາກຫຼາຍ ເນື່ອງຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ຂັດຂວາງການເຄື່ອນໄຫວວຽກງານ ຂອງພະນັກງານ ມິວເຊີດສ໌ ທົ່ວປະເທດ ພ້ອມທັງຂັດຂວາງລູກຄ້າຈາກສາກົນ ຫຼື ຜູ້ໃຫ້ທຶນສະໜັບສະໜູນບໍ່ສາມາດ ເຂົ້າ-ອອກ ສປປ ລາວ.

ມາຮອດເດືອນກັນຍາ, ຂໍ້ຈຳກັດຕ່າງໆໄດ້ຜ່ອນຄາຍລົງ. ອົງການບັນຊີ POW/MIA ສ. ອາເມລິກາ ທີ່ໄດ້ໂຈະການດຳເນີນງານຍ້ອນພະຍາດໂຄວິດ-19 ຈະໄດ້ເລີ່ມເຮັດວຽກຄືນໃໝ່ໃນ ສປປ ລາວ.

ບໍລິສັດ ມິວເຊີດສ໌ ສືບຕໍ່ໃຫ້ການສະໜັບສະໜູນດ້ານການຂຸດຄົ້ນ ໂດຍຜ່ານ ບໍລິສັດ ພູເບ້ຍຂຸດຄົ້ນບໍ່ແຮ່ ແລະ ບໍລິສັດ ສຳຫຼວດ ຣິໂອ ທິນໂຕ. ບໍລິສັດ ມິວເຊີດສ໌ ຍັງໄດ້ສືບຕໍ່ວຽກງານໃນຂະແໜງການປ່າໄມ້ ໂດຍຜ່ານ ບໍລິສັດ ບົວລະພາ ກະສິກຳ ຈຳກັດ.

ບໍລິສັດ ມິວເຊີດສ໌ ສືບຕໍ່ດຳເນີນຫຼາຍໂຄງການຄົ້ນຄວ້າກ່ຽວກັບສິ່ງເສດເຫຼືອຈາກສົງຄາມທາງປະຫວັດສາດ. ບໍ່ວ່າຈະເປັນແບບເອກະລາດ ຫຼື ຊ່ວຍສະໜັບສະໜູນ ບໍລິສັດແມ່ຢູ່ປະເທດອິດສະຕາລີ. ໂຄງການຄົ້ນຄວ້າເຫຼົ່ານີ້ ໄດ້ສະໜັບສະໜູນໃຫ້ແກ່ບັນດາໂຄງການກ່ຽວກັບ ການວິໄຈດິນ, ການກໍ່ສ້າງຢູ່ທະເລ, ໂຄງການໂທລະຄົມມະນາຄົມສື່ສານ ແລະ ໂຄງການສາຍສົ່ງໄຟຟ້າ.

ສ່ວນໂຄງການຂອງ ມິວເຊີດສ໌ ໃນປະເທດຫວຽດນາມ ແລະ ປາຊີຟິກໃຕ້ ແມ່ນໄດ້ຖືກໂຈະຊົ່ວຄາວ ຍ້ອນບັນຫາການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ມີການຫ້າມບໍ່ໃຫ້ເດີນທາງ. ບໍລິສັດ ມິວເຊີດສ໌ ຈະສືບຕໍ່ນຳເອົາທຶນຈາກຕ່າງປະເທດເຂົ້າມາ ສປປ ລາວ ແລະ ຫວັງວ່າຈະໄດ້ມີການປະຕິບັດງານພາຍໃນປີ 2022.

ບໍລິສັດ ມິວເຊີດສ໌ ຍັງຄົງຍຶດໝັ້ນ ໃນການປະຕິບັດ ການຫຼຸດຜ່ອນອັນຕະລາຍຂອງ ລບຕ ພາຍໃນ ສປປ ລາວ.

**ຜົນສຳເລັດໃນປີ 2021**



ໃນໄລຍະຊ່ວງການແຜ່ລະບາດພະຍາດໂຄວິດ-19 ບໍລິສັດ ມິວເຊີດສ໌ ໄດ້ຮັກສາພະນັກງານສັນຊາດລາວໄວ້ທັງໝົດ, ໂດຍບໍ່ມີການຫຼຸດເວລາເຮັດວຽກ. ໂດຍການສະໜັບສະໜູນຈາກບໍລິສັດແມ່ ໃນປະເທດ ອົດສະຕາລີ.

ບໍລິສັດ ມິວເຊີດສ໌ ໄດ້ຊຸກຍູ້ທັນປັ່ງນການປະຕິບັດງານແບບ "ຮາກຖານທີ່ແຂງແຮງຕໍ່ການກໍ່ສ້າງທີ່ແຂງແຮງ" ນຳໃຊ້ເຂົ້າໃນການປະເມີນ ແລະ ຄຸ້ມຄອງສິ່ງເສດເຫຼືອຈາກສົງຄາມທາງປະຫວັດສາດ. ວິທີການຂັ້ນຕອນນີ້ໄດ້ຖືກຮັບຮອງເຂົ້າໃນທຸກໂຄງການ ຂອງ ບໍລິສັດ ມິວເຊີດສ໌ ແລະ ໃຫ້ສອດຄ່ອງກັບສະມາຄົມຄົ້ນຄວ້າ ແລະ ຂໍ້ມູນຂ່າວສານອຸດສາຫະກຳກໍ່ສ້າງ (CIRIA). CIRIA ໄດ້ໃຫ້ຄຳແນະນຳສຳລັບ ການຄຸ້ມຄອງປົນເປື້ອນໂດຍ ສິ່ງເສດເຫຼືອຈາກສົງຄາມ ທັງທາງບົກ ຫຼື ທາງທະເລ ແລະ ໄດ້ຮັບການຮັບຮອງເອົາຢ່າງກ້ວາງຂວາງໂດຍອຸດສາຫະກຳການກໍ່ສ້າງສາກົນ. ແບ່ງເປັນໄລຍະດັ່ງນີ້:

- ໄລຍະທີ1: ການປະເມີນໄພຂົ່ມຂູ່ ຈາກສິ່ງເສດເຫຼືອຈາກສົງຄາມ
- ໄລຍະທີ່2: ການປະເມີນຄວາມສ່ຽງ ຈາກສິ່ງເສດເຫຼືອຈາກສົງຄາມ
- ໄລຍະທີ່3: ການຄຸ້ມຄອງຄວາມສ່ຽງ ຈາກສິ່ງເສດເຫຼືອຈາກສົງຄາມ

- ໄລຍະທີ4: ການວາງແຜນຫຼຸດຜ່ອນຄວາມສ່ຽງ ຈາກສິ່ງເສດເຫຼືອຈາກສົງຄາມ
- ໄລຍະທີ5: ການຈັດສົ່ງການຫຼຸດຜ່ອນຄວາມສ່ຽງ ຈາກສິ່ງເສດເຫຼືອຈາກສົງຄາມ

ແຕ່ລະໄລຍະ ແລະ ການກໍ່ສ້າງແມ່ນຕ້ອງດໍາເນີນການ ໂດຍຫຼີກລ້ຽງການເກີດຄວາມເສຍຫາຍໃຫ້ໄດ້ຫຼາຍທີ່ສຸດ. ບໍລິສັດ ມິວເຊີດສ໌ ເຂົ້າໃຈດີ ວ່າການແກ້ໄຂແບບ "ແກ້ໄຂໜຶ່ງ ເພື່ອນໍາໃຊ້ທັງໝົດ" ແມ່ນບໍ່ມີປະສິດທິພາບສໍາລັບບາງໂຄງການຂອງລູກຄ້າ. ເຮັດໃຫ້ທາງ ບໍລິສັດເຮົາໄດ້ນໍາໃຊ້ເຄື່ອງມືອື່ນສະໜອງໃຫ້ແກ່ລູກຄ້າຕາມຄວາມຕ້ອງການ ແລະ ສະເພາະບາງໂຄງການ.

**ກໍລະນີສຶກສາ**

ເຊັ່ນດຽວກັບປີ 2020, ພວກເຮົາເຊື່ອວ່າໃນປີ 2021 ຜູ້ທີ່ໄດ້ຮັບຜົນປະໂຫຍດສູງສຸດຂອງພວກເຮົາຍັງຄົງແມ່ນພະນັກງານຂອງພວກເຮົາເອງ. ໂຄງການຄຸ້ມຄອງກ່ຽວກັບໂຄວິດ-19 ແມ່ນວາງອອກເພື່ອການດໍາລົງຊີວິດຂອງພະນັກງານເຮົາ ໂດຍໃຊ້ຄໍາຂວັນທີ່ວ່າ: ສະຫວັດດີການຂອງພະນັກງານຕ້ອງມາກ່ອນ. ໂຄງການນີ້ຈະບໍ່ສໍາເລັດຖ້າບໍ່ມີການສະໜັບສະໜູນ ຈາກບໍລິສັດແມ່.



**ວຽກງານຈຸດສຸມໃນປີ 2021**

ບໍລິສັດ ມິວເຊີດສ໌ ແມ່ນມີປະສົບການຫຼາຍກວ່າ 30 ປີ ໃນ 22 ປະເທດ ເຊິ່ງເປັນຜູ້ໃຫ້ບໍລິການສາກົນໃນການແກ້ໄຂພື້ນທີ່ດິນທັງທາງບົກ ແລະ ທາງທະເລ ທີ່ໄດ້ຮັບການປົນເປື້ອນໂດຍ ສິ່ງເສດເຫຼືອຈາກສົງຄາມ. ບໍລິສັດ ໄດ້ນໍາໃຊ້ການວິທີການແກ້ໄຂທີ່ສ້າງສັນ ແລະ ນະວັດຕະກໍາໃໝ່ ໃຫ້ກັບທັງພາກລັດ ແລະ ເອກະຊົນໃນທົ່ວໂລກ. ຕະຫຼາດຂອງພວກເຮົາແມ່ນມາຈາກປະຊາກອນໂລກທີ່ເພີ່ມຂຶ້ນ ພ້ອມກັບຄວາມຕ້ອງການນໍາໃຊ້ດິນທີ່ເພີ່ມຂຶ້ນ, ການນໍາໃຊ້ພະລັງງານທີ່ມີຄາບອນຕໍ່າ ແລະ ການເພີ່ມກໍາລັງເພີ່ມທະວີການຄ້າທົ່ວໂລກ.

ໃນປີ 2021 ບໍລິສັດ ມິວເຊີດສ໌ຈະດໍາເນີນການ:

- ສືບຕໍ່ຄົ້ນຄ້ວາຊອກແຫຼ່ງລາຍຮັບເພີ່ມເຕີມ
- ສືບຕໍ່ປັບປຸງຄຸນນະພາບຂອງວຽກງານ
- ສືບຕໍ່ສະໜັບສະໜູນ ຄຊກລ ແລະ ລັດຖະບານລາວ
- ສືບຕໍ່ຄົ້ນຄ້ວາເທັກໂນໂລຊີ ແລະ ວິທີການໃໝ່ໆ
- ສືບຕໍ່ສ້າງຂີດຄວາມສາມາດໃຫ້ພະນັກງານຄົນລາວ
- ສືບຕໍ່ປັບປຸງລະບົບຮັກສາສຸຂະພາບ, ສະຫວັດດີການ ໃຫ້ພະນັກງານຄົນລາວ ແລະ ຊຸມຊົນຕ່າງໆ ທີ່ພວກເຮົາໄດ້ລົງເຄື່ອນໄຫວວຽກ ໃຫ້ມີຄວາມປອດໄພ.

**ລູກຄ້າ/ຄູ່ຮ່ວມງານ**

- ບໍລິສັດ ພູເບ້ຍ ຂຸດຄົ້ນບໍ່ແຮ່ (ການຂຸດຄົ້ນ)
- ບໍລິສັດ ສໍາຫຼວດ ຣີໂອ ທິນໂຕ (ການຂຸດຄົ້ນ)
- ບໍລິສັດ ເຂື່ອນໄຟຟ້ານໍ້າເທີນ 2 (ພະລັງງານ)
- ບໍລິສັດ ອິມເພັກ ເອເລັກຕຣອນ ເອເຊຍ (ພະລັງງານ)
- ບໍລິສັດ DPAA/S2S (ໂຄງການຂອງກະຊວງປ້ອງກັນປະເທດ ສ. ອາເມລິກາ)
- ບໍລິສັດ ບົວລະພາ ກະສິກໍາ

**ພື້ນທີ່ປະຕິບັດງານໃນປີ 2021**

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການທຳລາຍ ລບຕ ເຄື່ອນທີ່ | ແຂວງ ຄຳມ່ວນ ແລະ ຫົວພັນ |
| ການກວດກູ້ ລບຕ | ແຂວງ ຊຽງຂວາງ, ໄຊສົມບູນ ແລະ ເຊກອງ |

**ການເງິນໃນປີ 2021**

**ລາຍລະອຽດລາຍຈ່າຍ ໃນປີ 2021 (ໂດລາ ສຫລ)**

| ລາຍການ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 566,000 |
| ຄ່າສຳຫຼວດ ແລະ ກວດກູ້ ລບຕ | 362,000 |
| ຄ່າວັດຖຸອຸປະກອນ | 51,000 |
| ຄ່າໃຊ້ຈ່າຍທາງອ້ອມ | 354,000 |
| **ລວມ** | **1,333,000** |

**ການມີສ່ວນຮ່ວມຂອງລູກຄ້າໃນປີ 2021 (ໂດລາ ສຫລ)**

| ລູກຄ້າ | ຈຳນວນ |
|---|---:|
| ລາຍໄດ້ທີ່ມາຈາກການໂຄສະນາ | 1,205,454 |
| **ລວມ** | **1,205,454** |



## ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ບ້ານ ທົ່ງສ້າງນາງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
P.O. Box 7621
ເວັບໄຊ: www.nra.gov.la
ໂທ: +85621 262386